# ລືມ...ສັນຍາ



ດວງຈຳປາ ❀ ປາໄນ
ບໍ. ຈຸລມຸນຕຣີ ❀ ຣະພິນຣ໌
ອິນທິຣາ ❀ ທົ້ງ ອຸບມຸງ
ໄຜ ບາຄຳ ❀ ກ່າແກ້ວ ເອດເມດ
ແສງ ພູຜາເງິນ ❀ ດອກເກດ

# ລົມ... ສັນຍາ

■ ດວງຈຳປາ ■ ປາໄມ

■ ປ. ຈຸລມຸນຕຣີ ■ ຣະພິນທຣ໌

■ ອິນທິຣາ ■ ທົ່ງອູບມູງ

■ ໄຜ່ ນາຄຳ ■ ກ່ຳແກ້ວ ເອດເມດ

■ ແລງ ພູຜາເງິນ ແລະ ■ ດອກເກດ

# ຄຳອຸທິດ

ຖ້າວ່າຄວາມສາມັກຄີ ຈະເປັນຄຸນທັມທີ່ສາມາດ ພາເອົາສັງຄົມມະນຸດກ້າວຍ່າງ ໄປສູ່ຄວາມຮຸ່ງເຮືອງອັນຖາວອນ ພວກເຮົາທຸກຄົນທີ່ໄດ້ໂຮມແຮງກັນຂຽນເຣື່ອງມາລົງໃນປຶ້ມນີ້ ກໍຂໍຮັກແລະເຊີດຊູບູຊາຄຸນທັມແຫ່ງສາມັກຄີນັ້ນດ້ວຍນ້ຳໃສໃຈຈິງ ແລະກໍແມ່ນຍ້ອນຄວາມສາມັກຄີ ປຶ້ມນ້ອຍເຫລັ້ມນີ້ຈຶ່ງມີໂອກາດເປັນຮູບເຫລັ້ມຂຶ້ນມາໄດ້ ເພື່ອປະດັບອຸທິຍານອັກສອນຂອງເຮົາ ໃຫ້ຫອມຫວນຕລອດການ.

# ໄຜ່ໜາມ ສັງຄົມວິຈານ

## ສະບັບພິເສດ

ມະຫາສິລາ ວີຣະວົງສ໌ – ເຈົ້າຂອງ
ນາງດາຣາ ກັລຍາ – ບັນນາທິການ–ຜູ້ຈັດການ

ສງວນລິຂສິດ
ພິມເທື່ອທີ່ນຶ່ງ
ຕຸລາ 1973

# ສາຣະບານ


| ເຣື່ອງ | ໂດຍ | ໜ້າ |
|---|---|---|
| ຕາມທັມມຽມ | ● ດາຣາ ກັລຍາ | 13 |
| ພໍ່ຍັງບໍ່ຕາຍ | ● ດວງຈຳປາ | 25 |
| ຂອບໃຈ | ● ປາໄນ | 35 |
| ຄຳເຕືອນຂອງພໍ່ | ● ປ. ຈຸລມຸນຕຣີ | 46 |
| ສົມໃຈ | ● ອິນທິຣາ | 60 |
| ຈົນກວ່າ....ຄວາມຕາຍ | ● ທິ່ງ ອູບມຸງ | 68 |
| ບຸນແທນບາບ | ● ໄພ່ ມາຄຳ | 76 |
| ລຸງສົມມັກຍ້ອງ | ● ກ່ຳແກ້ວ ເອດເມດ | 86 |
| ຍິ້ມສີເຫລືອງ | ● ແລງ ພູຜາເງິນ | 98 |
| ໃຜຊິຮ້ອງໄຫ້ເພື່ອຂ້ອຍ ? | ● ຣະພິນທຣ໌ | 107 |
| ບໍ່ເຊື່ອ | ● ດອກເກດ | 120 |
| ໃຜນໍ້ລືມສັນຍາ ? | ● ແລງ ພູຜາເງິນ | 138 |

# ຕາມທັມນຽມ...

ຄືດວ່າຈຳເປັ່ນ ແລະເຫັນເປັ່ນຄວາມຈຳເປັ່ນ ທີ່ຜູ່ຈັດພິມຈະຕ້ອງກ່າວຂໍ້ຄວາມອັນຄວນກ່າວຕໍ່ຜູ່ອ່ານ ຜູ່ອຸປກາຣະດຸນໄວ້ໃນພ້າກ່ອນຮອດເນື້ອຮອດແກ່ນຂອງປຶ້ມເຫລັ້ມນີ້ (ແລະທຸກ ໆ ເຫລັ້ມ) ຕາມທັມນຽມ ເພາະທັມນຽມຂອງການຈັດພິມປຶ້ມ ຊຶ່ງໃຜບໍ່ຮູ້ເປັ່ນຜູ່ແຣກກໍ່ ໄດ້ພາເຮັດມາແນວນີ້ ຈົນກາຍເປັ່ນສາກົລນິຍົມ

ໄດ້ຕັ້ງຊື່ໂຮມເຣື່ອງສັ້ນ ຂອງ "ໄຜ່ໜາມ" ສະບັບພິເສດຊຸດນີ້ວ່າ *"ລືມ.... ສັນຍາ"*

ຢາກຊີ້ແຈງຖແລງໄຂຕື່ມວ່າ: ຄຳວ່າ "ລືມ....ສັນຍາ" ທີ່ເປັນຊື່ໂຮມເຣື່ອງສັ້ນທີ່ຢູ່ໃນມືຜູ້ອ່ານດຽວນີ້ ມີຄວາມໝາຍ ອ້ອມຢາກເລິກແລະຕື້ນຢູ່ແດ່ ຫລືວ່າ ເປັນຂາດ ໆ ເຂີນ ໆ ວາດໃດອາດນຶ່ງກໍໄດ້ ກໍໝາຍຄວາມຕາມໃຈມັກຂອງຄນະຜູ້ຈັດພິມວ່າ *"ລືມໄປ ....ບໍ່ໄດ້ຕັ້ງຄວາມຫມັ້ນສັນຍາ ເອົາໄວ້ໃຫ້ເປັນອັນຄັກແນ່"*

ຈະແມ່ນໃຜກໍ່ຊ່າງເທາະ ຫາກລືມສັນຍາໄວ້ກ່ອນ ພາຍລຸນມາແລ້ວຈະໄປຕິຕຽນວ່າກ່າວຜູ້ອື່ນ ທີ່ມີຄວາມກ່ຽວຂ້ອງຜູກພັນກັນໃນທາງຄວາມຄິດ ຫລືທາງອື່ນ ໆ ກໍ່ຍ່ອມບໍ່ໄດ້ ແລະເຖິງ

ໄດ້ກໍ່ບໍ່ດີ ຖ້າຫາກວ່າ ກໍຣະນີການແນວ ໃດແນວນຶ່ງ ຈະເກີດມີເຫດເປັ່ນໄປໃນ ທາງບໍ່ສົມຄວາມມຸ່ງມາດປາຖນາ

ໃນການພິມ ໂຮມເຣື່ອງສັ້ນ ທີ່ແລ້ວ ໆ ມາ ເຮົາ "ໄຜ່ໜາມ" ໄດ້ ໃຫ້ຄຳໝັ້ນສັນຍາໄວ້ກັບຜູ່ອ່ານທຸກ ໆ ເທື່ອວ່າ ຈະຈັດພິມເຫລັ້ມຕໍ່ ໆ ໄປຂຶ້ນ ມາ ແລ້ວເຮົາກໍພຽນພະຍາຍາມເຮັດ ນຳຄວາມສັນຍານັ້ນ ທໍ່ທີ່ກຳລັງຊັບແລະ ກຳລັງກາຍສິ່ງຢູ້ໃຫ້ເຮັດໄດ້

ແຕ່ຄນະຜູ່ຂຽນ ບໍ່ເຄີຍໄດ້ ຕັ້ງສັນຍາກັນວ່າ ໃຜຈະຂຽນເຣື່ອງໃດ ເພື່ອປົນໂຮມເຣື່ອງສັ້ນ ທີ່ຈະຈັດພິມ ຂຶ້ນ ແຕ່ຍັງບໍ່ມີຊື່

*ພວກເຮົາລືມສັນຍາ ກັນໄວ້ກ່ອນ*

ແລະ ຈົນຮອດນີ້ໂຮມເຣື່ອງ

ກໍຈຶ່ງຮູ້ວ່າ ໃຜຂຽນຫຍັງ

ການທີ່ພວກເຮົາລືມສັນຍາກັນໄວ້ ເປັນເຫດໃຫ້ການຈັດພິມລ້າຊ້າ ຈົນເກືອບບໍ່ທັນກຳໜົດເວລາທີ່ແນໃສ່

ມັນໝາຍຄວາມວ່າ ທັນພໍດີ

ເຮົາເຊື່ອວ່າ ເຖິງທ່ານຜູ້ອ່ານຈະເຄີຍ ແລະບໍ່ເຄີຍສັນຍາວ່າຈະເຜີຍແຜ່ ອຸ້ມຊູວົງການຂຽນຂອງລາວແທ້ໆ ກໍຕາມ ແຕ່ກໍເຊື່ອວ່າ ຈະຕ້ອງໄດ້ຮັບຄວາມເອື້ອເຟື້ອເຜີຍແຜ່ທີ່ຫວັງ ເປັນອັນດີ

ມັນເປັນໜ້າທີ່ຂອງເຮົາ ທີ່ຈະຕ້ອງສ້າງຜົນວຽກຂຶ້ນມາໃຫ້ຫລາຍໆ ເພື່ອສນອງຕອບສັດທາ ຂອງປະຊາຊົນຄົນອ່ານ ທີ່ໃຫ້ກຽດຍົກຍ້ອງພວກເຮົາຂຶ້ນເປັນນັກຂຽນ ຊຶ່ງຍັງບໍ່ທັນມີຫລາຍຄົນຈົນພຽງພໍໃນແຜ່ນດິນລາວທີ່ຕເລີດ

ເປີດໜີຈາກໂລກອັນມະກັນໄປເຫິງນານ
ດັ້ງດຽວກັນກັບ ມັນເປັ້ນພາຣະຂອງຜູ່
ອ່ານ ທີ່ຕ້ອງຢິບຍື່ນຄວາມເອື້ອເຟື້ອ
ເພື່ອແຜ່ໃຫ້ພວກເຮົາ ດ້ວຍສຳນຶກໃນ
ສິດແລະໜ້າທີ່ຂອງຄົນລາວ ຜູ່ຮັກຊາດ
ແລະພາສາ *(ໂດຍບໍ່ຈຳເປັ້ນຕ້ອງ
ເປັ້ນສະມາຊິກ ຂອງພັກແນວ
ລາວຮັກ (ຊັງ) ຊາດ)*

*ລືມ...ສັນຍາ* ເປັ້ນເຫລັ້ມ
ຂຶ້ນມາແລ້ວ ຈາກຄວາມອົດສາພາກ
ພຽນ ຂອງໝູ່ນັກຂຽນທີ່ມີໃຈຮັກພາສາ
ລາວຢ່າງລ້ຳເລີດ ຊຶ່ງເຮົາຢາກຂໍຖືໂອ-
ກາດສະແດງຄວາມຮູ້ສຶກຂອບອົກຂອບ
ໃຈໄວ້ໃນທີ່ນີ້ ເປັ້ນກໍຣະນີພິເສດກໍມີຄື

★ *ປ. ຈຸລມຸນຕຣີ* ຜູ່ທີ່ອຸທິດເລືອດ
ທຸກຢົດ ເຫື່ອທຸກຢາດ ເພື່ອຮັບໃຊ້

ອຸດົມການຂອງນັກຂຽນນັກຂ່າວຕລອດ
ມາ ແລະ ຈະຕລອດໄປ

★ *ຣະພິນທຣ໌* ກະເສດຣກອນໜຸ່ມ
ນ້ອຍ ຜູ່ກຳລັງໂດ່ງດັງຕ່າວສວັນນະເຂດ
ແດນກຳເນີດ ເພື່ອເບັ່ນແຮງນ້ອຍ ໆ
ແຮງນຶ່ງ ໃນການສົ່ງເສີມພັທນາເສຖ-
ກິດສັງຄົມຂອງຊາດ ຕາມສັທທາທັມ
ທີ່ຕັ້ງໄວ້

★ *ກຳແກ້ວ ເອດເມດ* ຜູ່ໄດ້ຂ້າມ
ຜ່ານຮົ້ວ ມັທຍົມສຶກສາສາຍສາມັນ
ອອກມາຢ່າງຍາກລຳບາກ ເພື່ອສແວງ
ອະນາຄົດ ໃນສະຖາບັນສຶກສາວິຊາກົດ
ໝາຍແລະການປົກຄອງ ແລະຝາກເງົາ
ຊີວິດສ່ວນນຶ່ງໄວ້ນຳໂລກໜັງສືພິມຢ່າງ
ສງ່າຜ່າເຜີຍ

★ *ໃຜ່ ມາລຳ* ບ່າວວິທຍາລັຍກະເສດ ດົງສະພັງເມິກ ຜູ່ຮັກກິລາເຕະບານ ຫລາຍ ທີ່ ໆ ກັບການຮັກຄວາມງາມ ຂອງອິຖີນາຣີ ແຕ່ຍັງບໍ່ເຄີຍຫລົງຄິດ ມັກສາວໃດທີ່ການເຕະບານ ແລະກຳລັງປີນຂັ້ນໄດວິມານອັກສອນ ຂັ້ນມາຍ່າງເມື່ອຍລ້າ ອິດອ່ອນ ແກມອາຍ

★ *ທົ່ງ ອູບມຸງ* ຜູ່ກຳລັງຂົນຂວາຍຊອກຄົ້ນເອົາວິຊາຄວາມຮູ້ ດ້ານເຕັກນິກແຜນໃໝ່ໃນຕ່າງປະເທດ ແລະໄດ້ບ່ອນໜ້າເຂົ້າມາສອດແນມ ເບິ່ງວົງການຂີດຂຽນ ດ້ວຍຄວາມຮູ້ສຶກເບັ້ນທ່ວງອັນຮ້ອນແຮງ

★ *ດອກເກດ* ຜູ່ມີຍົມຍິນດີນ່າການອ່ານ ແລະອ່ານຈົນຮູ້ສຶກວ່າ ໜັງສືລາວບໍ່ມີພຽງພໍ (ຖ້າຈະຄອງໃຫ້ຕັ້ງແຕ່

ຣາຊບັນດິຕສະພາກັບຫໍສມຸດແຫ່ງຊາດ ຈັດພິມຂຶ້ນຕາມວາດ) ສໍາລັບນັກອ່ານ ແລ້ວກໍເລີຍຕັດສິນໃຈລົງມື ຂຽນ.... ຂຽນ.... ຂຽນ.... ແລະຂຽນ ຈົນໄດ້ຮັບຄວາມເຊື່ອຖືນັບສົນຄວນ

★ *ອິນທິຣາ* ຜູ້ທີ່ດົນ ໆ ຈຶ່ງຂຽນອອກມາເທື່ອນຶ່ງ ຈົນເກືອບລືມນາມປາກກາຂອງຕົນເອງ ແລະຈົນຜູ້ອ່ານກໍເກືອບລືມຊື່ຜູ້ຂຽນ ແຕ່ກໍບໍ່ເຄີຍຄິດທີ່ຈະລືມໄລອຸດົມການ ອັນໄດ້ປັ່ງໃຈເລືອກແລ້ວຢ່າງບໍ່ລັງເລ

★ *ແລງ ພູຜາເງິນ* ເຄີຍຢາກບໍ່ຽມນາມສະກຸນເບື້ນ ພູຜາຂ້ກົວ ເພາະຄວາມຈິງນັ້ນ ເງິນບໍ່ເຄີຍຮັກເຂົາ ແຕ່ຢ່າງໃດກໍຕາມ ເຣື່ອງການຂຽນໜັງສື

ປະດັບສອນອັກສອ ແຫ່ງແດນລ້ານ
ຊ້າງ ຍັງເປັ່ນອຸດົມຄະຕິທີ່ຝັ່ງຫົວເຂົາ
ບໍ່ລືມລົງງ່າຍ

★ *ປາໄນ* ຜູ້ຫມໃຈເປັ່ນກອນ ເມື່ອ
ຂຽນເປັ່ນຕົວອັກສອນ ກໍ່ເຮັດໃຫ້ສັງ
ຄົມອັນເນົ່າເປື່ອຍສະເທືອນ ເພາະຄຳ
ກອນຂອງເຂົາ ປຽບຄືໄມ້ຄ້ອນເຄາະ
ຫົວຂອງຜູ້ກິນປູນຮ້ອນທ້ອງທັງຫລາຍ

★ *ດວງຈຳປາ* ຜູ້ທີ່ມີຄວາມພໍໃຈແລະ
ພູມໃຈ ນຳຜົນວຽກຂອງຕົນເອງແລະຜູ້
ອື່ນ ເມື່ອໄດ້ຊ່ອຍແປງບັ້ນສ້າງສັນ
ອານາຈັກພົງສີລາວ ໃຫ້ພາກົດແສງ
ມຽງ ໆ ເພື່ອຈະກໍ່ເກີດເປັ່ນແສງຮຸ່ງ
ເຮືອງໃນພາຍຟ້າ ຫາກມັນຈະເປັ່ນໄປ

ຢາກຝາກຄວາມຂອບໃຈ ໄວ້
ເຖິງທຸກຄົນແລະທຸກສິ່ງອັນ ທີ່ມີສ່ວນ
ເປັນແຮງດົນໃຈ ໂດຍທາງກົງແລະ
ທາງອ້ອມ ໃຫ້ເລື່ອງຕ່າງ ໆ ໃນເຫລັ້ມ
ນີ້ ເກີດເປັນບົດຂຽນຂຶ້ນ ຈົນພາກົດ
ຢູ່ໃນ *"ລືມ.... ສັນຍາ"*

*ດາຣາ ກັລຍາ*

**ສຳນັກງານ ໄຜ່ໜາມ**

**123 ຄຸ້ມອູບມຸງ**

ຖນົນຫລວງພຣະບາງ ວຽງຈັນ

ຕຸລາ **1973**

## ເຫດເກີດທາງໂທຣະສັບ

ທ່ານນາຍພົນຄົນສຳຄັນຄິດຢາກຕໍ່ໂທຣະສັບ ສັ່ງການດ່ວນ ແຕ່ບັງເອີນບໍ່ຈື່ໝາຍເລກໂທຣະສັບທີ່ຕ້ອງການເລີຍຕໍ່ສາຍໄປສູນກາງກອງບັນຊາການເພື່ອສໍຖາມ ແລ້ວກໍ່ມີສຽງຕອບມານຳສາຍວ່າ

— ໄດ້ແລ້ວ ບັກແຮດເອີຍ ຢ່າເວົ້າຍາວຫລາຍ ກູຈິຕໍ່ໃຫ້ດອກ !!

ທ່ານນາຍພົນໂມໂຫ ຈົນຮ້ອນກົກຫູອາບ-ໜ້າແດງ ມືກຳຫູຟັງຈົນເອັນພົງ ຮ້ອງສາຍໄປວ່າ

— ມຶງສັງມາເວົ້າໃຫຍ່ແທ້....! ມຶງຮູ້ບໍ່ວ່າມຶງພວມປາກກັບໃຜຢູ່ດຽວນີ້....? ກູຂັ້ນນາຍພົນໃດ່ຈິບອກໃຫ້....!

— ນາຍພົນຫວໍ່າ....? ຢາກຫົວເນາະ....! ກູແມ່ນໃຜຈັ້ນມຶງຮູ້ບໍ່....?

— ມຶງແມ່ນໃຜ....?

— ບໍ່ຮູ້ແລ້ວກະແລ້ວລະ....! ຈິເປັນຫຍັງ....!!!

"ວຽນທຽນ"

■ ແດ່ອ້າຍ ຜູ່ຫມົດແລ້ວຈຶ່ງໂອກາດ
ຈະສ້າງຄຸນຄວາມດີຕໍ່ເພື່ອນມະນຸດ



● ດວງຈຳປາ ●

# ພໍ່ຍັງບໍ່ຕາຍ

ແສງແດດອັນແຮງກ້າ ໄດ້ຫຸເລົາເບົາບາງລົງຕາມລຳດັບ ເມື່ອດວງອາທິດໂງໂງ້ງຕ່າວດິນສູ່ຂອບຟ້າຕາມຄວາມເຊື່ອຂອງເດັກນ້ອຍ...

"ຕາເວັນຈິຕົກແລ້ວ" ຍິງວັຍກາງຄົນຮ່ຳເພິງນຳເຕົນເອງ ນາງກໍ່ຄົງຈະເຊື່ອຖືແບບດຽວກັນກັບເດັກນ້ອຍ ທີ່ຍັງອ່ອນການສຶກສາວ່າຕາເວັນນັ້ນຂຶ້ນຍາມມື້ເຊົ້າ ທ່ອງທ່ຽວໄຄຈອນຢູ່ຫມົດມື້ແລ້ວກໍອ່ວຍກັບ ເມືອນອນຮັງໃນຍາມຄ່ຳ ແຕ່ຄວາມຄິດເຣື່ອງຕາເວັນຂອງນາງບໍ່ແມ່ນ

ຈະໂຍງໃສ່ແຕ່ເວລາແລະອາກາດທີ່ນັ້ນ... ແມ່ນແລ້ວ ນາງຄຶດຫາລູກຊາຍ "ອ້າຍກ້ອນຄຳ ຂອງແມ່" ຈຶ່ງຕັ້ງຕົ້ນມືເຮັດການມື້ນີ້ເອງ

"ບາດເຮົາໄດ້ເງິນເດືອນ ເຮົາຊິຕໍ່ເຊັຽທາງໜ້າອອກເປັນຮ້ານນ້ອຍ ໃຫ້ເຈົ້ານັ່ງຂາຍຂອງຢູ່ເຮືອນ ບໍ່ຕ້ອງຫາບຄອນໄປອາສັຍຮົ່ມໄມ້ຣຖບານຢູ່ຄຸ້ມອື່ນ ນໍ້ແມ່ ? ເຮືອນເຮົາກະຢູ່ແຄມທາງປານນີ້ ໃຜໄປໃຜມາກໍ່ຄົງຢາກແວ່" ກ້ອນຄຳ ເຄີຍອວດອ້າງໄວ້ກັບແມ່ຢ່າງນີ້ ລູກຫາກຊ່າງຄິດຊ່າງຜັນແຕ່ນ້ອຍເທົ່າໃຫຍ່ ແຕ່ພໍ່ຕາຍຈາກໄປ ແມ່ລູກບໍ່ເຄີຍໄກຂ້າງກັນ ແມ່ອົດທຸກອົດຍາກທຸກຢ່າງ ແມ່ຫາບຂອງໄປຂາຍ ມີຕຳໝາກຫຸ່ງ ກ້ວຍ ອ້ອຍ ແນວກິນກາງເວັນ ນັ່ງຍົວະເອົາເງິນບ້ານໄກ້ເຮືອນຄຽງ ລູກ ໆ ຫລານ ໆ ບໍ່ໄດ້ລ້ຽງປາກກຸມແລະເປັນຄ່າຮ່ຳຮຽນ ຊື້ປຶ້ມຊື້ສໍ ໃຫ້ກ້ອນຄຳ.... ຈົນກ້ອນຄຳ ບັດນີ້ ສຳເຣັດມັທຍົມຕົ້ນ ດີໂປລມ ຄືເພິ່ນວ່າ...

"ເຮົາໄດ້ການແລ້ວແມ່" ກ້ອນຄຳບອກນາງຫວ່າງສອງມື້ກ່ອນ "ໝູ່ເຮົາຝາກນຳພໍ່ໝໍ ເປັນນາຍໃຫຍ່ຢູ່ຝ່າຍນັ້ນ *ເພິ່ນຈິໃຫ້ເງິນເດືອນເຮົາເຕັ້ງ ໑໕ ພັນ ນະແມ່*

ພໍລືກບໍ່ ແມ່ ພູ່ເຮົາເຂົ້າບ່ອນອື່ນ *ນຳຣັຖບານໄດ້ແຕ່ ໑໔ ພັນທໍ່ນັ້ນໃດ໋* ອັນນີ້ເຂົ້າງ່າຍ ໆ ຈ້າ ບໍ່ໄດ້ແລ່ນເຮັດພັງສີຍາກຫລາຍແນວດີກະຊວງອື່ນ ໆ ເພີ່ມຂຽນພັງສືນ້ອຍ ໆ ໃຫ້ເຮົາໄປຫາລູກນ້ອງເພີ່ນ ແລ້ວກໍບອກວ່າ.... ອັນຈັນໃຫ້ມາເຮັດການ"

ກ້ອນຄຳຫັງເລົ່າຫັງຫົວ ໜ້າຕາທ່າທາງສະແດງວ່າຕື່ນເຕັ້ນ ອິ່ມໃຈ ສຸກໃຈສາຣະພັດຢ່າງກອງກັນເຂົ້າມາໃນສີໜ້າແລະສາຍຕາ

ແມ່ແຍງລູກຊາຍພອມນັ້ນ ດ້ວຍຄວາມປິຕິຍິນດີຍິນດີທີ່ລູກຈະເປັນຫລັກຖານໝັ້ນຄົງ ເງິນເດືອນ ໑໖ ພັນແມ່ນອນ ມັນໝາຍເຖິງການຢູ່ກິນຢ່າງພໍດີ ສຳລັບແມ່ລູກຜູ້ເຄີຍອົດຢອມມາແລ້ວເກືອບຕລອດຊີວິດ.... ແມ່ນແລ້ວ ນາງວ່າເກືອບຕລອດຊີວິດ ເພາະຢ່າງນ້ອຍໃນຕອນຕົ້ນ ໆ ຊີວິດຂອງນາງແລະລູກກໍບໍ່ໄດ້ຕົກຕ່ຳຈົນປານນີ້ ຢ່າງນ້ອຍກໍຍັງມີພໍ່ຂອງລູກຊຶ່ງແມ່ນວ່າຈະ *ເປັນທະຫານ ກໍຍັງພໍມີຍົດຈຸ້ນພໍໄດ້ເງິນດ້ານເງິນເດືອນກຸ້ມກັນ*

ນາງຮັບວ່າກຸ້ມ ເພາະສມັຍສິບປາຍປີມາແລ້ວ

ເງິນເດືອນທະຫານຂັ້ນຮ້ອຍຕຣີຄືພໍ່ເຂົາ ກໍຍັງພໍໃຫ້ເມັຽໄດ້ໄວ້ຊື້ເຂົ້າກຸ້ມເດືອນ ຊື້ສິ້ງເສື້ອລູກແລະແມ່ (ພໍ່ນຸ່ງເຄື່ອງທະຫານຢູ່ແລ້ວ) ແລະ ຍັງພໍໄດ້ຮອດຣົຖຖີບດີ ໆ ຂີ່ພາຍໃນຄອບຄົວ ແຮ່ງຕອນພໍ່ເຂົາໄປຢູ່ແນວໜ້າ (ນາງຍໍມືຂໍ່ຂະມາ ບ່ແມ່ນຢາກວ່າ ໃຫ້ໃຜ ໆ ໄດ້ໄປຢູ່ແນວໜ້າຈຶ່ງດີ ບ່ແມ່ນ) ຕອນພໍ່ເຂົາໄປຢູ່ແນວໜ້າ ໃຫ້ວ່າເງິນເດືອນທັງໝົດນາງໄດ້ເບີກໃຊ້ກັບລູກຈົນຢາກວ່າເຫລືອໃຊ້.... ຍາມຜົວບ່ຢູ່ນັ້ນ ເພດສົ້ນເສື້ອຫລີກໍບ່ຈຳເປັນແຕ່ງ ເງິນເຫລືອເດືອນເລັກເດືອນໜ້ອຍ ຈົນໄດ້ຄຳຂາດນຶ່ງໄວ້...ເປັ່ນຂອນຫູຂອນຕາ ເປັ່ນຂອນເຮືອນ... ພາໃຫ້ອຸ່ນໃຈຍາມຜົວບ່ຢູ່ ຍາມທຸກຍາກລຳບາກ ພໍໄດ້ການຕໍ່ວ່າ ຖ້າແມ່ນເປັ່ນຈັ່ງໃດມາກໍແມ່ນຄຳຂາດນີ້ລ່ະ ຈະຊ່ອຍແກ້ໄຂໄດ້ຊຶ່ງມັນກໍແກ້ໄດ້ແທ້ ຄິດມາແລ້ວ ນາງເຫລືອອົກເຫລືອໃຈບໍ່ແລ້ວ ທີ່ຂອນເຮືອນຕ່ອນນັ້ນຕ້ອງມາກາຍ *ເປັ່ນສິນບາດສິນບົນການແລ່ນເຕັ້ນ ດຶງ ທິ້ມ ເອົາເງິນຄ່າຫົວພໍ່ເຂົາ* ຣື ! ຄ່າຫົວ ພໍ່ງເພິ່ນຕັ້ງຊິໄວ້ນັ້ນເທາະ.... ເອົ້າພໍປານວ່າ ເງິນກ້ອນທີ່ເພິ່ນໃຫ້ມາປາງນັ້ນ ມັນກຸ້ມມັນສົມກັບການຕາຍຈາກພັດພາກຂອງພໍ່ເຂົາ ຊຶ່ງມີຍົດເຖິງຮ້ອຍຕຣີ...

*ຄ່າຫົວຂອງຄົນມີທີ່ມັນແທ້ບໍ* ນາງຍັງສົງສັຍ ພໍ່ເຂົາ ຕາຍກໍໄດ້ທີ່ມັ້ນ ທີ່ເກົ້າສິບພັນກີບນັ້ນແຫລະ ແຕ່ກ່ອນຈະໄດ້ ເຈົ້າເຮືອນເອີຍ ມີໃຜຮູ້ນຳບໍ່ວ່າ ຄ່າບາດນັ້ນຂອງນາງມັນຕ້ອງ ຖືກແລກເປັນເງິນໄປ *ຈຶ່ງຈ້າງຮາງວັນ* ບັນດາພໍ່ຊື່ແມ່ຊັກ ທີ່ອ້າງວ່າຈະຊ່ອຍນຳທວງພົງສີເປັນຫ້າເປັນສິບສະບັບ ສຳລັບ ປະກອບເອກສານຮ້ອງຂໍເງິນປກັບຄ່າຫົວພໍ່ເຂົາ.... ມີໃຜຮູ້ວ່າ ຕອນຂາຍຄ່າບາດນັ້ນ ເບິ່ງເຮື່ອງຫຍັງ ໆ ກໍຍັງຫຍຸ້ງ ມືດມົວ ຍາກຊາ ຈົນນາງອິດົກກັງວົນ ບໍ່ແນ່ໃຈເລີຍວ່າຈະໄດ້ເງິນ ຮາງວັນ ເງິນທີ່ແລກກັບຊີວິດຂອງພໍ່ເຂົາ ເງິນທີ່ຈ່າຍພົດ ແລ້ວຫາໃໝ່ກໍຍັງບໍ່ໄດ້ (ຖ້າມີທາງຫາ) *ແຕ່ພໍ່ເຂົາຈະບໍ່ມີ ມື້ຕ່າວຄືນຊີວິດມາ* ເດັດຂາດ ເຖິງແມ່ນວ່າ ນາງຈະມີ ເງິນກ້ອນໃຫຍ່ ຮ້ອຍເທົ່າ ພັນເທົ່າໄປຂໍແລກກໍຕາມ

ແຕ່ຄວາມຈິງກໍຄື *ພໍ່ເຂົາໄປ ຄ່າບາດນຶ່ງໄປ ແລ້ວເງິນເກົ້າສິບພັນກໍມາ*

\+ + +

ເວລາກໍລ່ວງເລີຍມາດົນຈົນນາງບໍ່ເຫລືອຮອຍທຸກ ໂສກຮ່ຳໄຮຢ່າງບ້າບ່ວງນັ້ນອີກແລ້ວລະ.... ດຽວນີ້ນາງສາ

ມາດເຫລົ້າເຖິງການຕາຍ ການພັດພາກກັບພໍ່ເຂົາຢ່າງບໍ່ກະດຽມປາກ ບໍ່ເສັຽນ້ຳຕາ ກາລະເວລາໄດ້ຊ່ອຍບົ່ດເປົ່າຄວາມທຸກໂສກໃຫ້ສູນໄປ ພ້ອມທັງລູກກໍ່ເປັນອະນຸສອນ ເປັນກຳໃຈໃຈອັນດີຍິ່ງຕລອດມາ

ກໍ່ເງິນເກົ້າສິບພັນນັ້ນແລ້ວ ທີ່ນາງໄດ້ປຸກເຮືອນນ້ອຍຫລັງນີ້ຢູ່ກັບລູກ ແລະເຫລືອມາເປັນທຶນຄ້າຂາຍລ້ຽງປາກກຸ້ມ ພາຍຫລັງເຮັດບຸນອຸທິດຫາພໍ່ເຂົາ ຕາມປະເພນີແລະຕາມຄວາມເຊື່ອທີ່ວ່າ ສິ່ງທີ່ທຳທານໄປນັ້ນຈະຮອດເຖິງຜູ່ຜົວຢູ່ໂລກໃໝ່ຂອງເຂົາ

ຕາເວັນຄ້ອຍຄ່ຳ ປານນີ້.... ຂອງກິນນາງກໍແຕ່ງແລ້ວ ຖ້າແຕ່ລູກມາຮອດ ອາບນ້ຳ ແລ້ວກໍຈະຫາໃສ່ພາມາກິນກັນສອງແມ່ລູກ ດັ່ງເຄີຍປະຕິບັດກັນມາເປັນປະຈຳ ນາງຫລຽວທາງ ຫລຽວແລວຫລຽວອີກ.... ຄິດຮອດຄິດຫາ ກ້ອນຄຳຫລາຍກວ່າແຕ່ກ່ອນທີ່ເຂົາຫຽວໄປຮຽນ.... ເພາະນີ້ເປັນມື້ທຳອິດທີ່ກ້ອນຄຳໄປເຂົ້າການ.... ກ້ອນຄຳຈະຕ້ອງມີຫຍັງມາອອດອ້າງລົມສູ່ແມ່ນັ່ງ

ມາແລ້ວ....ກ້ອນຄຳມາພຸ້ນ ຂີ່ຣົດຖີບຄັນເກົ່າທີ່ມີ

ເບັ່ນສົມບັດອັນດຽວໃນເຮືອນ   ແລະ ທີ່ໄດ້ປໂຍດບໍ່ຫລຸດບໍ່ຫລົງ ພໍດ້າມພໍດີກັບຖານະສ່ຳແມ່ລູກນີ້

“ໄດ້ເຮັດວຽກຫລາຍບໍ່ລູກ ?”  ນາງພັ່າວຖາມ ເບິ່ງໜ້າລູກກໍ່ອິດເມື່ອຍພໍດວນ ລູກໄປໝົດມື້ ເຂົ້າເໝນກໍໄປຊ໊ກິນໜ້າ ເພາະທາງໄກຍັ່ານລູກແຮງບໍ່ຖອງທາງຫຽວ.

“ວຽກດີເກີນຄາດແມ່ ໄປຂັ່ບກໍ່ໄດ້ເຮື່ອງດີວິເສດໂລດ”

ກ້ອນຄຳບອກວ່າດີ ແຕ່ສີໜ້າບໍ່ໄດ້ດີໄປນຳປານໃດ

“ເພິ່ນໃຫ້ລູກເຮັດຫຍັງແດ່ ?” ແມ່ຍັງຫ່ວງໃຍ

“ໄດ້ແອບວຽກກຳກັບບັນຊີ ກຳລັງພົລແນວໜ້າ” ລູກຊາຍອອດ

ແມ່ຍິນຄຳວ່າແນວໜ້າກໍ່ມືດໄປ   ອັປຈົນຄຳຖາມຂຶ້ນມາຄາວນຶ່ງ

“ກໍເລີຍໄດ້ຮູ້ –ແມ່ – ວ່າ *ພໍ່ຍັງບໍ່ຕາຍ*”

ນາງເຮັດໜ້າຕື່ນຕໍ່ປໂຍກສຸດທ້າຍຂອງລູກ

“ແມ່ນຫຍັງກັນເກາະ ?”

“ພໍ່ຍັງບໍ່ຕາຍ.... ລູກເອົາຫຍັງມາເວົ້າ ?”

*“ແທ້ ແມ່ຢູ່ໃນບັນຈີກິນເງິນເດືອນ ພໍ່ຍັງບໍ່ຕາຍ ພໍ່ມີຍົດເປັນຮອດຮ້ອຍເອກແລ້ວ*

....ເຮົາເຫັນມາກັບຕາ ແລະກໍ່ມີລາຍເຊັນຂອງພໍ່ ຮັບເອົາເງິນເດືອນໄປກິນຢູ່ທຸກ ໆ ເດືອນ...”

× × ×

ມື້ນີ້ນາງກໍ່ນັ່ງຄອຍລູກອີກ.... ກ້ອນຄຳເວົ້າທັງກັດແຂ້ວວານນີ້ວ່າ ເຂົາຈະຈັດການກັບພວກຄົນລວງໂລກເຫລົ່ານັ້ນໃຫ້ເຫັນດຳເຫັນແດງກັນ ພວກທີ່ເອົາຊື່ພໍ່ມາອ້າງກິນເບັ້ນເວລາຮອດສິບປີມາແລ້ວນັ້ນ.... ກ້ອນຄຳວ່າ *ຈະຂຶ້ນຫາ ນາຍໃຫຍ່ ບອກເພິ່ນສະສາງໃຫ້ຮູ້ໂຕຜູ້ເຮັດຫລັກໂລບນັ້ນໃຫ້ໄດ້*.... ກ້ອນຄຳວ່າ ຄວາມຍຸຕິທັມຈະຕ້ອງຢູ່ຄອງໂລກ ! ພໍ່ຕາຍແລ້ວ ເງິນຄ່າຫົວ ເງິນປີ ແມ່ກໍ່ໄດ້ມາແລ້ວ (ເຖິງຈະໄດ້ຍາກເກືອບຕາຍກໍດີ) ເຣື່ອງຫຍັງຈະປະໃຫ້ເຂົາເອົາຊື່ພໍ່ມາອ້າງກິນຢູ່ສຳບາຍ ໆ...

ມາແລ້ວ ກ້ອນຄຳມາແລ້ວ ... ລູກຄົງຈະໄດ້ຂ່າວມາບອກວ່າ ແມ່ນໃຜທີ່ອາດຫານມາປອມແປງຮາຍເຊັນໂລບເງິນຫລວງໃນຊື່ຂອງພໍ່ເຂົາ.... ລູກຄົງຈະໄດ້ສະສາງຄວາມຊື່

ຮ້າຍຂອງຄົນລ່າງຄົນທີ່ໄດ້ສໍຣາສແລະບັງຫລວງ....

ແສງແດດລຳສຸດທ້າຍ ສາດສ່ອງຕ້ອງໜ້າອັນດຳໝອງຂອງລູກ ກ້ອນຄຳລົງຈາກຣົດຖີບ ມືຍັງກຳເຂົ້າແໜ້ນ

*ນາງເຫັນຫນ້າຕາອັນປ່າສຈາກວິນຍານ ຂອງລູກເງີຍຂຶ້ນ ສາຍຕາທີ່ເລື່ອນລອຍຂອງລູກຜ່ານກັບນາງ... ເຫັນຢາດນ້ຳຕາໃສ ໆ ຫລັ່ງເປົ້າຂອງລູກ... ແລະຣິມສົບທີ່ເບະອອກຫນ້ອຍ ໆ ດັ່ງຕອນຍັງນ້ອຍລູກມາໃຫ້ສໍ່ແມ່ວ່າ ເຂົາຕີ...*

*"ແມ່ເພິ່ນໄລ່ເຮົາອອກການ ເພິ່ນວ່າເຮົາລ່ວງໂພດ"*

*ເອີ້ ຄູ່ວ່າ "ພໍ່ຍັງບໍ່ຕາຍ" ແທ້ຄືເພິ່ນວ່າກໍຍັງແຄນນ້ລູກ ?* ■



■ ປາໄມ ■

● ຂອບໃຈ ສຳລັບບົດຮຽນທີ່ມີຄ່າທ່ກັບຫົວໃຈ
ຊຶ່ງນ້ອງສັ່ງສອນໃຫ້ໂດຍບໍ່ເຈຕນາ....

# ຂອບໃຈ

*ອັນເປັນຍອດດວງໃຈຂອງອ້າຍ*

ອ້າຍຂໍໃຊ້ຄວາມຂົ້ມຕົ້ນທີ່ເຄີຍໃຊ້ ຈົນຄຶດວ່າ ຈຳເປັນອັນຂາດບໍ່ໄດ້ນີ້ ອີກເທື່ອນຶ່ງແລະເທື່ອດຽວນີ້ທໍ່ນັ້ນ.... ອີກເທື່ອດຽວເພາະວ່າ ຕໍ່ໄປອ້າຍຮູ້ວ່າຕົວເອງບໍ່ມີໂອກາດຈະໄດ້ໃຊ້ມັນອີກ ໂດຍສະເພາະແລ້ວກັບນ້ອງຜູ້ທີ່ເປັນຍອດດວງໃຈຂອງອ້າຍ

ເກືອບເດືອນນຶ່ງແລ້ວນໍ ທີ່ເຮົາບໍ່ໄດ້ພົ້ກັນ ແລະ ອ້າຍຄຶດວ່າສອງເຮົາ ອາດຈະບໍ່ມີໂອກາດໄດ້ພົ້ກັນອີກຈັກເທື່ອ

ເລີຍຍ້ອນເຈຕນາຂອງນ້ອງ ທີ່ຢາກໃຫ້ມັນເປັນໄປຈັ່ງຊັ້ນ ....
ເວລາເກືອບເດືອນທີ່ຜ່ານກາຍມາດ້ວຍຄວາມຮູ້ສຶກ ແສນທຸກທໍ
ຣະມານແລະເສົ້າໂສກສຳລັບອ້າຍນັ້ນ ອ້າຍບໍ່ເຄີຍສັງຫອນໃຈ
ມາກ່ອນເລີຍວ່າ ໃນຊີວິດຮັກຂອງສອງເຮົາ ຊຶ່ງເຮົາສອງເຄີຍ
ສະແດງຄວາມຕັ້ງໃຈເປັນຈຸດດຽວກັນໄວ້ວ່າ ຈະບໍ່ໃຫ້ມັນມີ
ບ່ອນສຸດ ຈະໃຫ້ມັນເປັນອະມະຕະຕລອດເຊັ່ນຊີວິດຂອງເຮົາ
ນັ້ນ ຈະມີເວລາແລະໂອກາດແຫ່ງຄວາມໂສກເສົ້າໝອງໝົ່ນ
ແລະເມີນໝາງແນວນີ້ເກີດຂຶ້ນ....ແຕ່ມັນໄດ້ເກີດຂຶ້ນແລ້ວ ຊ້ຳ
ຍັງກຳລັງທໍຣະມານໝົດທຸກສ່ວນອັນເປັນອິນຍານຮັກຂອງອ້າຍ
ຢູ່ໃນຂນະນີ້ ຢ່າງສຸດແສນທີ່ຈະອົດຣົນທົນທານໄຫວ

*ນ້ອງຜູ້ເປັນຍອດດວງໃຈຂອງອ້າຍ !*

ຮູ້ບໍ່ວ່າ ເວລາແຫ່ງຄວາມທໍຣະມານທໍຣະກັມເກືອບເດືອນນຶ່ງ
ທີ່ຜ່ານມານັ້ນອ້າຍໄດ້ຄິດຫຍັງແດ່ ?

ອ້າຍບໍ່ເຄີຍຄິດເສັຽດາຍຫົວໃຈຮັກ ແລະຄວາມ
ຫວັງອັນສູງສົ່ງ ທີ່ໄດ້ມອບວາງແດ່ນ້ອງຜູ້ເປັນຍອດຮັກແຕ່ຜູ້
ດຽວຂອງອ້າຍ ບໍ່ເຄີຍແມ່ນແຕ່ຈະຄິດລັງເລວ່າມັນຈະມີອັນ
ເປັນໄປແນວອື່ນ ນອກຈາກຄວາມສຸກແລະຄວາມສົມຫວັງ

ເກືອບເດືອນອັນແສນທໍຣະມານ ອ້າຍໄດ້ຄຶດເຖິງເຫດຜົນຂອງປຣັຊຍາຮັກຫລາຍ ໆ ທິສດີ ຫລາຍ ໆ ຕໍາຣາ ແລະວິຈັຍວິຈານປຣັຊຍາເຫລົ່ານັ້ນວ່າມີເຫດຜົນຖືກແທ້ ພໍພຽງໃດ

ອ້າຍບໍ່ເຊື່ອໃນປຣັຊຍາທີ່ວ່າ *"ທີ່ໃດມີຮັກ ທີ່ນັ້ນມີທຸກ"* ເພາະວ່າ ມະທີ່ຫົວໃຈຂອງອ້າຍເມື່ອເກີດມີຄວາມຮັກຕໍ່ນ້ອງນັ້ນ ອ້າຍເຄີຍຮູ້ວ່ານັ້ນເປັນສຸກຢ່າງລົ້ນເຫລືອ ແລະສຸກຢ່າງບໍ່ມີສິ່ງປຸນປຽບທຽບທັນໄດ້ ສະນັ້ນອ້າຍຈຶ່ງຄຶດບ່ຽນປຣັຊຍາຮັກໃໝ່ ສໍາລັບອ້າຍເປັນຄວາມໃໝ່ວ່າ *"ທີ່ໃດມີຮັກ ທີ່ນັ້ນມີສຸກ"* ແລະອ້າຍກໍແນ່ໃຈວ່າ ອ້າຍເຄີຍມີຄວາມສຸກ ເຄີຍມີຄວາມຫວັງອັນເຮືອງຮຸ່ງພຸ່ງພົ້ນເມື່ອສອງເຮົາຍັງຮັກກັນ

ອ້າຍໄດ້ຄຶດຕໍ່ມາອີກວ່າ *ໃນຄວາມຮັກນັ້ນມີຄວາມຫວັງ* ແລະມະນຸດທຸກຮູບທຸກນາມຍ່ອມມີໃຈເປັນສຸກ ເມື່ອຊີວິດຫາກມີຫວັງ....ຫວັງວ່າຈະສົມປຣາຖນາ

ອ້າຍເຄີຍຫວັງຕັ້ງໃຈຢ່າງແນ່ແທ້ວ່າ ສອງເຮົາຈະຕ້ອງເປັນອັນນຶ່ງອັນດຽວກັນ ທີ່ບໍ່ມີຫຍັງຈະສາມາດມາເຮັດໃຫ້

ເຮົາຕ້ອງພັດພາກຈາກໄກກັນໄດ້ ໃນຊີວິດຄູ່ໃນຊາດນີ້ ອ້າຍເຄີຍຫວັງໃນຄວາມເຂົ້າໃຈອັນດີຕໍ່ກັນ ແລະຮູ້ຈັກເຫັນອົກເຫັນໃຈກັນຕລອດໄປ....ບາດແລ້ວສິ່ງທີ່ຄິດຫວັງຕັ້ງໃຈເອົາໄວ້ຊ້ຳບໍ່ເປັນໄປຕາມຫວັງ ແຕ່ເກີດມີສິ່ງອື່ນແນວອື່ນທີ່ບໍ່ໄດ້ຕັ້ງໃຈຫວັງເອົາໄວ້ ຂຶ້ນມາແທນບ່ອນໃຫ້ອ້າຍ ແລະອ້າຍຜູ້ດຽວທີ່ນັ້ນຕ້ອງເຈັບຊ້ຳ ເສົ້າໂສກ ແລະແສບໃຈຢ່າງແສນສາຫັດ

ແມ່ນແລ້ວ ອ້າຍຕ້ອງເສົ້າໂສກໝອງໝົ່ນໃຈຫາໃດປຽບບໍ່ມີ ເມື່ອຮູ້ຄັກແນ່ວ່າ ນ້ອງທີ່ຮັກສຸດຮັກເມີນໝາງແລະຫ່າງເຫີນໄປ ຢ່າງບໍ່ມີມື້ຈະໄດ້ຄືນມາປອງຮັກກັນໄດ້ອີກຄືເກົ່າ

ນ້ອງຊຶ່ງຈາກໄປມີຮັກ ເພື່ອປັ້ນແຕ່ງຄວາມສຸກຄວາມຫວັງອັນໃໝ່ຂຶ້ນອີກ ອາດຈະບໍ່ຈື່ຈຳໃນສິ່ງທີ່ຜ່ານກາຍມາ ອາດຈະບໍ່ຄິດເສັຽດາຍ ຄວາມຫວັງ (ຊຶ່ງມັນເປັນຂອງອ້າຍຜູ້ດຽວ) ອັນເກົ່າ ທີ່ອ້າຍພຽນແຕ້ມຂຶ້ນໃຫ້ເປັນຮູບອັນສົດຊື່ນແຈ່ມໃສ ແຕ່ວ່າ ອ້າຍຜູ້ຊຶ່ງພຽນແຕ້ມຈິນຕະນາໃຫ້ມັນເປັນຮູບແຫ່ງຄວາມຫວັງຂຶ້ນມາ ອ້າຍຜູ້ຊຶ່ງໄດ້ຝັ່ງຝາກຫົວໃຈຮັກ ແລະອະນາຄົດໄວ້ນຳຄວາມຫວັງອັນນັ້ນ ຍອດດວງໃຈ

ຂອງອ້າຍເຄີຍຄິດແດ່ບໍ່ວ່າ ອະດີດຮັກຂອງນ້ອງຕ້ອງຕົກຢູ່ໃນສະພາບຈັ່ງໃດ ເມື່ອຂາດດວງຍອດດວງໃຈ

ບໍ່ເລີຍ....ອ້າຍບໍ່ໄດ້ໂທດຄວາມຮັກວ່າ ເຮັດໃຫ້ເກີດທຸກ

ອ້າຍບໍ່ໄດ້ປະນາມນ້ອງວ່າເປັນຍິງຫລາຍໃຈ ແລະໄຮ້ຄວາມແນ່ນອນ

ແຕ່ວ່າ....ອ້າຍກໍບໍ່ຢາກໂທດພຣົມລິຂິດ ຫລືສາຍແນນທີ່ບໍ່ໄດ້ຂີດແຕ້ມເສັ້ນທາງຊີວິດຂອງເຮົາ ໃຫ້ເປັນສາຍດຽວກັນຕລອດໄປ

ອ້າຍບໍ່ກ້າໂທດຕົວເອງ ແລະໃຜອື່ນທີ່ມີສ່ວນເຮັດແລະພາໃຫ້ຄວາມຮັກຂອງອ້າຍຕ້ອງແຕກດັບລົງພະລັນ

ອ້າຍຮູ້ດັກແນ່ແຕ່ພຽງວ່າ ຕົວເອງເສັຽໃຈ....ເສັຽໃຈຫລາຍ ໃນຂນະທີ່ນ້ອງແລະເຂົາຜູ້ນັ້ນກຳລັງມີຄວາມສຸກ ແຕ່ກໍຄິດ ປົງຕົກໂດຍອາສັຍພຣະທັມຄຳສອນຂອງພຣະສັມມາສັມພຸທເຈົ້າວ່າ *ສິ່ງທັງປວງເປັນອະນິຈຈັງ ບໍ່ທ່ຽງແທ້* ເປັນທັມມະດາໂລກ ເປັນທັມມະດາທີ່ແຜ່ນດິນນີ້ ຕ້ອງມີບ່ອນຕ່ຳແລະສູງ....ເປັນທັມມະດາທີ່ໂລກນີ້ ຕ້ອງ

ມີລຳນ້ຳ ຫ້ວຍຮ່ອງ ມະຫາສມຸດ ແລະພູຜາ ໂຄກໂນນ ເປັ່ນທັມມະດາທີ່ອ້າຍຕ້ອງທຸກໂສກເມື່ອນ້ອງຈາກໄປ... ແລະ ອ້າຍເຊື່ອຈັ່ງຊັ້ນ

ອ້າຍໄດ້ຄຶດອີກວ່າ ຄວາມຮັກ ເມື່ອມັນເກີດຂຶ້ນ ແລ້ວຍ່ອມພາໃຫ້ເປັ່ນສຸກ ຄົນທີ່ມີຄວາມຮັກຍ່ອມເຂັ້ມແຂງ ແລະກ້າຫານ ອ້າຍເອງເຄີຍຢູ່ໃນສະພາບດັ່ງກ່າວມາແລ້ວ ເມື່ອ ສອງເຮົາຍັງຮັກກັນ ອ້າຍຈື່ໄດ້ວ່າ ເມື່ອເຮົາສອງຍັງຄອງໃຈ ຮັກຊຶ່ງກັນແລະກັນຢູ່ນັ້ນ ຄວາມຮັກຄວາມຫວັງມັນເຄີຍເຮັດ ໃຫ້ອ້າຍເຂັ້ມແຂງອົດທົນແລະພາກພຽນ ທັງນີ້ອ້າຍໄດ້ສັງເກດ ເຫັນວ່າ ວຽກການໃດ ໆ ກໍຕາມ ຊຶ່ງເຄີຍຫຍຸ້ງຍາກແລະ ເປັ່ນຕາເບື່ອໜ່າຍສຳລັບອ້າຍນັ້ນ ອ້າຍກໍສາມາດທົນເຮັດໃຫ້ ຈົບແລ້ວລ່ວງໂດຍບໍ່ມີຄວາມຄິດຍໍ້ທໍ້ ອ້າຍໄດ້ສັງເກດເຫັນວ່າ ຄວາມກ້າຫານອັນປລາດລ້ຳໄດ້ກໍເກີດຂຶ້ນ ເປັ່ນອຸປນິສັຍໃໝ່ ຂອງຄົນມີຄວາມຮັກ ຢ່າງນ້ອຍອ້າຍກໍກ້າຫານພໍທີ່ຈະເດີນ ອອກໄປໂອບອ້ອມຮ່າງຄີງອັນຊວນຝັ່ນຂອງນ້ອງແລະນ້ອງເອງ ກໍກ້າປະບ່ອຍໃຈ ແລະກາຍໃຫ້ສອງເຮົາໂກຍກອບຫອບເອົາ ຄວາມສຸກຈາກສິ່ງທີ່ເຮົາຄິດວ່າແມ່ນຄວາມສຸກ (ຫລືມັ້ນແມ່ນ

ຄວາມຫລົງ)

ອ້າຍໄດ້ຄິດ ແລະຄິດຫລາຍຈົນຕ້ອງຫາທາງອອກ ດ້ວຍວິທີມາຕົວເອງໃຫ້ໄປພໍ້ກັບສະຖານທີ່ທຸກບ່ອນ ທີ່ເຮົາເຄີຍມີ ແລະໃຫ້ຄວາມສຸກທັງກາຍແລະໃຈ ຈາກແລະແກ່ກັນ-ແລະກັນ (ຂໍໂທດທີ່ຄວາມເວົ້າຂອງອ້າຍມັນສັບສົນ ຄືກັນກັບຄວາມຄິດຂອງອ້າຍຂນະນີ້)

ບ້າບໍ່ ທີ່ອ້າຍທົນຕໍ່ຄວາມຄິດຮອດບໍ່ໄຫວ ຈົນລົງທຶນໄດ້ໄປເຊົ່າຫ້ອງໂຮງແຮມຫ້ອງເກົ່າທີ່ສອງເຮົາເຄີຍຄອບຄອງເປັນເຈົ້າຂອງຕຽງອ່ອນນຸ່ມໃນຫ້ອງນັ້ນຕລອດຄືນ ແລະຫລາຍ ໆ ຄືນ ເພື່ອຢາກເຫັນຮູບຮອຍອັນເກົ່າໝາງຂອງອະ-ດີດແສນສຸກ ຊຶ່ງໄດ້ກາຍມາເປັນປັດຈຸບັນອັນແສນທໍຣະມານ

ແນ່ນອນອ້າຍຕ້ອງຫລັບບໍ່ລົງຕລອດຄືນ ທຸກສິ່ງທຸກຢ່າງໃນຫ້ອງນີ້ມັນໂຮມເຂົ້າເປັນພະລັງມະຫາສານ ແລ້ວຍູ້ສົ່ງໃຫ້ອ້າຍແນມເຫັນພາບຮັກອັນເກົ່າໝາງກ່ອນນັ້ນ ຄັກແນ່ຂັ້ນ....ແນມເຫັນທຸກ ໆ ອາການອະຣິຍະ ບົດທີ່ນ້ອງເຄີຍສນອງຕອບອາຣົມອັນຫວານຊື່ນຂອງອ້າຍ...ແນມເຫັນຄວາມເປັນຕາຮັກທຸກສ່ວນຂອງນ້ອງ ທີ່ອ້າຍເຄີຍຮັກແລະຍັງຮັກຝັ່ງໃຈ ແລະ

ຈະຮັກຕໍ່ໄປຈົນກ່ວາມື້ທີ່ຊີວິດຂອງອ້າຍແຕກດັບ.... ໃນອາຣົມອັນອຽນອົນແລະອຸ່ນອາຍນັ້ນ ອ້າຍແວ່ວໄດ້ຍິນສຽງສັ່ນເຄືອແລະຈິງໃຈຂອງນ້ອງທີ່ເຄີຍຊໍ່ມບອກໃສ່ຫູອ້າຍວ່າ

"*ຕລອດຊາດນີ້ແລະຊາດໜ້າ ຖ້າມີໃຈຄົງລືມອ້າຍບໍ່ລົງ* ໃຈຄົງເປັນບ້າ ຖ້າວ່າອະນາຄົດຈະເດ່ມືອັນໂຫດຮ້າຍມາກັ້ນກາງຂວາງທາງລະຫວ່າງຊີວິດ ຂອງພວກເຮົາ....ອ້າຍທົນ ! ອ້າຍຮັກໃຈດົນ ໆ ເດີ້....ອ້າຍຢ່າປະປ່ອຍໃຈໃຫ້ຕ້ອງຜິດຫວັງເດີ້ !"

ສຽງນັ້ນ–ຄຳເວົ້າເຫລົ່ານັ້ນ ອ້າຍເຄີຍໄດ້ຍິນ ຍັງຈື່ໄດ້ວ່າໃຜເປັນຜູ້ບອກໃສ່ຫູອ້າຍ....

ບໍ່ເຄີຍສັງຫອນໃຈເລີຍວ່າ ຍອດແຫ່ງຄວາມຮັກຜູ້ບອກຄວາມຫວານເຫລົ່ານັ້ນແກ່ອ້າຍ ຈະເປັນຝ່າຍລືມຫລົງລົມລື້ນຂອງຕົວເອງໄດ້ຢ່າງແຈບຈົມແລະງ່າຍດາຍປານນີ້

ຄິດດ້ອຍໃຈເປັນທັມ ແລະມີເຫດຜົນອັນສົມຄວນອ້າຍຮູ້ແລະເຂົ້າໃຈໄດ້ດີໂດຍຕລອດວ່າ ການຕັດສິນໃຈຂຸດຫລຸມຝັ່ງຮັກເກົ່າໃຫ້ຕາຍດັບຈາກໂລກຂອງເຮົານັ້ນ ນ້ອງບໍ່ໄດ້ເຈຕນາສ້າງຄວາມເຈັບແຄ້ນຜິດຫວັງໃດ ໆ ໃຫ້ເກີດແກ່ອ້າຍ

ພໍພຽງແຕ່ອ້າຍອົດຣັກຂອງອ້າຍຕັດສິນໃຈ ເພື່ອຕົວຂອງນ້ອງເອງ ເພື່ອຄວາມສຸກໃນຊີວິດທີ່ນ້ອງຄິດວ່າມັນເປັ່ນສຸກ ແລະອ້າຍຢາກໃຫ້ມັນເປັ່ນຈັ່ງຊັ້ນ ຖ້າແມ່ນມັນເປັ່ນໄປໄດ້

ທຸກທໍຣະມານທີ່ກຳລັງໄດ້ຮັບ ມັນບີບຄັ້ນແຮງແລະແຮງ ຈົນອ້າຍບໍ່ຢາກເຫັນໃຜອື່ນຕ້ອງໄດ້ຮັບໄດ້ຊີມຄືອ້າຍ

ທຸກສິ່ງທຸກຢ່າງທີ່ອ້າຍຈື່ໄດ້ຝັ່ງໃຈ ຄິດວ່າ ນ້ອງເອງກໍ່ຈື່ຈຳມັນໄດ້ດີຄືກັນ ຕ່າງແຕ່ວ່າ ສຳລັບນ້ອງນັ້ນນ້ອງຄົງຈື່ຈຳດ້ວຍຄວາມຮູ້ສຶກວ່າ ນ້ອງໄດ້ກ້າວຢ່າງກາຍພົ້ນຄວາມເກົ່າຄວາມຫລັງທັງໝົດໄປແລ້ວ ຄືຄົນທີ່ຕື່ນຈາກຄວາມຝັນໃນຂະນະທີ່ອ້າຍຮູ້ສຶກວ່າ ມັນຫລຸດລອຍໄປຈາກມື ສຸດຄວາມສາມາດທີ່ອ້າຍຈະດຶງຈ່ອງເອົາໄວ້ໄດ້

ອ້າຍຈະບໍ່ອ້ອນວອນອ້ອນແອ່ວ ເອົາອະດີດເກົ່າໝາງນັ້ນໃຫ້ຄືນມາເປັ່ນປັ່ດຈຸບັນ ແຕ່ຢາກບອກເຕືອນດ້ວຍຄວາມຮັກອາລັຍອາວອນວ່າ *ຄວາມເຈັບຊ້ຳທໍຣະມານທີ່ເກີດຂື້ນແກ່ອ້າຍ ໂດຍທີ່ເຈົ້າບໍ່ຮູ້ເນື້ອນັ້ນຈົ່ງຣະວັງຢ່າໃຫ້ມັນເກີດແກ່ໃຜຜູ້ນັ້ນ ເປັ່ນເດັດຂາດ*....ນ້ອງມີຄວາມສຸກ ກໍ່ຈົ່ງເປັ່ນສຸກໃຫ້ຕລອດ ຢ່າໃຫ້

ພາດພັ້ງເຊຖລາມາຕົກຢູ່ໃນ  ເຫວແຫ່ງຄວາມທຸກທໍຣະມານດິ ອ້າຍ

ທ້າຍທີ່ສຸດ ອ້າຍຢາກບອກໃຫ້ຮູ້ດ້ອຍຄວາມຮູ້ສຶກ ຂອບໃຈວ່າ  ບົດຮຽນທີ່ມີຄ່າທີ່ກັບຫົວໃຈດວງນີ້ງຊຶ່ງນ້ອງໄດ້ ສອນສັ່ງໃຫ້ ໂດຍບໍ່ເຈຕນາເລີຍນັ້ນ  ອ້າຍຈະຍຶດຖືເອົາເປັນ ຕຳຣາຊີວິດຊຶ່ງເກີດແລະຕາຍໄດ້ເທື່ອດຽວນັ້ ຕລອດໄປ ອ້າຍ ຈະຖືເອົາເປັນຄຳເຕືອນເພື່ອປຸກສະຕິຕົວເອງ ໃຫ້ຕື່ນຢູ່ສເມີໃນ ໂລກແຫ່ງຄວາມຮັກ ຂອບໃຈສຳລັບຄ່າແຫ່ງຄວາມສຸກທີ່ອ້າຍ ເຄີຍໄດ້ຈາກໃຜຜູ້ນຶ່ງຊຶ່ງການມອບໃຫ້ນັ້ນຈະແມ່ນໂດຍເຈຕນາ ຫລືບໍ່ເຈຕນາກໍຕາມ.... ຂອບໃຈສຳລັບຄວາມບ່ຽນແປງທີ່ຜາ ກົດຂຶ້ນ  ກ່ອນຄວາມຫລ້າສວາຍຈະມາເຖິງ.... ຂອບໃຈພຣະ ທັມຄຳສອນແຫ່ງອົງສັມມາສັມພຸທເຈົ້າທີ່ຊ່ອຍດຶງຈ່ອງ ຜູ້ຂ້າໄວ້ ບໍ່ໃຫ້ຫລົງຕົນ ລືມຕົວຈົນໄດ້ຊື່ວ່າ  "ຄາຕກອນ"  ຂອບໃຈ ພຸທສາສນາທີ່ຈະຍິນຍອມໃຫ້ຄົນໃຈເສົ້າໄດ້ມີບ່ອນເພິ່ງພິງເມືອ ເມື່ອຫົວໃຈຕ້ອງຕາຍຈາກໂລກແຫ່ງຄວາມຮັກອັນອະນິຈຈັງ

ອ້າຍຈະຮູ້ສຶກຂອບໃຈຫລາຍ ບໍ່ມີແນວປຽບທຽບ ຖ້າຫາກວ່ານ້ອງຜູ້ເຄີຍເປັນດວງໃຈ  ຈະຍິນດີໃຫ້ຄວາມໝັ້ນ

ສັນຍາວ່າ ຈະພຽນຖນອມຄວາມຮັກໃໝ່ຂອງນ້ອງໄວ້ໃຫ້ຕລອດການ ທັງນີ້ ດ້ວຍອ້າຍເຊື່ອວ່າ ການທີ່ອ້າຍຕັດສິນໃຈຈະເຂົ້າບວດ ເປັນທາງທີ່ຖືກຕ້ອງດີແລ້ວ ແລະການທີ່ນ້ອງຈະພຽນຖນອມຮັກໃໝ່ໃຫ້ຍືນຍາວ ກໍເປັນທາງທີ່ຖືກຕ້ອງດີກັນ

ສັນຍາອັນທ້າຍສຸດທີ່ອ້າຍຢາກວອນຂໍຈາກນ້ອງກໍດີ ສັນຍາວ່າ ນ້ອງຈະບໍ່ລືມສັນຍາອັນສຸດທ້າຍ ເພາະມັນຄົງບໍ່ເຫລືອວິສັຍທີ່ນ້ອງແລະເຂົາຈະຮ່ວມກັນຮັກໄວ້ໄດ້

....ແລະຂອບໃຈຕລອດຊີວິດ ຊຶ່ງໝົດສັ້ງແລ້ວຈາກຄວາມສຸກອັນເປັນອະນິຈຈັງ

*"ສີທົນ ທັມມາໄລ"*

# ຄຳ ເຕືອນ ຂອງ ພໍ່

● ປ. ຈຸລມຸນຕຣີ ●



■ ຄຳເຕືອນຂອງພໍ່ມີຄ່າຣາຄາຢູ່ໃນໂຕ ຊຶ່ງ ລູກບໍ່ມີມື້ຈະລືມໄດ້ ຈົນຕລອດຊີວິດ....

“ລູກກໍໃຫຍ່ເປັນບ່າວເປັນແໜວແລ້ວ ກຳລັງຊອກຫາວຽກ ແລະອາຊີບເພື່ອຄວາມກ້າວໜ້າຂອງຊີວິດໃຫ້ແກ່ຕົນເອງ ພໍ່ແມ່ນັ້ນລ້ຽງລູກໄດ້ສະເພາະແຕ່ເຂົ້າກັບປາ ສ່ວນຫົວໃຈຂອງລູກລ້ຽງບໍ່ໄດ້ ສິ່ງໃດດີສິ່ງໃດຊົ່ວຂໍໃຫ້ຄິດພິຈາຣະນາດ້ວຍສະຕິປັນຍາເອົາເອງ ແຕ່ພໍ່ອົດເປັນຫ່ວງບໍ່ໄດ້ ຈຶ່ງຂໍເຕືອນໄວ້ວ່າ ລູກຜູ້ຊາຍອັນແທ້ຈິງນັ້ນ ຕ້ອງຫາລ້ຽງຊີບດ້ວຍຄວາມສຸຈຣິຕ ຢ່າລັກບ້ານລັກເມືອງກິນ.... ຢ່າໄປຫລິ້ນເມັຽເຂົາ ແລະອີກຢ່າງນຶ່ງພໍ່ຂໍຮ້ອງຕໍ່ລູກ ກໍແມ່ນຢ່າໝົວເມົາຕໍ່ການຫລິ້ນພະນັນ”

ຂ້າພະເຈົ້າຈື່ໄດ້ວ່າຂໍ້ຄວາມເຕືອນດັ່ງກ່າວຍັງກ້ອງຢູ່ໃນຫູຕົວເອງຕລອດມາເປັນເວລາສິບກວ່າປີແລ້ວ ແລະໄດ້ພຽນພະຍາຍາມປະຕິບັດຕາມຄຳເຕືອນຢ່າງດັດເດັ່ງ ຍ້ອນຄຳກ່າວເຕືອນດັ່ງກ່າວນັ້ນແມ່ນເປັນຄວາມເວົ້າດ້ວຍຄວາມຈິງໃຈຈາກພໍ່ບັງເກີດເກົ້າຜູ້ມີຄວາມເປັນຫ່ວງຕໍ່ລູກຜູ້ເປັນສາຍເລືອດຂອງຕົນ ບໍ່ມີບຸນຄຸນອັນໃດທີ່ຈະມີນ້ຳໜັກເທົ່າທຽມບຸນຄຸນຂອງພໍ່ແມ່ຜູ້ໃຫ້ກຳເນີດ

ທຸກເທື່ອທີ່ຄິດເຖິງພໍ່ ຂ້າພະເຈົ້າໄດ້ແຕ່ຣະບາຍລົມຫັນໃຈອອກມາ ດັ່ງບຸກຄົນຊຶ່ງກຳລັງໄດ້ຮັບຄວາມອິດເມື່ອຍທີ່ສຸດ ຍ້ອນວ່າໂຕເອງຍັງບໍ່ມີຄວາມສາມາດພຽງພໍທີ່ຈະຕອບແທນບຸນຄຸນຜູ້ບັງເກີດເກົ້າ ທີ່ເຄີຍໃຫ້ຄວາມອົບອຸ່ນລ້ຽງເກືອຕັ້ງແຕ່ນ້ອຍເທົ່າໃຫຍ່... ໃນຖານະຂ້າພະເຈົ້າເປັນລູກກົກຍ່ອມມີຄວາມຄິດໜັກເປັນຂອງທັມມະດາ ສ່ວນນ້ອງນຸ່ງເຈັດຄົນມີຄອບຄົວໄປໝົດແລ້ວ ເຫລືອແຕ່ພຽງນ້ອງສາວຫລ້າທີ່ຄອຍເອົາໃຈເບິ່ງແຍງພໍ່ຢູ່ເຮືອນ ສ່ວນພວກຂ້າພະເຈົ້າແຕກຊະແຕກຊາຍໄປຢູ່ຄົນລະທິບຄົນລະແຈ

"ໄປເທາະລູກ.... ຖ້າໄປດີມີຄວາມສຸກພໍ່ກໍສະບາຍ

ໃຈ ລູກທຸກຄົນກໍໃຫຍ່ມີຄອບຄົວກັນໝົດແລ້ວ" ພໍ່ບອກລູກທຸກ ໆ ຄົນ ຄວາມເວົ້າຂອງພໍ່ຍ່ອມມັກອອບ ແລະໃຫ້ກຳລັງໃຈແກ່ລູກ ໆ ຢູ່ສເມີ. ເຖິງແມ່ນວ່າຕົວເອງຈະໄດ້ຮັບຄວາມທຸກແຄັນແພັນໃຈປານໃດກໍຕາມ ພໍ່ ຍອມເສັຽສລະທຸກຢ່າງເພື່ອເຫັນແກ່ຄວາມສຸກຂອງລູກ ຂ້າພະເຈົ້າຮູ້ດີວ່າ ພໍ່ ໄດ້ອົດກັ້ນຄວາມຮູ້ສຶກອັນແທ້ຈິງເຊື່ອງໄວ້ໃນສ່ວນເລິກຂອງຫົວໃຈ... ພໍ່ບໍ່ເຄີຍໄດ້ຮັບຄວາມສຸກອັນແທ້ຈິງເລີຍ ລຸນຫລັງແມ່ຈາກໄປຢ່າງບໍ່ມີວັນກັບຄືນມາໃຫ້ເຫັນໜ້າອີກແລ້ວ ຕລອດຈົນຊົ່ວຊີວິດນີ້ ກ່ອນຈະໝົດບຸນຂອງແມ່ ມີພຽງແຕ່ພໍ່ພຽງຄົນດຽວເທົ່ານັ້ນທີ່ເຫັນລົມຫັນໃຈເທື່ອສຸດທ້າຍ ແລະ ແມ່ ຕາຍຢູ່ໃນອ້ອມກອດຂອງພໍ່....

"ພໍ່ບໍ່ເຄີຍນອກໃຈແມ່ຂອງລູກ ໆ ຕລອດຢູ່ກິນກັນມາບໍ່ເຄີຍມີຄວາມຜິດຂ້ອງຕ້ອງຖຽງກັນ ແມ່ຂອງລູກມີບຸນໜ້ອຍ ບໍ່ມີອາຍຸຍືນໄດ້ເບິ່ງຄວາມກ້າວໜ້າໃນຊີວິດຂອງພວກລູກ.... ສນັ້ນ ເພື່ອໃຫ້ວິນຍານແມ່ ໄປສູ່ຄວາມສງົບຢ່າງແທ້ຈິງແລ້ວ ຂໍໃຫ້ພວກລູກຈົ່ງຕັ້ງໜ້າຕັ້ງຕາ ສ້າງຄຸນງາມຄວາມດີແກ່ຕົວເອງແລະເພື່ອຊາດສ່ວນຮວມ" ພໍ່ເວົ້າອອກມາດ້ວຍ

ນ້ຳສຽງເປັນປົກຕິ ແຕ່ບໍ່ສາມາດອົດກັ້ນຄວາມຮູ້ສຶກເອົາໄວ້ໄດ້ ປາກົດວ່າ ມີນ້ຳໃສ ໆ ໄຫລຊຶມອອກຈາກເບົ້າຕາທັງສອງຂ້າງ ເປັນເທື່ອທຳອິດທີ່ບັນດາລູກ ໆ ໄດ້ເຫັນນ້ຳຕາຂອງພໍ່ຜູ້ບັງເກີດເກົ້າ... ຈະມີລູກຄົນໃດທີ່ຈະໃຈແຂງພໍທີ່ຈະອົດກັ້ນນ້ຳຕາໄວ້ໄດ້.... ຂ້າພະເຈົ້າເປັນຄົນທຳອິດທີ່ປ່ອຍສຽງສະອື້ນອອກມາຢ່າງບໍ່ພຽມອາຍ ພ້ອມກັບກົ້ມລົງຍົກຕີນພໍ່ຂຶ້ນມາໃສ່ຫົວຕົວເອງ ສຽງຮ້ອງໄຫ້ຂອງບັນດານ້ອງນຸ່ງພາກັນ ຟົດສະນັ່ນຂື້ນ ພວກຂ້າພະເຈົ້າເສັຽນ້ຳຕາໄປດ້ວຍຄວາມຮູ້ສຶກຕໍ່ພຣະຄຸນຂອງຜູ້ບັງເກີດເກົ້າຢ່າງແສນອາໄລ ໂດຍຮັບປາກໄວ້ວ່າໃນເມື່ອຍັງເຫລືອແຕ່ພຽງຄົນດຽວ ພວກເຮົາຈະພະຍາຍາມໃຫ້ພໍ່ໄດ້ຮັບແຕ່ຄວາມສຸກ

ແຕ່ພໍ່ກໍຍັງເປັນພໍ່ ທີ່ມີຄວາມເປັນຫ່ວງຕໍ່ບັນດາລູກ ໆ ຢູ່ສເມີ ເຖິງແມ່ນວ່າພໍ່ບໍ່ມີຄວາມທຸກທາງການຢູ່ການກິນ ແຕ່ພໍ່ມີຄວາມທຸກໃຈ ມີຄວາມເຫງົາ ໃນເມື່ອແຕ່ກ່ອນພໍ່ເຄີຍມີແມ່ໃຫ້ຄຳປຶກສາຫລືໃນວຽກການຕ່າງ ໆ ບັດນີ້ແມ່ບໍ່ຢູ່.. ບັນດາລູກຫລານກໍພາກັນພິຈາກ ເມື່ອເປັນແນວນີ້ແລ້ວຈະໃຫ້ພໍ່ມີຄວາມສຸກໄດ້ຢ່າງແທ້ຈິງແນວໃດ ?

— ຂ້າພະເຈົ້າເຊື່ອຢູ່ສເມີວ່າ ພໍ່ຜູ້ບັງເກີດເກົ້າ ບໍ່ເຄີຍໄດ້ຮັບຄວາມສຸກເລີຍ ຕລອດຊີວິດທີ່ຜ່ານມາ ພໍ່ເຄີຍຜ່ານສນາມຣົບໃນດິນແດນອິນໂດຈີນຕັ້ງແຕ່ເໜືອຕລອດໃຕ້ ລຸນຫລັງສົງຄາມກູ້ຊາດລາວຜ່ານພົ້ນໄປແລ້ວ ພໍ່ໄດ້ອອກຈາກຊີວິດທະຫານ ຫາປະກອບອາຊີບພິກປັ້ນຜົນໄຮ່ນາ ເພື່ອໃຊ້ເຫື່ອແຮງທີ່ມີຢູ່ສຳລັບລ້ຽງລູກໃຫ້ເປັນຜູ້ເປັນຄົນ ຄືລູກຂອງຄົນອື່ນ ພໍ່ນັ້ນ ສາມາດລ້ຽງລູກໄດ້ທຸກຄົນ ແຕ່ລູກບາງຄົນບໍ່ສາມາດລ້ຽງພໍ່ໄດ້ ຊ້ຳບໍ່ພໍຍັງເຮັດໃຫ້ພໍ່ໄດ້ຮັບຄວາມທຸກທະວີຕື່ມຂຶ້ນອີກ.... ຂ້າພະເຈົ້າ ຄິດອີ່ດູຕົນພໍ່ເຫລືອທີ່ສຸດ ດ້ວຍເຫດນີ້ ຈຶ່ງພະຍາຍາມປະຕິບັດຕາມຄຳເຕືອນຂອງພໍ່ ກ່ອນທີ່ຂ້າພະເຈົ້າຂຶ້ນມາຢູ່ວຽງຈັນເກືອບສິບກວ່າປີຜ່ານມານີ້. ໃນຕອນນັ້ນ ພໍ່ໃຫ້ເງິນພຽງສອງພັນກີບ ເພື່ອເປັນທຸນຮອນແລ່ນເຕັ້ນໄປຮຽນຕໍ່ ພໍ່ ຕ້ອງການໃຫ້ຂ້າພະເຈົ້າເປັນຂ້າຣາຊການ ແຕ່ພໍມາເຖິງວຽງຈັນອີ່ຫລີ ຄວາມຄິດຄະນອງ ໄດ້ເຫັນ ໄດ້ຮູ້ການເຄື່ອນໄຫວຂອງການສຶກສາ ເຕັ້ນໄປດ້ວຍການຫລິ້ນພັກພວກ ສິ່ງທີ່ຝັນໄວ້ນັ້ນ ບໍ່ໄດ້ເປັນໄປຕາມທີ່ຄາດໝາຍໄວ້ເລີຍ ຂ້າພະເຈົ້າຢາກຮຽນພັງສືໃຈພໍ່ຊິຂາດ ເມື່ອເຫັນໝູ່ຄູ່ໄປຮຽນ

ຕໍ່ຕ່າງປະເທດເທື່ອລະສາມສີ່ຄົນ ຍິ່ງຄິດມີຄວາມຕ່ຳຕ້ອຍນ້ອຍໃຈຕໍ່ອາສນາຂອງຕົນ .... ໃນເມື່ອບໍ່ມີປັນຍາໄປຮຽນຕໍ່ໄດ້ແລ້ວ ຈຶ່ງຕັດສິນໃຈຮຽນໜັງສືດ້ວຍຕົວເອງເປັນການໃຫຍ່ ຫ້ອງສມຸດຕ່າງ ໆ ຢູ່ນະຄອນວຽງຈັນໄດ້ຈື່ໄວ້ທຸກແຫ່ງ ຫ້ອງສມຸດຂອງທ່ານຈັນໄຊ ປຣິຜາສຸກ ຢູ່ຫາດຂາວ ໃຊ້ເວລາອ່ານແລະບັນທຶກຕ່າງ ໆ ໄວ້ເປັນເວລາເຫິງນານເຖິງຫ້າເດືອນ ໜັງສືຈຳນວນສອງພັນກວ່າຫົວ ກໍໄດ້ຜ່ານສາຍຕາໄປໂດຍຮຽບຮ້ອຍ.... ຈາກນັ້ນກໍອ່າຍມາຍັງກອງວັນນະຄະດີ ຊຶ່ງ ອາຈານມະຫາສິລາ ວິຣະວົງສ໌ ເຫັນວ່າ ຂ້າພະເຈົ້າມັກອ່ານໜັງສືຕອນນັ້ນ ກອງວັນນະຄະດີຕັ້ງຢູ່ສີ່ແຍກຄຸກໃຫຍ່ ແລ້ວຖືກມ້າງເປັນມະຫາວິທຍາລັຍ ສີສ່ວາງວົງ ໂຮງຮຽນແພດໃນປັດ-ຈຸບັນ.... ໃຊ້ເວລາອ່ານໜັງສືຢູ່ແຫ່ງນີ້ ເປັນເວລາສອງເດືອນໜັງສືຕ່າງ ໆ ຢູ່ໃນຕູ້ກໍໝົດກ້ຽງ ການອ່ານໜັງສືຢູ່ທີ່ກອງວັນ-ນະຄະດີດັ່ງກ່າວນີ້ເອງ ໄດ້ເຮັດໃຫ້ຂ້າພະເຈົ້າຮູ້ ອາຈານມະຫາສິລາ ວິຣະວົງສ໌ ໄດ້ດີຂຶ້ນ ຖ້າມີຄວາມຂ້ອງໃຈໃດ ໆກໍຖາມອາຈານທັນທີ ຊຶ່ງທ່ານຜູ້ນີ້ບໍ່ຍອມຫວງວິຊາເລີຍ ຂນະດຽວກັນ ກໍໄດ້ຮັບຮູ້ທາງດ້ານການເມືອງ ພໍເປັນແນວທາງ

ທີ່ຈະຕ້ອງຕິດຕາມການສຶກສາກັນຕໍ່ໄປ....

ໃຜຈະວ່າ ເປັນຄົນບ້າອ່ານໜັງສື ແນວໃດກໍຕາມ ໃນເມື່ອບໍ່ມີໂອກາດໄດ້ໄປຮຽນຕໍ່ແລ້ວ ຂໍຍຶດຫ້ອງສມຸດນີ້ລະ ເປັນມະຫາວິທຍາລັຍ ຊອກຫາຄວາມຮູ້ເອົາເອງ ລຸນຫລັງຄົ້ນຄວ້າຢູ່ກອງວັນນະຄະດີແລ້ວ ຈຶ່ງໄປພົບມີໄຫວ້ ທ່ານ ທິບທັມວົງ ຢູ່ກະຊວງຖແລງຂ່າວ ຂໍອ່ານຂ່າວປະຈຳວັນ ຊຶ່ງທາງກະຊວງໄດ້ຈັດຫຍິບເປັນຮູບເຫລັ້ມໄວ້ແລ້ວ ອ່ານຕັ້ງແຕ່ສະບັບທຳອິດກັນມາເລີຍ ການອ່ານຂ່າວເກົ່າໆ ກໍເຮັດໃຫ້ໄດ້ຮັບຄວາມຮູ້ ຄວາມເປັນໄປຂອງບ້ານເມືອງໄດ້ດີຍິ່ງຂຶ້ນ ໃຊ້ເວລາອ່ານຢູ່ເດືອນປາຍ ຂ່າວປະຈຳວັນເກົ່າໆ ກໍກ້ຽງເອີດເຕີດຕລອດເວລາຕັ້ງເດົ້າອ່ານໜັງສືຕາມຫ້ອງສມຸດ ເຮັດໃຫ້ຂ້າພະເຈົ້າສາມາດບັນທຶກເຣື່ອງຕ່າງໆ ໄວ້ໄດ້ເຖິງ ຫົກຫົວປຶ້ມຂຽນຢູ່ທີ່ກະຊວງຖແລງຂ່າວນີ້ເອງ ໄດ້ເຮັດໃຫ້ຂ້າພະເຈົ້າໄດ້ຮູ້ຈັກຍາພ່ ເຫລື່ອມ ທັມໂຊດ ຊຶ່ງອຸດສາແນະແນວທາງໃຫ້ຮູ້ຈັກອ່ານໜັງສືປະເພດທັມມະທັມໂມ.

ຍາພ່ ເຫລື່ອມ ທັມໂຊດ ໄດ້ແນະນຳໃຫ້ຮູ້ຈັກກັບເພັຽນູມີ ວິຈິດພົງ ຂນະນັ້ນ ຍັງມີຊີວິດຢູ່ປະຈຳສະພາແຫ່ງ

ຊາດ ເພື່ອຂໍຢືມໜັງສືອານ ປາກົດວ່າ ເພັຽພູມີ ວິຈິຕພົງ ໄດ້ຮັກແພງຂ້າພະເຈົ້າດີກັບລູກຫລານ ໃຫ້ຄວາມສະດວກເພື່ອຄົ້ນຄວ້າໜັງສືອ່ານໄດ້ຕາມສະບາຍ ຢູ່ທີ່ສະພານີ້ເອງ ທີ່ເຮັດໃຫ້ໄດ້ຮັບຄວາມຮູ້ທາງດ້ານການເມືອງແລະກົດໝາຍຕ່າງໆ ຂອງລາວຢ່າງກວ້າງຂວາງ ບັນທຶກຣາຍງານການປະຊຸມຂອງສະພາແຫ່ງຊາດນັ້ນ ມີປໂຍດແກ່ບຸກຄົນທີ່ສົນໃຈການເຄື່ອນໄຫວການເມືອງພາຍໃນລາວໄດ້ເປັນຢ່າງດີຍິ່ງ

ຕລອດເວລາປະຕິບັດຕົນເປັນນັກສຶກສາ ປະເພດບໍ່ມີມະຫາວິທຍາລັຍຮັບຮອງຢູ່ນັ້ນ ກໍໄດ້ຮູ້ຈັກຜູ້ຄົນຫລາຍຂຶ້ນ ໝູ່ຄູ່ຊວນໄປເຮັດວຽກເຮັດການ ແຕ່ຖືກປະຕິເສດໄປ ພ້ອມກັບບອກໝູ່ຄູ່ວ່າ ຢາກເຮັດໜັງສືພິມເຫລືອທີ່ສຸດ ຍ້ອນວ່າໃນຕອນນັ້ນ ຂ້າພະເຈົ້າມີວັດຖຸດິບ ສາມາດ ປ້ອນພ້າໜັງສືພິມໄດ້ຫລາຍທີ່ສຸດ ບໍ່ວ່າຈະເປັນສາຣະຄະດີ ຫລື ນິຍາຍ ເວລານັ້ນບໍ່ຄ່ອຍມີຍົນເອີ້ນໜັງສືພິມກັນ ສ່ວນຫລາຍເອີ້ນແຕ່ຈົດໝາຍເຫດ

“ບັກບ້າ... ເມືອງເຮົານັ້ນມີຈົດໝາຍເຫດເອກຊົນຢູ່ບ່ອນໃດ ມຶງເກີດຜິດຊາດແລ້ວ” ໝູ່ເວົ້າອອກມາຢ່າງນ້ອຍ

ໃຈທີ່ໄດ້ເຫັນແຜ່ນດິນລາວທີ່ໄດ້ຮັບເອກຣາດແລ້ວ ແຕ່ບໍ່ມີໜັງສືພິມລາວອ່ານ.

"ເຖິງຢ່າງໃດ ກໍ່ບໍ່ຫລຸດຄວາມພະຍາຍາມ ຕລອດເວລາໃຊ້ຊີວິດແບບຊາຍພະເນຈອນຢູ່ນັ້ນ ກໍ່ໃຊ້ເວລາຂີດຂຽນໜັງສືແລະອ່ານໜັງສືຕໍ່ໄປຢ່າງບໍ່ຖົດຖອຍ ທັງທີ່ຮູ້ຢູ່ແລ້ວວ່າຂໍ້ຂຽນຂອງຕົນບໍ່ມີສນາມລົງ...

"ຊ່າງຫົວມັນ ! ຂຽນໄປຈັ່ງຊີ້ລະ" ຂ້າພະເຈົ້າຄິດອອຍໃຈຕົນເອງ.... ແຕ່ແລ້ວຄວາມໄຝ່ຝັນຂອງຂ້າພະເຈົ້ານັ້ນບໍ່ໄດ້ສັ້ງສຸດໄປເທື່ອ... ເມື່ອທ່ານ ຕານ ຈຸນລະມຸນຕຣີ ຕອນນັ້ນ ໄດ້ຮັບຕຳແໜ່ງເປັນ ຣັຖມົນຕຣີຊ່ວຍວ່າການກະຊວງຍຸຕິທັມ ໃນຖານະເປັນລຸງຂອງຂ້າພະເຈົ້າ ທ່ານຕານ ຈຸນລະມຸນຕຣີ ເອີ້ນໄປພົບຢູ່ຫ້ອງກິນເຂົ້າ.

"ມຶງເຊົາບ້າອ່ານໜັງສື ຕາມຫ້ອງສມຸດຕ່າງ ໆ ແລ້ວບໍ ?" ເພິ່ນຖາມ

"ຍັງຂະນ້ອຍ.... ເວລານີ້ກຳລັງຢືມໜັງສືຫ້ອງສມຸດຢູ່ຊີສອ່ານຢູ່..." ຂ້າພະເຈົ້າຕອບໄປຕາມຄວາມເປັນຈິງ

"ພໍແລ້ວ.. ມຶງໄປເຮັດວຽກຊ່ອຍລຸງແດ່ ໜັງສື

ພິມ ລາວໃຫຍ່ ເຂົາຂາດນັກຂ່າວ ຈະພິມອອກສອງສາມມື້ລະ !”

ພໍໄດ້ຍິນວ່າ “ໜັງສືພິມ” ເທົ່ານັ້ນ ຂ້າພະເຈົ້າກໍເກີດມີຄວາມຕື່ນເຕັ້ນເຫລືອທີ່ສຸດ ໂດຍບໍ່ຖາມເອົາເງິນເດືອນຈາກລຸງແມ່ນແຕ່ໜ້ອຍ ຍາລຸງ ຄົງຮູ້ໃຈຂ້າພະເຈົ້າ ທີ່ມີຄວາມສົນໃຈຕໍ່ອາຊີບນີ້ ທ່ານຍິ້ມອອກມາຢ່າງພໍໃຈ ແຕ່ ຂ້າພະເຈົ້າບໍ່ໄດ້ຍິ້ມຢ່າງທັມມະດາ ແຕ່ເປັນການຍິ້ມແບບຫົວຍິ່ງແຂ້ວ.

ເປັນອັນວ່າ ໄດ້ກ້າວເຂົ້າສູ່ວົງການໃສ້ແທ້ງໃຕ້ຟ້າເມືອງລາວຢູ່ທີ່ໜັງສືພິມ *“ລາວໃຫຍ່”* ຣາຍວັນ ອັນເປັນ *ໜັງສືພິມສະບັບທຳອິດຂອງລາວ* ສົນໃຈແລ້ວ ຄັກໃຈແລ້ວ ຕໍ່ໄປກໍຈະເຮັດວຽກທີ່ຕົນຮັກທອມຢ່າງສຸດຄວາມສາມາດ ແຕ່ຂ້າພະເຈົ້າ ຕ້ອງໄດ້ຮັບກັບຄວາມກະທົບກະເທືອນໃຈຢູ່ບໍ່ໜ້ອຍ ເມື່ອໄດ້ຮັບຈົດໝາຍຈາກພໍ່ ໆ ບໍ່ພໍໃຈທີ່ຂ້າພະເຈົ້າມາຍຶດອາຊີບເປັນຄົນໜັງສືພິມ ພໍ່ບອກໃນຈົດໝາຍນັ້ນວ່າ

“ມຶງຈະມີສັດຕູ ການເຮັດໜັງສືພິມໃນບ້ານເມືອງເຮົານັ້ນ ບໍ່ມີໃຜຍ້ອງຍໍດອກ ມຶງຈະບໍ່ໄດ້ເມັຽເທົ່າຮອດມື້ຕາຍ ແລະຈະສ້າງຖານະບໍ່ໄດ້” ນັບເປັນເທື່ອທຳອິດ ທີ່ຂ້າພະເຈົ້າ

ຂັດໃຈພໍ່ບັງເກີດເກົ້າ ທັງທີ່ພໍ່ມີຄວາມທຸກໃຈຢູ່ແລ້ວ ເຖິງຢ່າງໃດກໍຕາມ ຂ້າພະເຈົ້າໄດ້ພຽນພະຍາຍາມຊີ້ແຈງໃຫ້ພໍ່ເຂົ້າໃຈຕໍ່ອາຊີບນີ້ວ່າ ເປັນອາຊີບບໍລິສຸດແລະມີການເສັຽສລະຢ່າງສູງ ແຕ່ໃນປັດຈຸບັນນີ້ ເຫັນຄຳເຕືອນຂອງພໍ່ມີສ່ວນຖືກຕ້ອງຢູ່ພໍສົມຄວນ ພວກກິນປູນຮ້ອນທ້ອງ ມັກຈະເບິ່ງພວກໃສ້ແຫ້ງເປັນສັດຕູຂອງຕົນ ແຕ່ ຊ່ວຍເຫລືອບໍ່ໄດ້ ຜູ່ໃດສ້າງບາບຂຶ້ນແລ້ວ ບາບນັ້ນຍ່ອມຕອບສນອງ ບໍ່ໄວ ກໍຊ້າ.... ຄົນໜັງສືພິມຂໍເປັນມິດແກ່ຜູ່ສ້າງຄວາມດີໃຫ້ແກ່ຊາດບ້ານເມືອງ ໂດຍບໍ່ເລືອກຊັ້ນວັນນະ ຄຳເຕືອນຂອງພໍ່ເມື່ອສິບກວ່າປີທີ່ຜ່ານມານັ້ນ ຂ້າພະເຈົ້າໄດ້ປະຕິບັດຢ່າງສເມີກົກສເມີປາຍ ຂນາດໄປສາຣະເວຂຶ້ນເມືອງສວັນກັບບັນດາຂາຍຂາອ່ອນ ຂ້າພະເຈົ້າຕ້ອງພິຈາຣະນາຢ່າງຮອບຄອບ ຕ້ອງໃຊ້ມືລູບເບິ່ງທ້ອງເສັຽກ່ອນ ຖ້າປາກົດວ່າ ມີທ້ອງລາຍເກີດຂຶ້ນໃຫ້ເຫັນແລ້ວ ຕ້ອງເຊົາຣາວີປຸດຍິງ ພ້ອມກັບຖາມວ່າ :

“ບໍ່ແມ່ນນອກໃຈຜົວມາບໍ້ ?”

“ຄັນນອກໃຈຜົວ ເຂົາບໍ່ບ້າມາເຮັດຈັ່ງຊີ້ດອກ” ນາງຈ້າງວ່າ.

"ຢ້ານຂາບຊຸ້ມດອກ ຫລິ້ນເມັຽເຂົາ ມັນບໍ່ດີ ເຄີຍເຫັນຜູ່ຊາຍມາຫລາຍຣາຍແລ້ວ ທີ່ຊອກຫລິ້ນເມັຽເຂົານັ້ນ ມັກມີແນວເປັນໄປແບບກັນນຳຫັນຕາເຫັນຢູ່ສເມີ" ຂ້າພະເຈົ້າວ່າ ປານໂຕເອງເປັນຄົນຢູ່ໃນສິນກິນໃນທັມເອົາແທ້ເອົາວ່າ

"ເອົາໄປເຮັດຫຍັງຜົວ ມັນທຸກໃຈຊື່ໆ ຢູ່ໄປແນວນີ້ດີກວ່າ ເມື່ອພໍ່ຮັກແທ້ ຈຶ່ງເຊົາມັນ" ນາງຈ້າງວ່າ.

"ກຽມຣົບ ! ຂ້າພະເຈົ້າຮ້ອງຂຶ້ນຢູ່ໃນໃຈ ອຶນເວົ້າກັນຕໍ່ໄປ ກໍຈະເປັນການບ່ອຍໂອກາດໃຫ້ສັຕຣູພາຍນອກມາບຸກໂຈມຕີຈົນເຮັດໃຫ້ແຜນຍຸທສາດເສັຽໄປໝົດ

## *ຄວາມຫວັງດີຂອງລູກໜີ້*

*ນາຍຄັນຄາຍ* ພວມໂຕ້ຖຽງກັນຢູ່ຈົນເອັນຄໍພົງ ກັບຜູ້ຈັດການຮ້ານຂາຍໄມ້ ກ່ຽວກັບເຣື່ອງໜີ້ສິນຄ່າໄມ້ປຸກເຮືອນ ທີ່ນາຍຄັນຄາຍບໍ່ຍອມໃຊ້ໃຫ້ເບັ້ນເວລາປີປາຍ ຜູ້ຈັດການຂໍຄິດຄ່າໄມ້ຕາມຣາຄາໃໝ່ທີ່ແພງຂຶ້ນກວ່າເກົ່າ ແຕ່ນາຍຄັນຄາຍຂໍຫລຸດເບັ້ນຣາຄາເກົ່າ ພໍດີ "ດວງຈຳປາ" ໄປພົບເຫດການເຂົ້າກໍ່ເລີຍສະແດງຄວາມສົນໃຈ

— ອ້າຍຄັນຄາຍຫາເງິນມາໃຊ້ໜີ້ເຂົາໄດ້ແລ້ວຊັ້ນເບາະ ຄືຈັ່ງວ່າຖຽງເອົາແທ້ ?

— ກະຍັງບໍ່ມີມາໃຊ້ເທື່ອແຫລ້ວ ! ນາຍຄັນຄາຍວ່າ "ຊາດນີ້ທັງຊາດບໍ່ມີຫວັງຊິຫາມາໃຊ້ເຂົາໄດ້ດອກ !"

— ຄັນແມ່ນຊັ້ນ ມາຂໍຫລຸດເຂົາໃຫ້ມັນຍາກເຮັດຫຍັງ ?" ດວງຈຳປາຄົງສົງສັຍບໍ່ແລ້ວ

— ການຫລຸດຣາຄານີ້ ກໍ່ແມ່ນຍ້ອນເຫັນໃຈເຖົ້າແກ່ຮ້ານຂາຍໄມ້ນີ້ແຫລະ" ນາຍຄັນຄາຍພຍາຍາມອະທິບາຍ *"ຍ້ອນບໍ່ມີມາໃຊ້ຈຶ່ງບໍ່ຢາກໃຫ້ເຂົາຄິດຣາຄາແພງຢ້ານເຂົາຂາດທຶນຫລາຍຊັ້ນດອກ !!"*



• ອິນທິຣາ •

# ສົມ ໃຈ

ສົມໃຈ ເປັນສາວຣຸ່ນໃຫຍ່ ພ້ອມພູນໄປດ້ວຍຄວາມຮູ້ສູງແລະອຸດົມການ ເປັນຄົນຮັກໝູ່ຄູ່ ມັກຜະຈົນຊີວິດ ເພາະເຊື່ອວ່າຄົນເຮົາຈະໄດ້ຄວາມຮູ້ຕື່ມ ກໍຕໍ່ເມື່ອກ້າອອກໄປຊອກຫາ

*ມັນ ແລະເຊື່ອວ່າ ການອອກໄປຜະຈົນກັບ ໂລກພາຍນອກ (ແລະໃນ) ຈຳເປັນຕ້ອງເຮັດ ດ້ວຍຄວາມຣະມັດຣະວັງທີ່ສຸດອີກ* ທັງນີ້ກໍຍ້ອນ ວ່າເຮົາຢາກໄດ້ຄວາມຮູ້ ບໍ່ແມ່ນແຕ່ຢາກມ່ອນຖຸມແລ້ວລືມ ໄປຊື່ໆ ໂດຍບໍ່ມີປໂຍດ ແລ້ວກະດ້ວຍເຫດນີ້ເອງ ສົມໃຈ ຈຶ່ງມານັ່ງເຈົ່າໜ້າເສົ້າ ຄອຍຢູ່ໂຕະຂຽນໜັງສື ດຶງເຈັ້ຽສ໌ອອກ ມາລົງມືຂຽນຈົດໝາຍ ດ້ວຍຄວາມຮູ້ສຶກຫລາຍອັນຫລາຍ–ແນວປົນກັນ ນາງຂຶ້ນຕົ້ນງ່າຍໆ ວ່າ

\+ + +

"ອ້າຍເພົາ"

ອ້າຍວ່າອ້າຍເກັ່ງກ້າສາມາດລະນໍ ທີ່ພານ້ອງຂີ່ຣົດ ໄປນັ່ງຢູ່ແຄມຂອງຍາມມືດຊູ້ມລ້າວ ແລ້ວເຮັດຊົ່ວໆ ຈັ່ງຊັ້ນ ມະ! ຄົນຂັ້ນອ້າຍບໍ່ສົມຄວນຊິມີຄວາມຄິດແບບຄົນຂັບຕັກຊີ້ ທີ່ຂາດຄວາມຄິດ ຂາດການສຶກສາ ພາແມ່ຍິງໄປຊູ່ເຂັ້ນ"

ຂຶ້ນຕົ້ນຈົດໝາຍແບບນີ້ ແຕ່ແລ້ວກໍບໍ່ຄັກໃຈຢາກ ວ່າໃຫ້ຜູ້ຊາຍທີ່ຄິດຊິລີ້ວກັບນາງໃຫ້ເຈັບແສບກວ່ານີ້ ຈຶ່ງດຶງເຈັ້ຽແຜ່ນໃໝ່ອອກມາ ຕັ້ງຕົ້ນຂຽນດ້ວຍອາຣົມແຄ້ນເຄືອງທີ່

ທະວີຄູນຂຶ້ນ ເມື່ອຄິດຮອດເຫດການທີ່ຜ່ານມາ ນາງຂຶ້ນຕົ້ນຈົດໝາຍສະບັບໃໝ່

\+ + +

"ຍາເພົາ, ບ່າວລອງໂລກ

ນ້ອງບໍ່ຄິດເລີຍວ່າ ຈິນຕົນໃຈຕ່ຳເຊື່ອງໄວ້ໃນຮູບງາມ ແລະຫຸ້ມລ້ອມໄປດ້ວຍກຽດຕິຍົດແລະຊື່ສຽງດີຍາດັ່ງແມ່ນທະຫານບໍ່ໄດ້ແຊກເຮັດຈັ່ງຊັ້ນກັບນ້ອງ ນ້ອງອາດຈະບໍ່ເສັຽປຽບເສັຽໃຈປານນີ້"

ສົມໃຈຍັງບໍ່ດັກໃຈ ຈົກເຈັ້ຽແຜ່ນໃໝ່ອອກມາຂຽນອີກ ຄິດໃນໃຈວ່າຊິເອີ້ນເຂົາວ່າ "ອ້າຍ" ວ່າ "ຍາ" ເຮັດຫຍັງ ໃນເມື່ອເຂົາໄດ້ເຮັດແນວບໍ່ສົມກຽດຂອງເຂົາແລ້ວຈຶ່ງຂຶ້ນຕົ້ນຈົດໝາຍໃໝ່ອີກວ່າ

\+ + +

"ເພົາ"

ຄິດຊະວ່າ ເຈົ້າໂຊກດີທີ່ຂ້ອຍຍັງເອີ້ນນາມເຈົ້າຢູ່ດຽວນີ້ ດີແລ້ວທີ່ຂ້ອຍບໍ່ໄດ້ຕົບໜ້າເຈົ້າໃນຣົດຫວ່າງແລງນັ້ນະ! ເຈຕນາແລະແຜນການອັນທີ່ເຈົ້າງຶມງາຍນຳວ່າ ດັກຂອງ

ເຈົ້າ ມັນໄດ້ເປີດເຜີຍໂດຍການກະທຳຂອງເຈົ້າເອງໝົດແລ້ວ ຂ້ອຍຈັ້ງແມ່ນສ່ອງເຫັນຄວາມຄິດ ແລະທາດແທ້ຂອງເຈົ້າຄັກ ແຕ່ເຈົ້າອີກທີ່ຍັງເສັຽປຽບໃຫ້ຂ້ອຍຢູ່ ເພາະເຈົ້າຍັງບໍ່ຮູ້ເຈຕ–ນາຂອງຂ້ອຍ ວ່າເປັນຫຍັງຂ້ອຍຈຶ່ງລົມນຳເຈົ້າຢູ່ ບາງທີຄັນເຈົ້າບໍ່ໝ້າໝາພໍ່ ເຈົ້າອາດຊິອາຍໂຕເອງກະເປັນໄດ້

ຂຽນມາຮອດບ່ອນນີ້ ນາງຍັງຄິດວ່າໂຕຂຽນຍືດເຍື້ອ ບໍ່ແສບແລະຮ້ອນຄືອາຣົມຂອງຕົນໃນຍາມນີ້ ຄຳເວົ້າຍັງສຸຂຸມໂພດ ຈຶ່ງປະເຈັ້ຽໄປຕັ້ງຕົ້ນຈົດໝາຍກ້ານໃໝ່ອີກວ່າ

\+ + ×

"ເພົາ.... ຜູ່ຊາຍໝ້າໝາ

*ເຈົ້າດຶງໂຕເອງລົງໄປຣຽງກັບສັດເດັຽຣະສານໄດ້ງ່າຍຫລາຍ ບໍ່ຍາກຄືເວລາບຶກບຶນຮ່ຳຮຽນເປັນປີ ໆ ເພາະເຈົ້າຍອມໃຫ້ການມາຮົມມີອຳນາດເໜືອປັນຍາຂອງເຈົ້າເອງ* ຄວາມຮູ້ຮອດຂັ້ນປຣິນຍາໂທຂອງເຈົ້າ ບໍ່ໄດ້ຊ່ອຍໃຫ້ເຈົ້າພົ້ນຈາກຄວາມເປັນສັດເລີຍ ຈັ້ງແມ່ນຂ້ອຍເສັຽດາຍທີ່ຂ້ອຍຕ້ອງມາເສັຽເວລາຕັ້ງເກືອບສອງເດືອນ ເວົ້າລົມເຣື່ອງວຽກການບ້ານ–

ເມືອງນຳເຈົ້າ ໂດຍຄິດວ່າເຈົ້າສົນໃຈ ລົມເຣື່ອງນັ້ນນຳຂ້ອຍແທ້ ແລະຂ້ອຍກໍຫລົງເຊື່ອວ່າ ຍ່າງພ້ອຍຄວາມຮູ້, ປະສົບການໃນວຽກການ ແລະການໄດ້ໄປເຫັນບ້ານເມືອງເພີ່ມມາແລ້ວຫລາຍບ່ອນຂອງເຈົ້າ ມັນກໍຄົງຈະເຮັດໃຫ້ເຈົ້າຢາກຂື້ນປຸງຊ່ອຍເຫລືອບ້ານເຮົາຢ່າງຈິງຈັງ ທັງໆທີ່ຮູ້ເຫັນວ່າ ໃນຣະຍະສອງປີທີ່ເຈົ້າມາກຳວຽກ ເຈົ້າກໍບໍ່ໄດ້ເຮັດຫຍັງເປັນຕ່ອນເປັນໂຕທີ່ຈະເອົາໄດ້ວ່າ ເກີດຈາກຄວາມສາມາດຂອງເຈົ້າ ຂ້ອຍກໍຍັງກ້າຫວັງແລະຄິດໃນທາງກຸສົນວ່າ ບາງທີເຈົ້າຜູດຽວອາດຈະເຮັດຫຍັງບໍ່ສຳເຣັດ ອາດຈະມີອິດທິພົນກອນເຈົ້າຢູ່ຫລືວ່າເຈົ້າເປັນຄົນຂີ້ຍ້ານ ຂ້ອຍຄິດແບບນີ້ ຈຶ່ງຢາກລົມນຳເຈົ້າ ເພື່ອໃຫ້ເຂົ້າໃຈດີຂື້ນກ່ຽວກັບໂຕເຈົ້າ ເພື່ອຢາກດຶງ-ຄວາມຮູ້ຂອງເຈົ້າໃນປູມອອກມາໃຊ້ ແຕ່ຂ້ອຍມາຮູ້ທ່າງ-ແລງໆນີ້ວ່າ ໃນປູມເຈົ້າມັນມີແຕ່ໃສ້ອັນຂົດຂ້ຽງງ້ຽວເໝັນ-ເນົ່າ ແຕ່ແມວກິນທີ່ເຂົາແຊ່ໃສ່ນ້ຳກ້ອນໄວ້ໃນຮ້ານອາຫານກ່ອນເອົາໄປເຮັດ ນ້ຳກ້ອນເປື່ອຍໝົດກໍແມ່ນເນົ່າໂລດ ບໍ່ມີຫຍັງສົດ ແລະໃນຫົວເຈົ້າມັນກໍມີແຕ່ຂີ້ເລື່ອຍ! ຊອກເຊາະຫາແຕ່ແມວອະກຸສົນ ເວລາທັງໝົດ ການໄປຫາມາສູ່ຂອງເຈົ້າ

ກໍເພື່ອໄປລົງເອີຍແບບບ່າງແລງນີ້ເທົ່ານັ້ນ ຂ້ອຍເສັຽໃຈທີ່ເຈົ້າແປເຈຕນາຂອງຂ້ອຍຜິດ ເພາະເຈົ້າບໍ່ເຄີຍຄິດຫຍັງໃຫ້ດີ ແລະສູງສົ່ງໄປກວ່ານີ້ ຕັ້ງແຕ່ເຈົ້າເກີດມາ! *ຂ້ອຍຈະບໍ່ຄຽດເລີຍ ຖ້າເຈົ້າເຮັດໃຫ້ແຕ່ຂ້ອຍຜູ້ດຽວຜິດຫວັງໃນໂຕເຈົ້າ ແຕ່ອັນນີ້ເຈົ້າສ້າງຄວາມຜິດ-ຫວັງ ໃຫ້ແກ່ພີ່ນ້ອງຮ່ວມຊາດຫລາຍແສນຄົນ ຜູ້ຊຶ່ງກຳລັງຕົກທຸກໄດ້ຍາກ ແລະເຂົາເຫລົ່ານັ້ນ ມີສິດຮ່ວມໃນການຮັບສົງເຄາະຊ່ອຍເຫລືອ ຈາກຕ່າງປະເທດອີກ.*

*ຂໍ້ນີ້ລະຂ້ອຍຊັງເຈົ້າທີ່ສຸດ! ແລະຊັງຜູ້ໃດກໍຕາມ ທີ່ມັນກຳລັງປະຕິບັດຕົນຟຸ້ມເຟືອຍ ແລະຜູ້ກຳລັງຊິເປັນຄືເຈົ້າ!*

*ສົມໃຈ*

× × ×

ເດີກຫລາຍແລ້ວ ສົມໃຈທັງຄຽດ ໃຈຮ້າຍ ທັງເມື່ອຍທັງເຫງົານອນ ຢາກຂຽນໃໝ່ໃຫ້ມັນຄັກໆ ຈົດໝາຍ

ທີ່ຂຽນມາທັງໝົດກໍຍັງບໍ່ຄັກໃຈ ບໍ່ສົມໃຈ ທີ່ຢາກດ່າໃຫ້ເຈັບ
ກວ່ານີ້ ແຕ່ມາຄິດວ່າບໍ່ຢາກເສັຽເວລາ ເສັຽນ້ຳເມິກ ເສັຽ–
ແຮງງານ ເສັຽຄຳເວົ້ານຳຜູ້ຊາຍຊົ່ວ ໆ ແບບນີ້ຕື່ມອີກ ແມ່ນ
ແຕ່ອິມາທິດຽວ ນາງເລີຍພັບເຈັ້ຽຈົດໝາຍທັງສີ່ກ້ານ ຍັດໃສ່
ໃນຊອງດຽວກັນ ມັນຊິອ່ານໝົດຫລືບໍ່ກໍຕາມແຕ່....! ■

24/VII
ຫ້າມຈຳໜ່າຍ

*ຫລົງຂາ*

ຢູ່ໃນໂຮງຊີເນມ້ານັ້ນ ເຂົາຫລິ້ນເຣື່ອງຫຍັງບໍ່ສຳຄັນ ສຳຄັນແຕ່ວ່າ ສາວຜູ້ນຶ່ງນຸ່ງສິ້ນສັ້ນນັ່ງຢູ່ແປະກັນນັ້ນ ກົກຂາຂາວງາມຊວນລູບເອົາກະດ໋ ມັກຂ່າວໂສພົນເຖິງກັບໃຈເຕັ້ນ ແລ້ວໃນທີ່ສຸດ ເມື່ອຊີເນຫລິ້ນມາຮອດບ່ອນມ່ວນບ່ອນມັນ ໂສພົນກໍເລີຍອົດໃຈໄວ້ບໍ່ຢູ່ ຄ່ອຍ ໆ ເດ່ມືໃກ້ເຂົ້າ....ໃກ້ເຂົ້າໄປ.... ແລ້ວກໍວາງປຸ໊ບລົງເທິງຂາອ່ອນຂອງສາວນັ້ນ....

ທາງຝ່າຍສາວບໍ່ໄດ້ສະແດງອາການຕື່ນເຕັ້ນ ພຽງແຕ່ຫັນມາຖາມສຽງມ່ວນສຽງຫວານວ່າ:

– ຂໍໂທດ ບໍ່ແມ່ນຍາອ້າຍຫລົງຂາແລ້ວເບາະນີ້ ?

– *ຫື !* ອ້າຍໂສຕາຕີ່ “*ອ້າຍ... ຄິດວ່າແມ່ນຂານ້ອງ ບໍ່ແມ່ນຈໍາເບາະຈຸ້ມ?*”

• *ວຽນທຽນ* •

# ຈິນກວ່າ...ຄວາມຕາຍ

• ທົ່ງ ອູບມຸງ •



■ ແດດບ່າຍມື້ນັ້ນຮ້ອນຈົນເຮັດໃຫ້ຫລາຍໆຄົນລຸກໄປການເກືອບບໍ່ທັນ ໂຣມເຖິງແມ່ເຮືອນກໍເຈືອບໄປຈົນຈຸຣອດແລງ...

ພໍ່ບຸນຈັນຜູ້ຜົວ ຄ້ອຍລົງເຮືອນໄປການໄດ້ບໍ່ພໍທ່ໃດນາທີ ຈັນທີ ຜູ້ພວມຈຸມ້ອຍຫລັບຢູ່ຕັ້ງອີ້ນວມຫ້ອງຮັບແຂກ ກໍໄດ້ຍິນສຽງຄົນສັ້ນກະດິ່ງປະຕູ

"ເຊິນ...ຣິ! ເອິ້...ເຈົ້າ..."

"ສວັດດີດີ...ຈີ່ຂ້ອຍກະບໍ່ໄດ້ຫວ້ານີ້ ?"

"ບໍ່... ບໍ່ແມ່ນຈີ່ບໍ່ໄດ້ດອກ.... ຄຳສຸກ... ພຽງ–ແຕ່ວ່າ... ຂ້ອຍບໍ່ຄິດວ່າເຈົ້າຈິ່ມີວຽກຫຍັງ ກ່ຽວກັບເຮືອນຫລັງນີ້ ຊັ້ນດອກ..."

"ບ້...ໂອ໋.... ເຮືອນເຈົ້າງາມເບັ້ນຕາຮັກ ອີຫລີໃດ໋ເນາະ ສົມບູນຈົນມັນໄດ້ເບັ້ນຮອດ...ພຸ້ນໃດ໋ເນາະ! ບໍ່... ຂ້ອຍພຽງແຕ່ຢາກແວ່ບອກຂ່າວດີເຈົ້າໜ້ອຍນຶ່ງເທົ່ານັ້ນລະ..."

ຈັນທີ ເດີຍຫລົງໄຫລເກີນຂອບ ນອບກາຍ–ໃຈໃຫ້ຊາຍຜູ້ທີ່ຊື່ວ່າ ຄຳສຸກນີ້ມາແຕ່ເທີງແລ້ວ *ເດີຍສະ ອອນນຳເຂົາ ຈົນຄຶດສະອຽນຂີ້ດຽດໂຕເອງຂຶ້ນມາ...* ແຕ່ຈັນທີ ກໍ່ຍັງບໍ່ຫານສົບແສງຕາ ກັບຄຳສຸກ ຕາມເດີຍ.... ເຖີງແມ່ນວ່າຈັນທີມີຫລັກໃຈແລ້ວ ມີຄວາມເຊື່ອໝັ້ນໃນຄວາມຮັກທີ່ນາງຍໍໃຫ້ຜູ້ຜົວບຸນຈັນເບັ້ນກອງໝຸນ ມີຄວາມຮູ້ສຶກຍິ່ງໃນໂຕທີ່ໃດ ແລ້ວກໍຕາມຈັນທີ ຍັງຈຳຕ້ອງກົ້ມໜ້າພະຍາຍາມເຊື່ອງຄວາມອ່ອນແອ ຂອງຫົວໃຈໂຕເອງ ບໍ່ໃຫ້ຄຳສຸກເຫັນ...

ຄຳສຸກເອົາມືອຶ່ມບ່າໄຫລ່ທັງສອງຂອງນາງຄ່ອຍໆ

"ເຈົ້າເບິ່ງຕາຂ້ອຍແມ້...ເຖີງຂ້ອຍຈີ່ເຮັດຊົ່ວເດີຍ

ຍ່າຍເຈົ້າມາທີ່ໃດແລ້ວກະຕາມ.... ຂ້ອຍເວົ້າຊື່ ໆ ຂ້ອຍຍັງບໍ່ເດີຍພໍ້ຜູ້ຍິງຄົນໃດ ຖືກໃຈຂ້ອຍຄືເຈົ້າ ແລະຂ້ອຍເຊື່ອວ່າເຈົ້າຊິເປັນຜູ້ຍິງທີ່ເໝາະສົມກັບຂ້ອຍທີ່ສຸດ ເຖິງແມ່ນເຈົ້າຊິມີບຸນຈັນຢູ່ແລ້ວ

"ຄຳສຸກ...ຫຸ ໆ ເທາະ...ຂ້ອຍຢາກລືມເຣື່ອງເກົ່າໆໃຫ້ມັນໝົດມັນສັ້ຽງໄປ....ຂ້ອຍພະຍາຍາມກັ້ນຈິດໃຈ ເຮັດຄວາມດີຕໍ່ບຸນຈັນມານີ້ ເຈົ້າຮູ້ຫລືບໍ່ວ່າ ມັນຍາກຊາຊ່ຳໃດ ? *ຂໍໃຫ້ເຈົ້າໃຫ້ໂອກາດຂ້ອຍສ້າງຄວາມດີ ນຳເພິ່ນເບິ່ງແດ່ຊິໄດ້ບໍ່ຈາດນີ້...*"

"ແລ້ວເຈົ້າຄິດວ່າ ໄປນຳຂ້ອຍຊິເຮັດດີບໍ່ໄດ້ຊັ້ນເບາະ ? ຄິດເບິ່ງວ່າເຮົາມີຄວາມສຸກຮ່ວມກັນມາຫລາຍປານໃດແຕ່ກີ້ນະ...ແລ້ວເທື່ອນີ້..."

"ຂໍທານນຳຫລາຍ ໆ ເທາະ ອ້າຍສຸກ...ຂ້ອຍຢາກຢູ່ມິດ ໆ ຄືຂ້ອຍເປັນຢູ່ດູ່ມນີ້ລະ ຂ້ອຍພໍໃຈໃນຄວາມເປັນຢູ່ຂອງຂ້ອຍແລ້ວ ຂໍໃຫ້ເຮົາເຊົາ ລືບລ້າງ ລືມກັນຊະ..." ຈັນທີ ກັ້ນໃຈເວົ້າບໍ່ໃຫ້ສຽງສັ່ນ ເພາະນັ້ນເປັນທາງດຽວທີ່ຊິເຮັດໃຫ້ກຳລັງໃຈຂອງນາງເຂັ້ມແຂງຂຶ້ນ ນາງຕ້ອງບື້ອງກັນບໍ່ໃຫ້

ຄວາມຢາກ–ມັກມ່ວນ ເຂົາຄອບຄອງໃຈນາງຄືນອີກ...ໂດຍ
ສະເພາະເມື່ອນາງຄິດຮອດບຸນຈັນແລ້ວ

"ບໍ່ເປັນຫຍັງ... ຂ້ອຍໃຫ້ເວລາເຈົ້າຕັດສິນໃຈ
ອີກ ໓–໔ ຊົ່ວໂມງ... ຈັກຫົກໂມງແລງ ຂ້ອຍຊິມາຮັບເຈົ້າ
ຢູ່ແຈຖນົນ ຫລັງຕຶກໂຕນັ້ນຫັ້ນເດີ.... ໃຫ້ແຕ່ງເຄື່ອງພ້ອມ
ຂ້ອຍຊິໄປບາງກອກ ຄືນນີ້ເລີຍແຫລະ.... ກໍຫາໄດ້ຮັບໜ້າທີ່
ປະຈໍາຢູ່ພຸ້ນເລີຍ.... ໄປລະເດີ້.... ພໍ້ກັນຫົກໂມງແລງ..."

ຈັນທີ ບໍ່ຽງໜ້າພີ ເມື່ອຄໍາສຸກກັ້ມໜ້າລົງຊິຫອມ
ແກ້ມລາ.... ເຂົາເລີຍບ່ອຍສຽງຫົວໃຫ້ແລ່ນລົງຮູດສອງ ສາມ
ບາດ.... ຄືຜູ້ທີ່ຮູ້ວ່າ ຕົນເປັນຜູ້ຊນະ....ແລ້ວຈຶ່ງລົງເຮືອນພີ
ໄປ....

ຈັນທີຢືນຊຶມຢູ່ບໍ່ອງຢ້ຽມດົນປານໃດບໍ່ຮູ້ ຈົນຮູ້
ສຶກມີຍອດນ້ໍາອຸ່ນ ໆ ຕົກລົງຖືກແຂນນາງ ຈຶ່ງຮູ້ສຶກໂຕຢ່າງເຂົ້າ
ຫ້ອງນອນ ຫລຽວເຫັນຕຽງຮູ້ສຶກວ່າໃຫຍ່ໂຕ ຈົນເຮັດໃຫ້
ນາງຮູ້ວ່າ ມີໂຕນາງຜູ້ດຽວ ທີ່ນອນຢືນຈິ້ງໜ້າຕໍ່ສູ້ກັບໂລກ
ກວ້າງ

ຫລຽວເຫັນຮູບທີ່ຢອງຢູ່ເທິງຫົວຕຽງ.... ຮູບຂອງ

ນາງກັບຂຸນຈັນຖ່າຍຄູ່ກັນຕອນແຕ່ງດອງ ພິກເບິ່ງດ້ານຫລັງ.... ນາງເອງເປັນຜູ້ລັກຂຽນໄວ້ວ່າ *"ມີແຕ່ຄວາມຕາຍທີ່ນັ້ນລະ ທີ່ຈິພາກນ້ອງຈາກອ້າຍໄດ້"*

ຄິດເບິ່ງວ່າຂຸນຈັນດີຕໍ່ນາງປານໃດ ລາວໄປຮຽນຕ່າງປະເທດຕັ້ງຫລາຍປີ...ໂຕຜູ້ເປັນຊູ້ຢູ່ບ້ານ ຢູ່ທ່າງຫລິ້ນບ່າວຫລິ້ນຈົນບໍ່ມີຂອບເຂດ..... *ຜິດພາດຈົນມານທົວຂົນເກືອບເກີດກະຫລາຍເທື່ອ* ພໍຂຸນຈັນຮຽນສຸດກັບມາເລົາກໍ່ມາອອຍໃຫ້ນາງກັບໃຈໄດ້ໃໝ່ ຈຶ່ງວ່າໄດ້ເອົາກັບເລົາມາແລ້ວຈິບໍ່ໃຫ້ນາງຮັກບູຊາ ອ້າຍຂຸນຈັນໄດ້ຈັ່ງໃດ ? *ມີແຕ່ຄວາມຕາຍທີ່ນັ້ນແຫລະ ທີ່ຈິມາເລີບລ້າງພາກນາງກັບຂຸນຈັນໄດ້*...ນາງຈິຊື່ສັດສຸຈະຣິດ ຕໍ່ອ້າຍຂຸນຈັນຈົນກວ່າຜູ້ໃດ໋ ຜູ້ນຶ່ງຕາຍໄປກ່ອນ

ຄິດປຽບໃສ່ຄຳສຸກ...ຊາຍຜູ້ນັກມ່ອນ ເຖິງຈິມີຄວາມຮູ້ ການງານດີ *ແຕ່ກໍ່ບໍ່ຄ່ອຍມີຫລັກອຸດົມການໃນຊີວິດເອົາຈັກດີ້*..... ມີແຕ່ກິນກັບຫລິ້ນ ເປັນ "ເພຼີຍ໌ບ໋ອຍ" ເລື່ອຍ ໆ ມາຈົນເລີຍວັຍໜຸ່ມ

ຈັນທິລຸກຂຶ້ນຈາກຕຽງ ປຸບປັບ....ນາງຫັນໄປຍິ້ມ

ໃສ່ກະຈົກ ເອີ່ຍປາກເວົ້າກັບໂຕເອງ ແບບຄົນຕັດສິນໃຈເດັດຂາດແລ້ວວ່າ

"ເຈົ້າເປັ່ນຄົນຫລາຍໃຈເບິ່ງ ຈິບໍ່ໄດ້ເບາະ ? ລືມຈື໊ະ ອ້າຍຄຳສຸກ ເລົ່າໄປຢູ່ພຸ້ນແລ້ວ ກະຄືຈິແລ້ວກັນໄປຈົນກວ່າຈິຕາຍຈາກກັນ....ອ້າຍບຸນຈັນເຊື່ອນ້ອງເທາະ"

ແລງນັ້ນ ຈັນທີ ນ້ຽມເຮືອນຊານກ້ຽງສະອາດດີ ດ້ອຍຈິດໃຈເປັ່ນປກກະຕິທຸກປະການ....ອີກຈັກພ່ອຍ ບຸນຈັນກະຈິກັບມາເຮືອນ ມາຫາເມັຽຜູ້ລືມຄວາມຫລັງ ຕັ້ງໃຈສ້າງຊີວິດໃໝ່ ມາຫາແມ່ເຮືອນຜູ້ຊື່ສັດ ຜູ້ຈິມີແຕ່ຮັກດຽວ ຈົນກວ່າຈິຕາຍຈາກກັນ

*ຫົກໂມງຍັງຊາວ* ບຸນຈັນຈັ່ງມາຮອດເຮືອນ ຈົ້ງມືວຽກຊູມໂຕລາວພົດມື້....ພໍເຫັນໜ້າເມັຽ ຈັ່ງເຫັນຮອຍຍິ້ມເປັ້ງອອກມາ

"ອ້າຍຈັນ ນັ່ງເຈົ້າເມື່ອຍຢູ່ຫ້ອງຮັບແຂກນີ້ກ່ອນກະໄດ້ ເດີ້.... ນ້ອງຈິໄປເຮັດນ້ຳໝາກໝາວເຢັ່ນ ໆ ມາໃຫ້ກິນຈັກພ່ອຍຄ່ອຍອາບນ້ຳກິນເຂົ້າ"

ບຸນຈັນຍິ້ມ ແນມນຳຫລັງເມັຽເຂົ້າໃນຄົວໄວ່ ໆ

ຈັ່ງຊີ້ແລ້ວເຮັດໃດຊິບໍ່ໃຫ້ບຸນຈັນພູມໃຈນຳຈັນທີ.... *ຫົກໂມງຍັງຫ້າ* ບຸນຈັນດື່ມນ້ຳໝາກພາວ ແລ້ວກໍ່ຖືກໄລ່ໃຫ້ໄປອາບນ້ຳອາບທ່າຊິກິນເຂົ້າ

*ຫົກໂມງ* ດຳສຸກມາຖ້າຢູ່ຕາມນັດ

*ຫົກໂມງຫ້າ* ດຳສຸກດູດຢາໝົດສອງກອກພໍດີກໍເຫັນຈັນທີ ຫິ້ວກະເປົານ້ອຍ ໆ ອອກມາ ເຂົາພ້າວໄຂປະຕູຣົດໃຫ້ ແລ້ວຂັບຣົດອອກໄປທັນທີ

*ຫົກໂມງຊາວ* ດຳສຸກຈອດຣົດຕິດແຄມຂອງເຂົາທັນພ້າມາຫານາງ ຫວັງຫາຄວາມສຸກໃຫ້ສົມ ອົດພໍກັນມາດົນນານ ແຕ່ຈັນທີຍັງບໍ່ຮຽງບ່າຍ ບໍ່ຍອມໃຫ້ເຂົາເຮັດຫຍັງນາງຈົ່ມຄ່ອຍ ໆ ຄືເວົ້າກັບໂຕເອງວ່າ....

*"ອົດອີກຈັກຫ້ານາທີກ່ອນເທາະ ບຸນຈັນກະຊິຕາຍ ຍ້ອນຢາທີ່ນ້ອງປະສົມໃສ່ນ້ຳໝາກພາວໃຫ້ເລົາກິນ... ແລະນ້ອງກໍຈະເປັນອິສຣະຈາກຄຳສາບານຂອງນ້ອງເອງທີ່ວ່າ ຈົນກວ່າຄວາມຕາຍ ຈະພາກເຮົາຈາກກັນ* ■

# ບຸນແທນບາບ

● *ເລົາຮູ້ດີວ່າ ລອດຕາຍຢ່າງຫວຸດ ຫວິດເທື່ອນີ້ ຍ້ອນໃຜ ?*



● *ໄຜ່ ມາລຳ* ●

ລາ ກັບ ມິ ເບິ່ນສ່ວງອທີ່ຮັກແພງກັນຫລາຍທີ່ສຸດ ຈົນຈ່າຈົນລືພົດບ້ານ ເບິ່ນສ່ວງອຮັກ ສ່ວງອແພງກັນ ກ່ອນອ້າຍກັບນ້ອງ ລາງ (ຫລາຍ ໆ) ດູອີກຈ້າ ມີຫຍັງກໍ່ນກັນ ໄປຫລິ້ນໄປທ່ຽວໃສ ແປວ່າບໍ່ຍອມຫ່າງກັນ ຕິດກັນປານເງົາກັບໂຕຄົນ... ໃພມີບັນຫາຫຍັງຫຍຸ້ງຍາກ ກໍ່ປຶກສາຫາລືແກ້ໄຂຊ່ອຍກັນ.... ໃຫ້ວ່າບໍ່ເຄີຍມີເຣື່ອງຂັດໃຈກັນຈັກເທື່ອເລີຍ ຕັ້ງແຕ່ຫລິ້ນນຳກັນແຕ່ຍັງນຸ່ງໂສ້ງເອງບໍ່ທັນເບິ່ນ... ບໍ່ແຕ່ລາ ກັບມີທີ່ມັນທີ່ເບິ່ນສ່ວງອກັນ ພໍ່ຂອງທັງສອງ ກໍເບິ່ນ

ສ່ຽວທີ່ຮັກແພງກັນ ຮັກກັນ ສຸດຊີວິດກໍ່ວ່າໄດ້.... ເຄີຍຫລິ້ນ ກິນສຸກດິບນຳກັນມາ ຕັ້ງແຕ່ຍັງບໍ່ທັນໄດ້ລູກ ໄດ້ເມັຽ ຈົນເຖົ້າຜອງດຽວນີ້ ເຄີຍໄດ້ຊ່ອຍເຫລືອຊຶ່ງກັນແລະກັນມາຕລອດ ຈົນຕົກລູກຕົກເມັຽ ທັງສອງກະຍັງຮັກກັນບໍ່ມີບ່ຽນແປງ ແຖມຍັງລາມຮັກກັນມາຮອດລູກທັງສອງນໍ້ອີກ

ທັງສອງ ເປັນນາຍພານໃຫຍ່ມືດີຂອງໝູ່ບ້ານ ຕັ້ງແຕ່ທັງສອງຍັງໜຸ່ມແໜ້ນ...ຈົນດຽວນີ້ ບໍ່ຮູ້ວ່າທັງສອງພິຄາດຊີວິດສັດປ່າລົງເປັນຈຳນວນຈັກພັນ ໆ ຊີວິດແລ້ວ.... ບໍ່ເວົ້າຮອດນົກຮອດໜູລະ ເອົາແຕ່ພວກເສືອ...ກວາງ ຟານ ໝູ່ນີ້ທັງສອງພາກັນໂຫ່ ຈົນໄດ້ຂາຍເປັນຣາຍໄດ້ປະຈຳເຮືອນ ບໍ່ໜ້ອຍເລີຍ...ຈົນວ່າວິຊາໂຫ່ເນື້ອຂອງທັງສອງ ໄດ້ຕົກເປັນມໍຣະດົກສືບມາຮອດ ລາ ກັບ ມີ ອີກ ຍ່າງເຕັ້ນພາກມູນ...ຄິດວ່າຫາກທັງສອງລົ້ມຫາຍຕາຍຕາຍຈາກໄປແລ້ວ ກະຄືຊິແມ່ນ ລາ ກັບ ມີນີ້ລະ ຊິແທນມູນພໍ່....

ບໍ່ທໍ່ນັ້ນ ມີຍັງມັກຄິດຄົ້ນປະດິດ ປືນ ດິນ ປືນ ກະສຸນປືນແບບງ່າຍ ໆ ໄດ້ເກັ່ງອີກ ເວົ້າໄດ້ວ່າມີ ເກີດມາເພື່ອປືນ ໂດຍສະເພາະ ວ່າຊັ້ນເທາະ.... ແຖວບ້ານນັ້ນຄົນປືນໃຜ

ເປັນຫຍັງ....ຢາກໄດ້ລູກປືນຍັດເບາະ...ແມ່ນແລ່ນມາຫານີ ນີ້ໂລດແລ້ວຊິສົມຫວັງ ແລະມິກໍ່ບໍ່ເອົານຳແມງ

ລາ ກັບ ມິ ຍິງປືນແມ່ສ່ຳໆພໍ່ ຫລີດຮອນນີ້ຫາ ລາຍັງບໍ່ຕາຍ ແລະມິຍັງຍິງປືນຢູ່ຄືເກົ່າ ທັງສອງອາດຊິຍິງແມ່ກວ່າພໍ່ຊ້ຳອີກ

ພໍ່ຂອງມິ ເປັນທະຫານ ຍົດ ພັນຕີ ສ່ວນພໍ່ຂອງລາ ເປັນພໍ່ນາທັມມະດາ ໆ ທີ່ອ່າວຮັ້ງມີແຕ່ຈັກນ່ອຍ ທັງສອງພໍແຕ່ມີຍາມວ່າງ ແມ່ນຊວນກັນເຂົ້າປ່າໂລດ.... ບໍ່ກັບລູກທັງສອງ ກໍກັບໝູ່ຄູ່ທີ່ເຄີຍໄປນຳກັນ...ລາງເທື່ອ ໄປກັນເປັນສິບໆເອົາຣົດ ກັດກັດທະຫານໃສ່ໄປ

ເປັນຫຍັງ ລາ ຈຶ່ງຕາຍ ແລະ ມິ ຈຶ່ງບໍ່ຈັບປືນອີກລອງ ໆ ມາຟັ້ງເບິ່ງເຣື່ອງຣາວທີ່ອອກຈາກປາກຂອງຜູ້ທີ່ຮູ້ເຣື່ອງນີ້ດີລອງ ໆ ເບິ່ງດູ໊ !

ວັນເສົານັ້ນ ທັງສາມພໍ່ລູກ (ພໍ່ຂອງລາບໍ່ໄດ້ໄປເພາະຄາວຽກນຳນາ) ກັບລູກນ້ອງຂອງພໍ່ຂອງ ມິ ທ້າຄົນ ຂັບຣົດທະຫານ ອອກປ່າຕາມເຄີຍ ພໍຮອດບ່ອນ ກໍພາກັນວາງເຄື່ອງມື ປືນຜາໜ້າໄມ້ ໄວ້ໃນຣົດແລ້ວພາກັນອອກໄປຫາບ່ອນ

ຊິຕັ້ງດ້າຍນ້ອຍ ໆ ນອນ ໄກຈາກຣົດໄປໄກເຕີບ

ພໍໄດ້ບ່ອນ ພໍ່ຂອງມີຈຶ່ງສັ່ງໃຫ້ລູກນ້ອງສາມຄົນ ໄປຫາຕັດໄມ້ມາປຸກເຕັນ... ເຫລືອອີກສອງຄົນຂຸດດິນຖາງຫຍ້າ ຖ້າ ໂດຍມີພໍ່ຂອງ ມີ ເປັນຄົນສັ່ງການ....ລາກັບ ມີ ບໍ່ມີວຽກ ຈຶ່ງພາກັນຍ່າງມາຫາຣົດ....ພໍ່ຂອງ ມີ ເລີຍຮ້ອງໃສ່ວ່າ

"ສູຢ່າພາກັນໄປຫລິ້ນປືນຢູ່ຣົດພັ້ນເດີ້!" ພໍ່ປານ ບອກວ່າ – ໃຫ້ສູພາກັນໄປຫລິ້ນ ປືນເດີ້!

ມີ ຈັບປືນທີ່ວາງຢູ່ພື້ນຣົດຂຶ້ນມາພິຈາຣະນາ ມັນ ເປັນປືນແບບໃໝ່ ທີ່ມີຣະບົບຍິງໄດ້ໄວ ແລະເທື່ອລະຫລາຍໆ ລູກທີ່ສຸດ ກົລໄກຕ່າງໆ ສລັບຊັບຊ້ອນ ແຕ່ກະບໍ່ສຸດຄວາມ ສາມາດຂອງນັກເລງປືນຄື ມີ ທີ່ຊິເບິ່ງ ໆ ພ້ອຍດຽວກະເຂົ້າ ໃຈ....

ສຸດທ້າຍ (ຍັງບໍ່ສຸດເທື່ອດອກ) ເຂົາຍົກ ປືນຂຶ້ນ ແນໃສ່ງ່າໄມ້ສູງຢູ່ໄກຈາກຣົດປະມານຊາວບາດກ້າວ ນົກຊາຕາ ຂາດ ຈັບງ່າໄມ້ແຫ້ງ ຫລຽວຊ້າຍຫລຽວຂວາລັອກແລັກ ມີ ແນຢູ່ນິດນຶ່ງກໍລັ່ນໄກ ໂປ້ງ ນົກນ້ອຍໂຕນັ້ນຟັງຈາກງ່າໄມ້ຕົກ ລົງພຸ່ມໄມ້ນ້ອຍ ໆ ເບື້ອງລຸ່ມທັນທີ ທີ່ສຸດສຽງປືນ

"ລາ ໄປເກັບໄບ້ສ່ຽວ ?!" ມີບອກ

ລາ ໄປຊອກຢູ່ເທິງເຕີບ ບໍ່ເຫັນ ຈຶ່ງຍ້າຍໄປຊອກອີກພຸ່ມນຶ່ງໃກ້ໆ ກັນ....ມີ ຈັບມັ້ນຈັບນີ້ໃນປືນອີກບຶດນຶ່ງແລ້ວ ປີນຂຶ້ນໄປ ຢືນເທິງຫົວຣົດ ປາກຮ້ອງຖາມວ່າ:

"ເຫັນແລ້ວບໍ່ສ່ຽວ ? ທາງຕາ ແລະມືກໍແນປືນ ໃສ່ງ່າໄມ້ສູງໆ ຕົ້ນເກົ່າ ຫວັງຊິລອງຄວາມແມ່ ແລະໃຫ້ລົງມືຂຶ້ນອີກ...ພໍດີນົກນ້ອຍໂຕນຶ່ງບິນເຈີດມາແຕ່ທາງໃດບໍ່ຈັກ ໄດ້ຣະດັບຍິງພໍດີ ມີລັ່ນໄກໂປ້ງທັນທີ ທັງໆ ທີ່ບໍ່ໄດ້ຣະວັງຫຍັງເລີຍ ຄວາມແຮງຂອງປືນດັນ ມີ ຈົນຕົກຈາກຣົດ....ແຕ່ເທື່ອນີ້ມັນບໍ່ໂປ້ງລູກດຽວສາແລ້ວ ລູກປືນໄຫລອອກຈາກປາກກະບອກປານຫ່າຝົນ ໂດຍທີ່ມີ ຍັງຈັບດ້າມປືນແໜ້ນ ຫາກແຕ່ວ່າປາຍກະບອກປືນຫັນຊ້າຍຫັນຂວາຢູ່ບໍ່ເຊົາ....ພໍສຸດສຽງປືນຕັບມັ້ນ ກໍໄດ້ຍິນສຽງຄາງຮ້ອງ ໂອຍ–ໂອຍ ຢູ່ທາງພຸ່ມໄມ້ທີ່ລາ ໄປຊອກເກັບນົກຢູ່....ມີ ໄດ້ສະຕິ ຖິ້ມປືນ ແລ່ນໄປຫາພຸ່ມໄມ້ທັນທີ

ພາບທີ່ເຫັນຕໍ່ໜ້າ ເຮັດໃຫ້ມີເກືອບເບັ່ນລົມ...ລາ ເຮັດໜ້າບູດບ້ຽວ ໜ້າເອິກແດງຈ່ານໄປຍ້ອມເລືອດສົດໆ ບໍ່

ຮູ້ວ່າຖືກເຂົາໄປຈັກລູກ ເຫັນແຕ່ວ່າ ເອີກມຸ່ນອຸ້ຍປຸ້ຍໄປເໝີດ ມີ ກອດເອົາລາໄດ້ ກໍອຸ້ມແລ່ນມາຫາຣົດ ພໍດີກັບລູກນ້ອງສາມຄົນທີ່ໄປຕັດໄມ້ ແລ່ນມາຮອດ ຈຶ່ງເອົາ ລາ ໃສ່ຣົດ ພ້າວຂັບເຂົ້າມາໃນວຽງ

ຍັງບໍ່ທັນຮອດວຽງຈັນ ລາກໍຂາດໃຈໃນອ້ອມກອດຂອງ ມີ....ມີນ້ຳຕາໄຫລເປັ່ນທາງ ໂສ້ງເສື້ອແດງເປື້ອນເລືອດ ພໍປານວ່າມີຖືກປືນເອງ...ນັ່ງມິດຊີງລຶງມາຕລອດທາງ

ພໍ່ຂອງ ມີ ມາບອກພໍ່ຂອງລາ ພ້ອມກັບໄທບ້ານອີກເຈັດແປດຄົນ...ທຸກຄົນກຽມພ້ອມແລ້ວ ທີ່ຈະຢຸດຍິ້ງ ພໍ່ຂອງລາ ຫາກທາງນັ້ນເກີດບ້າພ້າມດຂຶ້ນມາ!

"ຈັ່ງຊີ້ແລ້ວສ່ຽວ.... ໂຕຊິເຮັດຈັ່ງໃດກະເຮັດ.... ບັກມີກະຖືກເຂົາຈັບໃສ່ກະແຈມີ່ຢູ່ປິດຕຳຣວດພຸ້ນ... ຊິເອົາມັນເຂົ້າຄຸກກະເອົາເຂົ້າ ຄັນໂຕຄຽດໃຫ້ມັນຫລາຍ ຈົນອົດບໍ່ໄດ້ ຊິຂ້າກະຂ້າ ຂອງມັນກະບໍ່ເຈຕນາ"

ພໍຮູ້ວ່າລູກໂຕເປັ່ນຫຍັງໄປກໍ່ມັນລ່ະ ພໍ່ຂອງລາກະດີບ້າຂຶ້ນມາທັນທີ ກັດແຂ້ວກ້ອດກ້ອດພ້າແດງ ໂຕສັ່ນບົ້ນໆ ພິດຟາດພວກທີ່ຫຸ້ມລ້ອມຈັບໂຕໄວ້ ປະກາດວ່າ:

"ມັນຕ້ອງຊິວິດຕໍ່ຊິວິດໂອ້ຍ!"

ເດາະດີ ຕອນນັ້ນພໍ່ຂອງ ລາ ບໍ່ມີ ປືນ ຈຶ່ງບໍ່ເກີດເຫດສລົດໃຈຂຶ້ນອີກ

ເຊົ້າມື້ຕໍ່ມາພໍ່ຂອງລາ ຍ່າງຂຶ້ນ ປົດຕຳຣວດ ຂໍເອົາມືອອກຈາກຫ້ອງຂັງ ບອກວ່າບໍ່ເອົາເຣື່ອງຫຍັງທັງໝົດ.

ໃຜ ໆ ກະຄິດປລາດໃຈ ງຶດພໍ່ທົວຊິແຕກ ລູກຊາຍຕາຍທັງຄົນ ພໍ່ບໍ່ເອົາເຣື່ອງ ແລ້ວຍັງບໍ່ຍອມໃຫ້ເຈົ້າໜ້າທີ່ດຳເນີນຄະດີເອງອີກ

ແຕ່ໃຜ ໆ ກະຄົງຊິບໍ່ຮູ້ດອກວ່າ ພໍ່ຂອງລາກະມີເຫດຜົນຂອງລາວເອງຄືກັນ ເຫດຜົນທີ່ລາວເອງຄິດວ່າ ສົມຄວນ ແລະພໍ່ຊິໄຖ່ຄວາມຜິດຂອງ ມີໄດ້

ລາວຄິດພໍ້ຕອນທີ່ຍັງນຸ່ມແໜ້ນ ທີ່ລາວແລະພໍ່ຂອງມີ ເດີຍອອກໄປໂທ່ເນື້ອນຳກັນສອງຄົນ....ລາວຈຶ່ງໄດ້ຄັກແນ່ບໍ່ມີຫລົງລືມ ເຖິງພາບເຫດການມື້ນັ້ນ ມື້ທີ່ລາວລອດຕາຍຈາກໂອ້ງເລັບຂອງເສືອໂຄ່ງໃຫຍ່ໃນປ່າເລິກ

"ເອົາ ! ສ່ຽວ ນີ້ງຂຶ້ນຫ້າງກ່ອນ ແລ້ວກູຈັ່ງຊິຂຶ້ນຫ້າງກູ" ລາວປີນຂຶ້ນຕົ້ນໄມ້ ເພື່ອຊິໄປຂຶ້ນຫ້າງເຈົ້າຂອງ

ໂດຍມີພໍ່ຂອງ ມີ ຢືນຮັກສາການຢູ່ທາງລຸ່ມ

ເກືອບຮອດງ່າທໍາອິດຂອງຕົ້ນໄມ້ໃຫຍ່ນັ້ນ ລາວກະເກືອບຫລົງອາງແຂນຈາກກອດຕົ້ນໄມ້ ໃນເມື່ອອີກບໍ່ຮອດພໍ່ວາ ເສືອໂດ່ງລາຍ ທໍ່າທ່າຍ ໝູບຄາງຣື່ ໆ ຢູ່ເທິງງ່ານັ້ນ ຕົນອ່ອນ ເຂົ້າອ່ອນ ຍັງບໍ່ໄດ້ຄິດອ່າຊິເຮັດຈັ້ງໃດດີ ຈຶ່ງຈະລອດຈາກໂອ້ງເລັບເສືອໃຫຍ່ ສຽງປືນຈາກທາງລຸ່ມກໍ່ດັງກ້ອງຂຶ້ນ...ເສືອໃຫຍ່ຮ້ອງອ້າກ ໂຫງ້ຍລົງຈາກງ່າໄມ້ ຕົກລົງດິນດັ້ງສນັ້ນ

ເລົາຮູ້ດີອ່າ ລອດຕາຍຢ່າງຫອຸດຫອິດເທື່ອນັ້ນຍ້ອນໃຜ ?

ຈະອ່າເບັ້ນຍ້ອນບຸນຂອງມີກໍ່ອ່າໄດ້ ທີ່ພໍ່ຂອງເຂົາໄດ້ສ້າງບຸນຄຸນຖ້ອມຫົວກັບພໍ່ຂອງ ລາ *ບາບຂອງ ມີ ຈຶ່ງຕຶກລຶບລ້າງໄປດ້ວຍສໍານຶກຄຸນຂອງພໍ່ລາ* ອັນນີ້ມີຮູ້ດີ ເຂົາປະຕິຍານຕົນອ່າ ຈະບໍ່ເຊົາຈັບປືນເດັດຂາດ ເຖິງຊິມີໝູ່ຄູ່ຂໍຮ້ອງໃຫ້ເຮັດໃຫ້ແປງ ໃຫ້ອັດລູກໃຫ້ ຊິໃຫ້ເງິນ ໆ ມີກໍ່ບໍ່ເອົາ...ເຂົາຍໍ້າອ່າບາບຂອງເຂົາເທື່ອຕໍ່ໄປ ອາດຈະບໍ່ມີບຸນໃດມາຫົດແທນໄດ້ແບບນີ້ອີກ ■

*ຍຸ້ມເບີ້ຍບໍ່ອອກ*

ທ່ານອະທິບໍດີ ນອນນຸ່ງເຄື່ອງເພື່ອໄປນອນດ້າຍຕາມລະບຽບຂອງທະຫານຂ້າຣາຊການທີ່ດີ ພໍດີມີສຽງເຄາະປະຕູພ້ອມກັບຄຳຖາມຄ່ອຍ ໆ ພໍໄດ້ຍິນດັງຂຶ້ນວ່າ:

– ຈັ່ງໃດທີ່ຮັກ.... ໄປບໍ່ມື້ເຊີ້....?

ສົງສັຍຢ່າງແຮງ ທ່ານອະທິບໍດີໄຂປະຕູອອກມາທັງແຮງ ພໍເຄີນຂັບຣົດປະຈຳຕຳແໜ່ງຢືນຂາສັ່ນຢູ່ຕໍ່ໜ້າຫ້ອງ ເລີຍຮ້ອງຂຶ້ນດັບທີບ

– ໂອ່....! ດຽວນີ້ມຶງເຫັນກູເປັນທີ່ຮັກຂອງມຶງແລ້ວນໍ....! ກູຫາກວ່າແລ້ວ ທ່າທາງມຶງມັນຄືຄົນຜູ້ແມ່ ກູຫາກວ່າ....! ມຶງຊິມາກ້ຽວກູຊັ້ນເບາະ...?

– ຂະນ້ອຍ....ຂໍໂທດຫລາຍ ໆ ຂະນ້ອຍ....! ບໍ່ແມ່ນແນວນັ້ນດອກ.... ຂະນ້ອຍ.... ຂະນ້ອຍຄິດວ່າແມ່ນ....ແມ່ນຍາເອື້ອຍຕີຊັ້ນດອກ !!!

● *ວຽນທຽນ* ●

• ກໍ່ແກ້ວ ເອດເມດ •

24 / VII

# ລຸງສິນມັກຍ້ອງ

• ຄາຖາທີ່ລຸງສິນມັກທ່ອງ ແຕ່ເຊົ້າ
ຈົນຄ່ຳ ແມ່ນບົດທີ່ວ່າ:
ບໍ່ເປັນຫຍັງດອກຂະນ້ອຍ
ບໍ່ເປັນຫຍັງ ແລະ ບໍ່ເປັນຫຍັງ

ຍັງຈື່ໄດ້ດີວ່າ ລຸງສົມມາປາກົດຕົວໃນບໍຣິເວນ–ເດີ່ນເຕະບານຫລັງວັດທາດຝຸ່ນ ຫລືຫລັງຜາມໄຊຕໍ່ໜ້າວິທ–ຍາລັຍວຽງຈັນ ຊຶ່ງໃນວັນນັ້ນພວກຂ້ອຍກຳລັງເຕະບານກັນຢູ່

ລາວຢູ່ໃນຊຸດເສື້ອດຳ ສົ້ງສີນ້ຳແກ່ເກົ່າໆ ມີຜ້າຂາວມ້າສີລາຍໆ ມັດແອວ ອາຍຸປະມານ ໔໔ ປີຢ່າງຕ່ຳ.

ລາວມານັ່ງເບິ່ງພວກຂ້ອຍເຕະບານ ຢ່າງສົນອົກ–ສົນໃຈ ນັ່ງເບິ່ງຈົນພວກຂ້ອຍເລີກ ລາວກໍຍັງບໍ່ໜີ.

ຂ້ອຍກັບບັກບ້ອມແລະບັກພັນໝູ່ຢູ່ວັດນຳກັນ ສົມ

ໃຈຈຶ່ງເຂົ້າໄປນັ່ງລົມກັບລາວ.

ຕອນນີ້ຈຶ່ງເຫັນໄດ້ຄັກວ່າ ລາວເປັນຄົນມີຮູບ-ຮ່າງສົມທັດຮັດກຸມດີ ຂ້ອນຂ້າງຕ່ຳເລັກໜ້ອຍ ຫົວລ້ານແຍ່ ຈະວ່າຈ່ອຍກໍບໍ່ຈ່ອຍປານໃດ ເບິ່ງເປັນຄົນຍິ້ມງ່າຍ ອາຣົມດີ ແວວຕາມີຄວາມອິດູແລະຜູກມິດໄດ້ສເມີ.

"ລຸງເປັນຄົນອົພຍົບຫລົບໜີ ມາຈາກແຂວງ-ຊຽງຂວາງ ມາຢູ່ບ້ານອົພຍົບທ່າດິນແດງທາງໄປທ່າງ່ອນ ເຈົ້ານາຍເອົາມາປຸກຢ້າວແປງເຮືອນໃຫ້ເພິ່ນ ຈົນແລ້ວຮຽບຮ້ອຍ ບໍ່ເອົາເງິນໃຫ້ ລຸງຈຶ່ງບໍ່ມີວິທີຈະກັບບ້ານໄດ້ ຈຶ່ງມາຂໍນົບຂໍ-ໄຫວ້ລູກຫລານ ໃຫ້ຊົດຊ່ອຍລຸງດັ່ງນີ້ແດ່" ລຸງສົມເລົ່າເຣື່ອງທຳອິດສູ່ຟັງ.

"ຄັນຊັ້ນ ຄ່າຣົດໄປບ້ານທີ່ໃດລະລຸງ?" ບັກ-ປ້ອມຖາມ

"ສອງຮ້ອຍຫ້າສິບ" ລຸງຕອບ

ບັກປ້ອມຈົກເອົາໃບຮ້ອຍກີບ ອອກຈາກຖົງມາສເນີຕໍ່ໝູ່ "ເຮົາມີຮ້ອຍນຶ່ງແລ້ວ ໝັກໝອກ"

"ເຮົາມີອີກຮ້ອຍນຶ່ງ" ຂ້ອຍຕອບ

"ເບິ່ງກ່ອນເດີ ເຮົາຄືຍັງຢູ່ເຈັດສິບກີບ" ບັກພັນ ເວົ້າແລ້ວກໍຈົກອອກມາ

ເມື່ອໂຮມເງິນໄດ້ກາຍຄ່າຣົດຕັ້ງຊາວກີບ ແລ້ວກໍ ຍິ້ມໃຫ້ລາວ

"ສາທຸ! ດັ່ນເປັນແນວໃດລຸງຈະກັບມາຫາພວກ ຫລານອີກເດີ ຂໍຢ່າເພົ້າອຸ້ມເພົ້າໄລກັນເນີ"

"ບໍ່ເປັນຫຍັງດອກລຸງ ຖ້າເປັນແນວໃດແລ້ວໃຫ້ ລຸງມາຫາພວກຫລານຢູ່ວັດນີ້ໂລດ ພວກຫລານທັງສາມນອນ ວັດນີ້ລະ"

ພວກຂ້ອຍໄດ້ຍ່າງໄປສົ່ງລາວ ຂຶ້ນຣົດໂດຍສານ ສາຍວຽງຈັນ–ທ່າງ່ອນ ແລ້ວຈຶ່ງພ້ອມກັນກັບມາສູ່ຫ້ອງກ້ອງ ຕະລ່າງກຸຕິວັດທາດຝຸ່ນ ທີ່ເປັນບ່ອນເພິ່ງພາອາສັຍຂອງພວກ ຂ້ອຍຕາມເດີມ.

\+ \+ \+

ປະມານສອງອາທິດຜ່ານໄປ ລຸງສົມກໍໄດ້ມາພົບ ພວກຂ້ອຍ ຢູ່ກ້ອງຕະລ່າງກຸຕິອີກດັ່ງນີ້

"ລຸງຕັດສິນໃຈມາເທື່ອນີ້ ແມ່ນຢາກມາຊອກເຮັດ

ວຽກເຮັດການຢູ່ວຽງນີ້ ຢາກໃຫ້ພວກຫລານຈົດຈ່ອຍໃຫ້ມີບ່ອນຈັ້ນຫ້ອນອນປະຈຳວັນ ບໍ່ໄດ້ເຮັດຊ່າງໄມ້ບື່ອກໆແບ໋ກໆຈຳຊາກຸ້ມມີກຸ້ມເວັນໄປ ຢູ່ບ້ານກໍບໍ່ມີດິນເຮັດໄຮ່ໄຖນາອີຫຍັງດິນດອນຕອນໃດກໍມີເຈົ້າຂອງເພິ່ດແລ້ວ"

ພວກຂ້ອຍຫລຽວເບິ່ງໜ້າກັນດາວນຶ່ງ ບັກບ້ອມຈື່ງສອດຂຶ້ນ

"ພວກຫລານຍິນດີຊ່ອຍໄດ້ສເມີ ບັນຫາແຕ່ວ່າລຸງຈະຍຶດອາຊີບຫຍັງທີ່ມັ້ນແຫລະ"

"ລຸງຈະເຮັດຊ່າງໄມ້" ລຸງສົມເວົ້າພ້ອມທັງຍິ້ມເບັ້ນເຊີງດີອົກດີໃຈ "ເຣື່ອງຊ່າງໄມ້ນີ້ລຸງພໍເຮັດໄດ້ໝົດ ຕັ້ງແຕ່ເຮັດເຮືອນລົງມາເຖິງສານກະຕ່າ–ກະບຸງ ເຮັດໂຕະ ເຮັດຕັ່ງ ພວກນີ້ເຮັດໄດ້ໝົດ" ລາວຢຸດຫັນໃຈໃຫຍ່ຢູ່ບຶດນຶ່ງ "ຖ້າພວກຫລານຕ້ອງການຢາກເຕະໝາກກະຕໍ້ ລຸງກໍຈະສານໃຫ້"

"ດີລະລຸງ" ຂ້ອຍງຶກຫົວຮັບ "ຄັນຊັ້ນມື້ອື່ນນີ້ພວກຂ້ອຍຈະຊອກເຊົ່າເຮືອນໃຫ້ເຈົ້າ ຖ້າລຸງຫາກເຮັດໄດ້ໄປເບັ້ນດັ່ງວ່າແທ້ ພວກຫລານຈະໃຫ້ຄວາມຮ່ວມມືສເມີ" ຂ້ອຍ

ຕົກລົງຢ່າງງ່າຍ ໆ

"ບໍ່ອຶດດອກ ເຮືອນຫວ່າງຢູ່ຄຸ້ມບ້ານຝາຍນີ້ມີ–ເຕັມ" ໝໍຂໍ້ອນສນັບສນຸນ

"ທຸກເດືອນເຮົາຕ້ອງສລະເງິນບອກສ໌ ຜູ້ລະ ນີ–໔ ຮ້ອຍ ເສັງຄ່າເຮືອນໃຫ້ລາວ"

ເບິ່ນອັນວ່າເຣື່ອງຂອງເຣື່ອງກໍໄດ້ຕົກແຕກກັນໄປ ດີນນັ້ນ ລຸງສົມໄດ້ເພິ່ງກ້ອງກຸຕິເບີ້ນທີ່ພັກນອນນິ້ງດີນ.

ເຈົ້າມີໃໝ່ຂື້ນມາ ພວກຂ້ອຍຊອກເຂົ້າປາອາຫານເຫລືອສັນຈາກພຣະແລະເນນມາ ໃຫ້ລາວກິນຮຽບຮ້ອຍແລ້ວກໍແຍກກັນໄປຊອກເຮືອນເຊົ່າ

ໃກ້ຈະເຖິງເວລາສັນເພນ ພວກເຮົາກໍມາພົບກັນອີກ

"ເຮົາຊອກໄດ້ແລ້ວ ຫລັງພັນຫ້າ" ບັກບໍ້ອນເວົ້າສເນີພູ່

"ຢູ່ໃສ?" ພັນຖາມ

"ຢູ່ຖັດເຮືອນບັກສາຍ ໝູ່ເຮົາຫັ້ນລະ"

"ແມ່ງໂມດ ບໍ່ເອົາດອກ ຊອກຫລັງໃໝ່ດີກວ່າ"

"ຕົກລົງແລ້ວເດ"

"ໄປຂໍຫລຸດຈັກສອງ–ສາມຮ້ອຍບໍ່ໄດ້ຫວະ?"

"ບໍ່ໄດ້ ບໍ່ມີທາງ"

"ຕ້ອງໄດ້ນ່າ ຄັນບໍ່ໄດ້ກໍຊອກເອົາຂີ້ໝາແຫ້ງໄປຢາຍໃສ່ເຕັມຫ້ອງເບິ່ນຫຍັງ" ໝໍພັນເວົ້າຕາມພາສາຄົນປາກບໍ່ຈັ່ງ.

× × ×

ເມື່ອຊອກເຮືອນໃຫ້ລຸງສົມຢູ່ແລ້ວ ພວກຂ້ອຍກໍມອຍຫວາງໃຈໄປນຳ

ລຸງສົມໄປຢູ່ບ້ານຝາຍບໍ່ນໍເດືອນ ຊື່ສຽງຂອງລາວກໍແຜ່ຜາຍໄປທຸກຈອກທຸກແຈ ຄົນກ່າວຂານກັນວ່າ ລາວເປັ່ນຄົນດຸໝັ້ນ ເຮັດວຽກໃຫ້ຄົນຢ່າງບໍ່ເລືອກໜ້າ ໜ້າໃດຕາໃດລາວເຮັດໃຫ້ໝົດ ໂດຍບໍ່ເອົາຄ່າຈ້າງຮາງວັນຫຍັງທັງໝົດ

ລາວມີຄະຕິປະຈຳບົດນຶ່ງວ່າ

"ຜີກິນແຮງຮູ້ໝົດ ຄົນກິນແຮງບໍ່ໝົດ" ເກີດເປັ່ນມື້ມາ ມີແຕ່ຄົນມາຮ້ອງໄປແປງໂຕະແປງຕັ່ງໃຫ້ ຕລອດ

ເຖິງເຄື່ອງໃຊ້ຂອງສອຍ ແມ່ນລາວແປງໄດ້ທັງນັ້ນ

ໂຕະຕັ່ງແລະບ່ອງຢ້ຽມ ປະຕູອັດທາດຝຸ່ນ ແມ່ນ ລຸງສົມມາສ້ອມແປງໃຫ້ໝົດ.

ໃນເວລາຕໍ່ມາ ຄຸ້ມອື່ນ ໆ ລ່ວງຮູ້ວ່າລຸງສົມໃຈດີ ເຮັດວຽກເກັ່ງ, ແລະມັກກິນຕຳໝາກຍໍ ກໍພາກັນທະຍອຍມາ ເອົາລາວໄປແປງເຄື່ອງເຮືອນໃຫ້.

ຍາແມ່ແລະຍາເອື້ອຍບາງຄົນ ຈັ່ງແມ່ນປາກຫວານ ກະດັດກະດ້

"ລຸງສົມ, ມື້ນີ້ຊິໃຫ້ນົບຈຳດິນກະຊິນບ ຫລືຈະ ເອົາຫຍັງນຳກະຊິໃຫ້ທັງນັ້ນ ຂໍທານໄປເບິ່ງຕຽງນອນໃຫ້ແດ່ ສິມີຜູ້ອື່ນບໍ່ເຊື່ອໃຈໄດ້ ເລີຍໄປກິນເຂົ້າງາຍນຳກັນພຸ້ນແຫລະ ມື້ນີ້"

ລຸງສົມເກືອບບໍ່ມີເວລາຫວ່າງໄດ້ ລາວມີແຕ່ໄປ ກັບໄປ

ຄາຖາທີ່ລາວມັກທ່ອງແຕ່ເຊົ້າຈົນຄ່ຳ ກໍແມ່ນບົດ ທີ່ວ່າ "ບໍ່ເປັນຫຍັງດອກຂນ້ອຍ ບໍ່ເປັນຫຍັງແລະບໍ່ເປັນ–ຫຍັງ"

ພວກຂ້ອຍໄປໂຮງຮຽນທຸກມື້ ໄດ້ຍິນແຕ່ບັກ–ສາຍຜູ່ຢູ່ເຮືອນແປະລາວເວົ້າສູ່ພົ່ງວ່າ

"ລຸງສົມບ້າຍໍຂນາດເລີຍ ຜູ່ໃດໝັ້ນຍ້ອງແມ່ນເຮັດວຽກໃຫ້ຈົນຕາຍ"

ພວກຂ້ອຍມີແຕ່ເຕືອນໝໍ່ສາຍວ່າ ຢ່າເບັ້ນຄົນມັກນິນທາຜູ່ອື່ນຫລາຍ.

ໝໍ່ນີ້ມີນິໃສຍມັກເວົ້າຂວັນຜູ່ອື່ນສເນີມາ.

+ × ×

ບຸນເດືອນຫ້າປີນັ້ນ ພວກຂ້ອຍໄດ້ພາລຸງສົມໄປຫລິ້ນຫາດດອນຈັນນຳ ຕາງໃຫ້ລາວໄດ້ຮຽນລອຍນ້ຳຂອງແດ່ລາວເຄີຍບອກຂ້ອຍມາເທື່ອນຶ່ງແລ້ວວ່າ ຢາກອາບນ້ຳຂອງແລະຢາກຮຽນລອຍນ້ຳລອງເບິ່ງ.

ເມື່ອໄປເຖິງແຄມຝັ່ງ ບັກສາຍຜູ່ມັກຢອກກໍໄດ້ຍູລຸງສົມລົງນ້ຳດັງໂຫມ

"ມາເສັງລອຍນ້ຳກັບລຸງກໍໄດ້ນ່າ ສາຍ"

ເມື່ອໝໍ່ສາຍໄດ້ຍິນລຸງເວົ້າດັ່ງນັ້ນ ຈຶ່ງພ້າວໂດດລົງໄປ

"ຂ້ອຍລອຍນ້ຳບໍ່ເປັນນ່າລຸງ ສອນໃຫ້ແດ່ດູ້" ພໍສາຍເວົ້າ

"ຖຸ່ຍ! ເຖົ້າຈິຕາຍຍັງລອຍນ້ຳບໍ່ເປັນ ມາພໍ້ດູຈິສອນໃຫ້" ເວົ້າແລ້ວລຸງສົມກໍຮັບສອນໃຫ້ບັກສາຍຢ່າງຄົນໃຈດີ.

ບັກສາຍທຳຕີເຮັດຄືຄົນລອຍນ້ຳບໍ່ເປັນ ທີ່ແທ້ມັນລອຍນ້ຳເກັ່ງຈິຕາຍ ມັນຍັ້ງໄປຮອດບ່ອນນ້ຳເລິກ ໃຫ້ລຸງສົມຈັບແອວດຶງໄວ້ ເຮັດທຳທ່າລອຍຖຸ່ມຕີນດີ້ນແດ່ວໆ ຄືເດັກນ້ອຍເຮັດຫລິ້ນ.

ບາງຄັ້ງກໍດີ້ນແຮງຈົນໃຫ້ຫລຸດມື ລຸງສົມຕົກໃຈພ້ຳວຄວ້າເອົາຕົວບັກສາຍ ພ້ອມທັງດ່າທັງຮ້າຍ

"ຜີບ້າ! ຄົນອັນໃດລອຍນ້ຳບໍ່ທັນເປັນ ເສືອກໄປຮຽນດຳຫົວກ່ອນ"

ພໍລຸງສົມເຜີຕົວອີກ ບັກສາຍກໍເຮັດໃຫ້ຫລຸດມືໄຫລໄປ ມັນເຮັດລອຍກະພຸບກະພ່າວປີ້ນຂວ້າມປີ້ນຫງາຍຄືຄົນຈິຕາຍຈົມນ້ຳ ພ້ອມກັບຮ້ອງໃສ່ລຸງສົມວ່າ

"ຈ່ອຍແດ່! ຈ່ອຍແດ່!"

ລຸງສົມຍືນຕົກຕລຶງຢູ່

"ຈ່ອຍແດ່...ໂອຍ...." ບັກສາຍເຮັດດຳລຸບລົງ ນ້ຳ.

ບໍ່ລໍຊ້າ ລຸງສົມກໍໂດດນ້ຳໄປຕາມບັກສາຍ ລຸງ ສົມລອຍກະຟຸກກະຟູ່ ທຸ່ມນ້ຳສອງສາມກ້າວກໍ ເຫັນລຸງສົມຈົມນ້ຳເລິງກັບບ່ອນ

ກາຍຍາມຂຶ້ນບໍ່ເຫັນຂຶ້ນ ຄົນຈຶ່ງຫລັ່ງໄຫລມາເບິ່ງ

"ດຳເອົາລາວເທາະແມ້ ບໍ່ແມ່ນຕາຍແລ້ວຫວ່າ" ຄົນຮ້ອງໃສ່ທາງໃດກໍມີ

ພວກຂ້ອຍດຳຊອກລຸງສົມຈົນຕາແດງກໍບໍ່ພໍ້

"ໂຕດຳຊອກທາງໃຕ້ ເຮົາຈິດຳໄປທາງກາງວັງ" ບັກຂື້ອມສັ່ງການໃຫ້ຂ້ອຍ

"ບັກພັນກັບບັກສາຍດຳຢູ່ບໍຣິເວນນີ້"

ຂ້ອຍດຳລ່ອງລົງທາງໃຕ້

ດຳຊຸດທີ່ນຶ່ງ ທີສອງ ບໍ່ທັນພໍ້

ດຳລ່ອງລົງໄປໄກເຕີບ ຈຶ່ງໄປພົບຮ່າງຂອງລຸງ-ສົມໄຫລກີ້ງໄປກັບພື້ນນ້ຳ

ຂ້ອຍໂຈມຮ່າງທີ່ເຕັມໄປດ້ວຍນ້ຳເມືອກ ແລະນ້ຳໄຄດ້າວນັ້ນອອກມາຈາກນ້ຳ

ຝູງຄົນທີ່ໂຫ້ກັນໄປເບິ່ງນັ້ນ ກໍບໍ່ສາມາດຊ່ອຍຫຍັງໄດ້.

*ເພາະລຸງສົມກາຍເປັນສົບໄປເສັຽແລ້ວ!*

---

## *ຍຸ້ມແດ່ກໍດີ*

ວ່າກັນວ່າມະນຸດເປັນສັດປະເສີດ ແລະໄດ້ຮັບການຍົກຍ້ອງໃນໝູ່ມະນຸດນຳກັນວ່າເປັນສັດປະເສີດ ຕລອດມາຫລາຍພັນປີ.... ເມື່ອໄວ ໆ ມານີ້ມີຜູ້ຄົນຜ້ວ່າ ຄວາມແມ່ນແທ້ແລ້ວນັ້ນ ແມ່ນວ່າ *"ມະນຸດເປັນສັດປລາດ"*



• ແສງ ພູຜາເງິນ •

# ຍິ້ມສີເຫລືອງ

ຂ້າພະເຈົ້າຍິ້ມນ້ອຍ ໆ ຍິ້ມດ້ອຍຄວາມບໍ່ຊື່ນໃຈ

ຜູ່ຍິງຄົນນັ້ນ ນັ່ງຢູ່ແປ້ນມ້າ ທ່າທາງບົ່ງບອກວ່າ ຄວາມມີທຸກຮ້ອນສຸມຢູ່ໃນອົກ ນາງຫລົບສາຍຕາຂອງຂ້າພະເຈົ້າແລ້ວກົ້ມລົງແຍງເບິ່ງຣະລັບມືພແກ້ເກົ້ ຕໍ່ມາກໍຫລຽວອອກໄປຂ້າງນອກ ເບິ່ງໄປຍັງຄວາມຫວ່າງເປົ່າ ຊຶ່ງແສງແດດຍາມບ່າຍສາດໃສ່ກຳແພງສີຂາວເປັ່ນຣັສມີເຈີດຈ້າ

ບັນຍາກາດອົບເອົ້າ ເຖິງວ່າໃບພັດລົມເທິງເພ

ຕາມຈະປົ່ນຢູ່ບໍ່ເຊົາ ສົ່ງສຽງດັງແກັກແກັກຕລອດເວລາ

ຜູ່ຍິງຄົນນັ້ນຍັງສາວ ງາມ ແລະຈະງາມກວ່ານັ້ນອີກຫລາຍຕໍ່ ຖ້າຫາກນາງຈະລົບຄວາມກັງວົນອອກຈາກໃບໜ້າທີ່ມ້ານ ໆ ນັ້ນ

ນາງລະສາຍຕາ ຈາກຄວາມຫວ່າງເປົ່າຂ້າງນອກແລ້ວເບິ່ງໄປຍັງຝາຫ້ອງທີ່ຢູ່ຊິໜ້າ ໃຈສີລອຍ ໆ ທ່າທາງເສີຍເມີຍຕໍ່ທຸກສິ່ງທີ່ຢູ່ອ້ອມຂ້າງ ໂດຍສະເພາະຂ້າພະເຈົ້າທີ່ນັ່ງຢູ່ບໍ່ໃກ້ບໍ່ໄກ ເຫດນີ້ແຫລະຂ້າພະເຈົ້າຈຶ່ງຍິ້ມນ້ອຍ ໆ ຍິ້ມດ້ວຍຄວາມບໍ່ຊື່ນໃຈ

ກໍບໍ່ແມ່ນວ່າ ເຫັນຜູ່ຍິງ ໂດຍສະເພາະສາວງາມແລ້ວຈະຍິ້ມໃສ່ ໃຫ້ຄວາມສົນໃຈໂດຍບໍ່ເລືອກກາລະເທສະດອກ ຫາກແຕ່ສາຍຕາຂອງເຮົາຕຳກັນສອງຄັ້ງສອງຄາວແລ້ວແຕ່ລະຄັ້ງນາງຫລົບໄປກ່ອນ ຄ້າຍກັບຄົນມີຄວາມຜິດບາງສິ່ງບາງຢ່າງ ຄັ້ງທີສາມຂ້າພະເຈົ້າຈຶ່ງທັນຍິ້ມໃສ່ ຍິ້ມໜ້ອຍ ໆ ຮູ້ສຶກຢູ່ວ່າມັນບໍ່ແມ່ນຍິ້ມຈາກໃຈຈິງ ຫາກແຕ່ຍິ້ມເພື່ອມິດພາບເພື່ອມາຣະຍາດຕາມສັງຄົມຂອງມະນຸດ ທີ່ຈະຕ້ອງທັກທາຍປາສັຍກັນດ້ວຍຄວາມປາກຄວາມເວົ້າ ຫລືດ້ວຍຮອຍຍິ້ມ ເມື່ອມີ

ການພົບພໍ້ຫລັງຈາກທີ່ເຄີຍພົບພໍ້ກັນມາກ່ອນແລ້ວ

ແມ່ນລະຂ້າພະເຈົ້າເຄີຍພົບພໍ້ຜູ້ຍິງຄົນນັ້ນມາແລ້ວ ແລະເຊື່ອວ່າຕົວເອງຈື່ຄົນບໍ່ຜິດ ຈຶ່ງສົ່ງຍິ້ມອອກໄປ

ແຕ່ກໍປລາດ !

ຂ້າພະເຈົ້າບໍ່ໄດ້ຮັບຍິ້ມຕອບ ບໍ່ມີແວວຕາຂອງຄວາມເປັນມິດ ນາງມີແຕ່ຄວາມເສີຍເມີຍໃຫ້ ຍິ້ມຂ້າພະເຈົ້າຈຶ່ງເປັນຍິ້ມຈືດ ໆ ລ່າ ໆ ຫາຄວາມອ່ອນນອນບໍ່ໄດ້ເລີຍ

ມັນເປັນຍິ້ມສີເຫລືອງມ້ານ ໆ

"ກູຈື່ຄົນຜິດບໍ ?" ຂ້າພະເຈົ້າຖາມຕົວເອງ

ແຕ່ຂີ້ແມງວັນເມັດນັ້ນ ຈັບຢູ່ບ່ອນນັ້ນ ບ່ອນທີ່ມີສເນຫ໌ທີ່ສຸດ ເປັນຄຳຕອບທີ່ແຈ່ມແຈ້ງ ວ່າຂ້າພະເຈົ້າຈື່ຄົນບໍ່ຜິດ

ນາງດີລະດາ ສາວລູກຊອດ ພໍ່ລາວແມ່ວຽດນາມສາວງາມຜູ້ມີຂີ້ແມງວັນຈັບຢູ່ຄາງກ້າຊ້າຍ ທີ່ໄດ້ຫາຍໜ້າຈາກໂຮງຮຽນໄປເມື່ອປີທີ່ແລ້ວ ຫລັງຈາກເຂົ້າຮຽນໄດ້ພຽງນຶ່ງເດືອນ

ຂ້າພະເຈົ້າຈື່ໄດ້ດີ ເມື່ອເດືອນກຸມພາ ໑໙໗໘ ເຮົາເຂົ້າໂຮງຮຽນພາສາອັງກິດພາກຄ່ຳນຳກັນ ນາງນັ່ງຢູ່ແຖວ

ໜ້າ ຂ້າພະເຈົ້ານັ່ງຢູ່ແຖວຫລັງ ຫ້ອງຮຽນຂອງເຮົາມີລູກສິດຊາວສອງຄົນ ເປັນຍິງຫົກ ລະດາເປັນສາວງາມທີ່ໄດ້ຫລາຍໄດ້ລາຍເປັນທີ່ຕ້ອງຕາຊາຍກວ່າໝູ່ຮ່ວມຫ້ອງທຸກຄົນ

ເຮົາເຫັນກັນທຸກ ໆ ແລງຕລອດສັປດາ ເວັ້ນວັນເສົາແລະອາທິດ ແລະລົງແກ່ນກັນດີສົມຄວນ ແຕ່ແລ້ວ ນໍຮຽນຮ່ວມຫ້ອງກັນມາໄດ້ເດືອນດຽວ ນາງກໍຫາຍຕົວໄປ ບໍ່ມີໃຜຮູ້ວ່ານາງໄປໃສແລະເປັນຫຍັງຈຶ່ງບໍ່ມາ ນາຍຄຣູຊຶ່ງເປັນຊາວໂອສຕຣາລີ ຖາມພວກເຮົາເຖິງນາງ ແຕ່ກໍບໍ່ໄດ້ຄຳຕອບທີ່ແຈ່ມແຈ້ງ

ຂ້າພະເຈົ້າຮູ້ສຶກເສັຽດາຍ ທີ່ຫ້ອງຂອງເຮົາຕ້ອງຂາດຄົນງາມໄປ ມີໝູ່ຜູ້ຊາຍຫລາຍຄົນຈົ່ມວ່າ ຫ້ອງຮຽນບໍ່ມີຊີວິດຊີວາ ບໍ່ມີແນວດຶງດູດຈູງໃຈໃຫ້ຢາກມາໂຮງຮຽນຄືຕອນທີ່ລະດາຍັງຢູ່

ມື້ນີ້ ຂ້າພະເຈົ້າມາຄລີນິກແຫ່ງນີ້. ເພື່ອຂໍໜັງສືຢັ້ງຢືນຈາກນາຍແພດໃຫ້ອາ ທີ່ໄດ້ມາກຳລູກເມື່ອສາມວັນກ່ອນ ອາຈະເອົາໄປປະກອບສຳນວນລາພັກຣາຊການ ເພື່ອຢູ່ກຳຄຳເດືອນ

ຂ້າພະເຈົ້າ ນັ່ງຢູ່ຕັ່ງອີ້ຂ້າງໂຕະຂອງຍິງສາວພະນັກງານຕ້ອນຮັບ ຊຶ່ງຂ້າພະເຈົ້າຮູ້ຈັກດີ ເຮົາລົມກັນເຖິງເຣື່ອງຕ່າງ ໆ ເພາະມື້ນີ້ບໍ່ມີຄົນເຈັບມາຂໍຮັບການປິ່ນປົວຫລາຍເທົ່າໃດ ເມື່ອຂ້າພະເຈົ້າມາເຖິງນັ້ນເຫັນພຽງສອງຄົນ ແລະລະດາເປັນຄົນສຸດທ້າຍທີ່ຈະເຂົ້າພົບນາຍແພດ

ຕໍ່ມາກໍຍັງເຫລືອນາງຄົນດຽວ ຄວາມເສີຍເມີຍຂອງລະດາ ເຮັດໃຫ້ບັນຍາກາດພາຍໃນຫ້ອງຄອຍຖ້າມິດມີ່ ຂ້າພະເຈົ້າເວົ້າຫຍັງບໍ່ອອກ ຮູ້ສຶກຊາໄປທົ່ວໃບໜ້າ ແຕ່ກໍຍັງເຊື່ອຢູ່ວ່າຕົວເອງຈື່ຄົນບໍ່ຜິດ

ຄວາມຈິງ ຂ້າພະເຈົ້າເຄີຍມີບົດຮຽນມາແລ້ວທີ່ທ້ອງຄົນຜິດ ເພາະຄິດວ່າເປັນຄົນທີ່ເຄີຍຮູ້ຈັກ ມັນເປັນຄວາມອັບອາຍຂາຍໜ້າ ຊຶ່ງຂ້າພະເຈົ້າຈື່ບໍ່ລືມມາແລ້ວຢ່າງນ້ອຍສາມເທື່ອ ແລະໃນທາງປີ້ນກັນ ຂ້າພະເຈົ້າຊ້ຳເຄີຍຖືກໝູ່ເພື່ອນໂຈມຕີວ່າ ອີ້ດຸຍ ເຫັນກັນກໍບໍ່ຖາມ ແລະທຳທ່າບໍ່ເຄີຍຮູ້ຈັກກັນມາກ່ອນ ຂ້າພະເຈົ້າຖືກຕໍ່ວ່າສເມີຈາກໝູ່ເພື່ອນບາງຄົນເພາະຄວາມລົງລືມ ມັນເປັນບົດຮຽນໃຫ້ຂ້າພະເຈົ້າຕ້ອງລະລຶກຢູ່ເປັນປະຈຳ ແລະບົດຮຽນນີ້ເອງທີ່ເຕືອນໃຫ້ຂ້າພະເຈົ້າຕ້ອງພຽງແຕ່ຍິ້ມໃສ່ລະດາເປັນການທັກທາຍ

ມັນ... ນາງນັ່ງຢູ່ຄົນດຽວ ບໍ່ປາກ ທ່າທາງເສີຍເມີຍ ແລະເບິ່ງຄືວ່ານາງມີສີໜ້າບໍ່ພໍໃຈເມື່ອຕອນທີ່ຂ້າພະເຈົ້າຍິ້ມໃສ່

ຕໍ່ມາ ສາຍຕາເຮົາຕຳກັນອີກເທື່ອນຶ່ງ ຂ້າພະເຈົ້າບໍ່ຍິ້ມ ຫາກແຕ່ຕັດສິນໃຈອອກປາກຖາມເພື່ອໃຫ້ແນ່ໃຈ ເຖິງຈະເສັຽມາຣະຍາດກໍຕາມ

"ເປັນຫຍັງບໍ່ລະດາ ?" ສຽງຂ້າພະເຈົ້າເຍັນ ໆ ເພາະຄວາມເກງໃຈ

"ຂ້ອຍຫວະ ? ບໍ່ແມ່ນລະດາ ອ້າຍຫລົງຄົນຕິບໍ່"

"ຈັ່ນຫວາ...ເອີ ຂໍໂທດ ຂ້ອຍຫລົງ ເຈົ້າຄືກັບໝູ່ຂ້ອຍ ຂໍໂທດຫລາຍ ໆ ຫລົງຄົນ"

"ບໍ່ເປັນຫຍັງ" ນາງກ່າວແລ້ວຍິ້ມຫລ່າ ໆ

ມາທີ່ຕໍ່ມາ ນາງພະຍາບານຄົນນຶ່ງອອກມາຮ້ອງຊື່ສຸດາ ຍິງສາວຜູ້ຍິ້ມຫລ່າ ໆ ຄົນນີ້ກໍລຸກຍ່າງແລ້ວລັບຫາຍເຂົ້າໄປໃນປະຕູ

"ສາວນີ້ເປັນຫຍັງບໍ ? ບໍອອນ" ຂ້າພະເຈົ້າຖາມພະນັກງານຕ້ອນຮັບຜູ້ສູງແກ່ນກັນ

"ຍ່າຊູໃຫ້ບອກເທາະ" ນາງວ່າ

"ເປັນຫຍັງ ໂຣກລຶກລັບອະ ?"

"ອື ລຶກລັບ ຢ່າໃຫ້ບອກເທາະ"

"ຊິຟິລິສ ?"

"ບໍ່ ? ເວົ້າບາບເຂົາ"

"ເປັນຫຍັງຊັ້ນ ?" ຂ້າພະເຈົ້າສົ້

ນາງຍື່ນຕໍ່ເຂົ້າມາໃກ້ ແລ້ວເວົ້າສຽງຄ່ອຍ ໆ

"ເວົ້າແລ້ວຢ່າປາກໄປປາກມາໃດ໋ ເລົາມາຣິດລູກຖືມາໄດ້ສອງເດືອນແລ້ວ ແຕ່ບໍ່ມີຜໍ່ ມາຫາໝໍອານມີ ໝໍເລີຍມັດມາໃຫ້ເຮັດມັ້ນ ເຈົ້າຢ່າປາກໄປໃສແທ້ ໆ ໃດ໋ ເສັຽອະນາຄົດເຂົາ" ນາງເຕືອນດ້ວຍຄວາມພັກແພ້ນ

"ຊັ້ນຫວາ.... ຄວາມຈິງຂ້ອຍຮູ້ຈັກສາວນີ້ໃດ໋ ເລົາຊື່ລະດາ ຈື່ຂແມງອັນເມັດມັ້ນໄດ້ດັກປານຫຍັງ ສົງສັຍໝ້າອາຍບອກຊີຈິງ ຈຶ່ງໃສ່ວ່າສຸດາ ໃຫ້ມັນຕ່າງພຽງພ້ອຍດຽວເຈົ້າວ່າບໍ່ ?"

"ເອີ... ກະຈັ່ງຊັ້ນທຸກຄົນແຫລະ ຜູ້ສາວທີ່ມາຫລຸລູກຢູ່ພີ້ ນີແຕ່ບອກຊື່ປອມທັງນັ້ນລະ ໃຜຊິໂງ່ ເວົ້າພີ້ກະຖືມພີ້ເດ"

ຂ້າພະເຈົ້າງຶກຫົວ ແລະຮູ້ສຶກບໍ່ສະບາຍໃນໃຈ ■

## ຜົວໆ - ເມັຽໆ

ຢູ່ມາມື້ນຶ່ງ ນັກຂ່າວຄົນດັງນາມວ່າບໍ່ຽມ ກໍເກີດມີປາກສຽງກັບແມ່ເດັກນ້ອຍຢ່າງແຮງ ຈົນບໍ່ສາມາດປອງດອງກັນໄດ້ ຜູ້ເມັຽທີ່ໝອນໂມໂຫກໍເລີຍຍື່ນຄຳຂາດ

— ເຈົ້າໄປຊື້ປຶ້ມໃຫ້ຂ້ອຍອ້າຍບໍ່ຽມ ຂ້ອຍຊິຢ່າເຈົ້າ ຂ້ອຍຊິເປີດໜີເມືອຢູ່ນຳແມ່ຂ້ອຍຢູ່ໃຕ້ພຸ້ນ"

— ເອົ້າ ! ເອົາໄປສິບໝັນ ! ຢາກໄປ ເຊີນໄປ ຊື້ເອົາເອງປຶ້ມມະ ເຊີນໂລດ !"

— ທີ່ນີ້ຫວ໊ະຊິພໍ່ ?" ແມ່ທ້າວນ້ອຍຂອງນັກຂ່າວຊື່ບໍ່ຽມວ່າແກມຄິດຮື່ນຕອງຢູ່ຄົນເດີບ "ແຕ່ຄ່າປຶ້ມຂາເມືອຖ້ຽວດຽວກະຕັ້ງແປດໝັນແລ້ວ ຍັງຄ່າຢູ່ຄ່າກິນ... ຂາມາເຈົ້າຊິໃຫ້ຂ້ອຍເອົາໃສ່ຊື້ປຶ້ມອີກ ?"

● ວຽນທຽນ ●

ຍາມມ່ວນຍາມຫລິ້ນ ເຮົາມ່ວນເຮົາຫລິ້ນ
ນຳກັນ.... ແຕ່ຍາມຮ້ອງໄຫ້ ຂ້ອຍຕ້ອງຮ້ອງ
ໄຫ້ຜູ່ດຽວ.... ບໍ່ມີໃຜ.... ບໍ່ມີໃຜຈິຮ້ອງໄຫ້
ເພື່ອຂ້ອຍເລີຍ....

24/VII



■ ຣະພິນທຣ໌ ■

# ໃຜຊິຮ້ອງໄຫ້ເພື່ອຂ້ອຍ ?

*ຫາກເຮົາຈິຮັກກັນ*

*ສິ່ງທີ່ຂ້ອຍເຮັດລົງໄປນີ້ ຍ່ອມບໍ່ຜິດ ເພາະຂ້ອຍເຮັດ ຕາມສິ່ງປາຖນາຂອງຫົວໃຈ ແລະຜິດຫລືທີ່ພວກເຮົາຈະຮັກກັນ? ຜິດຫລື?*

ແຕ່ເປັນຫຍັງພໍ່ແລະແມ່ ຈຶ່ງພາກັນທຳລາຍຫົວໃຈຂອງພວກເຮົາແທ້ ? ເປັນຫຍັງເພິ່ນຈຶ່ງກີດກັນ ແລະເປັນຫຍັງ ເພິ່ນຈຶ່ງຊັງອ້າຍ "ດຳພາ" ຂອງຂ້ອຍແທ້ ?.

ເປັນຫຍັງເພິ່ນຈຶ່ງຫ້າມ ?

ເປັນຫຍັງເພິ່ນຈຶ່ງບໍ່ມັກນຳຂ້ອຍ ?

ແລະເປັນຫຍັງ ເພິ່ນຈຶ່ງຮັກແລະແພງອ້າຍ'ຊວນ" ແທ້ ເລົາມີດີຫຍັງ?

ຜູ້ທີ່ຂ້ອຍມັກ ອ້າຍຄຳພາ ເພິ່ນກັບຍຸແຫຍ່ໃຫ້ພວກເຮົາແຕກແຍກກັນ ແຕ່ກັບຜູ້ຊາຍອີກຜູ້ນຶ່ງ (ບໍ່ຢາກອອກຊື່ ຊຽງເລົາ) ທີ່ຂ້ອຍບໍ່ມັກ ເພິ່ນກັບບ້ອງໃສ່ ທັງທີ່ເພິ່ນຮູ້ດີວ່າ "ຂ້ອຍບໍ່ມັກເລົາ" ແຕ່ກ່ອນ ຂ້ອຍລົມກັບອ້າຍ"ຊວນ"ນີ້ ຂ້ອຍລົມເພື່ອເອົາໃຈ"ແມ່"ຊື່ໆດອກ ແຕ່ດຽວນີ້ເລົາບໍ່ມີທາງຈະລົມກັບຂ້ອຍໄດ້ເລີຍ ເພາະຂ້ອຍພະຍາຍາມເອົາໃຈອ້າຍຄຳພາ ເພື່ອເຮັດໃຫ້ເລົາ (ອ້າຍຊວນ) ເຈັບໃຈຫລີ້ນ.

ແຕ່ເລົາກໍບໍ່ໄດ້ງ້ ເພາະເລົາມາຫລິ້ນກັບແມ່ຂ້ອຍເສີຍມັ່ງຢູ່ ປານ"ລູກຊາຍ"ກັບ"ແມ່"ນີ້ແຫລະ ອັນນີ້ແຫລະຂ້ອຍຈຶ່ງຄິດເຫລືອໃຈຕາງອ້າຍຄຳພາ ແລະຂ້ອຍຄິດອິດສາທີ່ແມ່(ໂຕເອງແທ້ໆ) ກັບຂັ້ນຄວາມຮກໃຫ້ແກ່ເລົາເກີນກວ່າຂ້ອຍ ເຫລືອໃຈແທ້ໆ ຂ້ອຍຈຶ່ງບໍ່ປາກກັບເລົາ ອັນນີ້ເອງທີ່ແມ່ມັກຮ້າຍຂ້ອຍເລື້ອຍໆ ບາດແມ່ເວົ້າກັບເລົາ ເບັ່ນສັງມາລົມນຳກັນດີແທ້ໆ ບາງເທື່ອຂ້ອຍກໍສະແດງກິຣິຍາເສີຍໆໃສ່ແມ່ ຄືຊິບາບກະບໍ່ຈັກ ຈ່າງມັນ!

"ສາຍຄຳ ນ້ອງຄິດຫຍັງ?" ສຽງຂອງອ້າຍຄຳມາຍອດດວງໃຈຂອງຂ້ອຍ ໄດ້ຖາມຂຶ້ນຈົນມະໂນພາບຈາງຫາຍໄປ

"ບໍ່ໆ ບໍ່ໄດ້ຄິດຫຍັງດອກອ້າຍ" ຂ້ອຍພ້າວຕອບເພື່ອບໍ່ໃຫ້ເລົາອຸກໃຈຊ່ອຍ

"ຄີ້ນໃດເດ້ ເພິ່ນຈະເຫັນໃຈ"

"ຄອງໄປແຫລະອ້າຍ" ຂ້ອຍພ້ຳວລັດຄຳເພາະຮູ້ດີວ່າເລົາຊິຈົ່ມຫຍັງຕໍ່

"ອ້າຍບໍ່ມີກຳລັງໃຈຊິໄປຫານ້ອງແລ້ວໃດ່ສາຍຄຳ"

"ໃຜຊິເວົ້າຫຍັງໃສ່ອ້າຍກໍຕາມ ຂໍຢ່າງດຽວອ້າຍຢ່າປະຢ່າຖິ້ມໃຫ້ນ້ອງເຫງົາກຳພ້ ມີເວລາກະໄປຫລິ້ນນຳນ້ອງແດ່" ຂ້ອຍບໍ່ຈັກວ່າຂ້ອຍໄດ້ເວົ້າຫຍັງ ແຕ່ຂ້ອຍຮູ້ດີວ່າ ໃນໃຕ້ອຳນາດຂອງຄວາມຮັກ ຂ້ອຍບໍ່ມີສິດຫຍັງທັງນີ້ແລະທັງນັ້ນ

"ເບິ່ນຫຍັງແມ່ຂອງນ້ອງຈຶ່ງຊັງອ້າຍແທ້ ເວລາອ້າຍຂຶ້ນໄປສັງມາຕາຂຽວໃສ່" ອ້າຍຄຳພາຈົ່ມ

"ເບິ່ນເພາະອ້າຍຊວນຜູ້ດຽວ" ຂ້ອຍເວົ້າຖິ້ມຄວາມຜິດແລະອອກຊິຜູ້ຊາຍ ທີ່ຂ້ອຍຊັງຢ່າງດຽດແຄ້ນ

"ກັບອ້າຍຊວນແລ້ວ ແມ່ຂອງນ້ອງກັບໃຫ້ຄວາມຮັກແພງປານລູກກັບແມ່ເອົາໂລດ ເບິ່ນຫຍັງນ້ອງບໍ່ມັກເລົາຊະ" ເລົາຫັ້ງໃສ່ຂ້ອຍ

"ບໍ່ມີທາງ ແຕ່ກ່ອນນ້ອງໄປກັບເລົາກໍເພື່ອເອົາໃຈແມ່ຊື່ໆ ດອກ"

"ອ້າຍຮູ້ອ້າຍເຂົ້າໃຈນ້ອງດີ" ອ້າຍຄຳພາບອກຂ້ອຍ ຊ້ຳບໍ່ໜຳ ເລົາດຶງຂ້ອຍເຂົ້າໄປກອດແລະຈູບຍ່າງດື່ມດັກແລະບ໋ກຊວງ

ຯລຯ

"ໄປເມືອກັນເທາະ ໃກ້ຈິຮອດສາມໂມງແລ້ວ ພີໂຮງການເພີ່ມຈິວ່າໃຫ້ ແລະນ້ອງເອງກໍຮອດໂມງເຂົ້າຮຽນແລ້ວໃດ່' ອ້າຍຄຳພາເລົາໝາຍເຖິງໂມງພີເສດ ທີ່ຂ້ອຍມາ–ສມັກຮຽນ (ຖ້າບໍ່ຫລັກໂມງຮຽນ ເຮັດແນວໃດພອກເຮົາຈິພົບກັນ ແມ່ນບໍ່ລະ?).

"ມື້ອື່ນຈຶ່ງຄ່ອຍພໍ້ກັນອີກ" ຂ້ອຍເອົ້າ ແລະກອ່າຈິອອກຈາກກັນໄດ້ ແກ້ມຂ້ອຍຈິມຸ່ມຄາສົບເລົາ.

ຄຶດໆ ມາກໍເບິ່ນຕາຢາກຫົວອ້າຍຊວນເຕັມທີ ຄື

ຈຶ່ງຄິດວ່າຈະໄດ້ຂ້ອຍຢູ່ຕີ (ເພາະເລົາເຂົ້າທາງແມ່) ຖ້າເລົາຮູ້ວ່າ ຂ້ອຍມານັດພົບກັນຢູ່ແຖວໆນີ້ ເລົາຈະຄິດຈັ່ງໃດ?

ຖ້າຮູ້! ເລົາຈະບໍ່ບັດຕາຍພຸ້ນຫວະ?

ສົມນ້ຳໜ້າ!

× × ×

"ແມ່" ຂ້ອຍຮ້ອງຄາງອອກມາເມື່ອຈວາດຮູ້ເມື່ອດຶງ.

ພຽງແຕ່ໄດ້ຍິນສຽງຂ້ອຍທີ່ນັ້ນ ແມ່ຜູ້ທີ່ພະຍາຍາມກີດກັນຄວາມຮັກຂອງພວກຂ້ອຍ ຈັກມາແຕ່ທາງໃດໂປໂລມາຫາໂລດ

"ເປັນແນວໃດແດ່ລູກ?" ສຽງແມ່ຖາມຍ່າງອາທອນນຳ

"ແມ່ ລູກເຈັບລູກທີ່ຣະນາມເຕັມທີ ມັນພ່ອງຕາມແອວແສບສັນຫລັງ ຄືພາກໄຂ່ຫລັງຈະແຕກນີ້ນາ ແມ່ ເປັນຫຍັງລູກເຈັບປານນີ້ ລູກຈະບໍ່ຕາຍຫວະ?"

"ບໍ່ເປັນຫຍັງດອກລູກ" ແມ່ອອຍພ້ອມລູບຫົວພາໃຫ້ຂ້ອຍມີກຳລັງໃຈ

"ນອນຊ໊ະ ຢ່າຊູ່ຕຶງ ຈັກໜ່ອຍກໍມີແຮງດອກລູກ" ຂ້ອຍຫລັບຕາລົງພະຍາຍາມຊິຫລັບ ແຕ່ມັນຫລັບບໍ່ລົງ ພາບອະດີດຫວ່າງເດືອນກ່ອນ ມັນຄອຍມາຫລອກອາຣົມແລະຫົວ-ໃຈຂອງຂ້ອຍຢູ່ເລື້ອຍໆ

"ສາຍຄຳ ອ້າຍບໍ່ເຊື່ອດອກວ່າ ນ້ອງຈະມັກອ້າຍພຽງຜູ່ດຽວ ນ້ອງຮູ້ບໍ່ວ່ານ້ອງໄຂ້ ຕອນພວກເຮົາຕິດກັນໃໝ່ໆນັ້ນ ນ້ອງເປັນໂຣກຫົວໃຈ ແລະເຈັບຈົນເປັນລົມໃນຫ້ອງນ້ຳ ພໍດີຖືກຈັງຫວະທີ່ອ້າຍໄປຢື້ຢາມໄຂ້ນ້ອງ ອ້າຍມີໂອກາດໄດ້ຮູ້ເຣື່ອງຂອງນ້ອງ ເພາະຫລັງຈາກອ້າຍອຸ້ມລົງບ່ອນ-ນອນ ເພາະແມ່ຂອງນ້ອງຂໍຮ້ອງ ແລະອີກຕອນນັ້ນກໍບໍ່ມີຜູ່ຊາຍຈັກຄົນ ອ້າຍເລີຍເຫັນຈົດໝາຍຂອງອ້າຍຊອນທີ່ນ້ອງບໍ່ຮັກ ນ້ອງເອົາໜັງສືເກັບໄວ້ໃນໂຕສເນີ ຈົດໝາຍທີ່ຂຽນເຖິງຄວາມສັມພັນເປັນນັຍໆທີ່ມີຕໍ່ນ້ອງ ແລະຊ້ຳບໍ່ໝ້າຍັງໄດ້ຝາກຮອຍຈູບໃຫ້ແກ່ກັນ ນ້ອງບອກອ້າຍວ່າ *ລົມເອົາໃຈ-ແມ່* ແຕ່ນ້ອງຄົງຊິບໍ່ເອົາໃຈຂມາດ ໃຫ້ຜູ່ຊາຍທີ່ນ້ອງວ່າບໍ່-ມັກທັງກອດແລະຈູບຕີ ແລະອ້າຍບໍ່ເຊື່ອວ່າເລົາຊິໄດ້ພຽງທໍ່ນັ້ນ ທັງທີ່ນ້ອງບອກວ່າບໍ່ມີຫຍັງກັບເລົາ ແຕ່ຖ້ານ້ອງສລາດ

ພຽງໜ້ອຍດຽວ ນ້ອງກໍຄວນສົ່ງຈົດໝາຍເລົາຄືນຫລືທຳລາຍມັນເລີຍ ແຕ່ນ້ອງຍັງໂງ່ໄປຈັກໜ່ອຍ ແລະໃຜຊິໄປເຊື່ອວ່ານ້ອງມັກອ້າຍ ແລະອ້າຍເອງມັກນ້ອງບໍ່ໄດ້ດອກ ເພາະນ້ອງຫລອກອ້າຍຕລອດມາ ອ້າຍຮັກແມ່ຍິງຫລາຍໃຈບໍ່ໄດ້.... ຮັກແມ່ຍິງທີ່ຫລິ້ນກັບອາຣົມໄດ້ບໍ່ໄດ້ ໄດ້ຍິນບໍ່?"

ເບິ່ງ–ເບິ່ງ ແທນທີ່ອ້າຍຄຳພາຊິດີໃຈ ເມື່ອຂ້ອຍບອກວ່າ "ການລົງດີ" ຂາດມາສອງສາມເດືອນແລ້ວ ແລະຈະເປັນໂອກາດໃຫ້ພໍ່ແລະແມ່ ອະນຸຍາດໃຫ້ພວກເຮົາໄດ້ເອົາກັນ ເພາະເຖິງຂັ້ນນີ້ແລ້ວ

ແຕ່ຂ້ອຍນຶກບໍ່ເຖິງເລີຍວ່າ ເລົາຈະຫັ່ງໃສ່ແບບນີ້ ທັງທີ່ມີກ່ອນນັ້ນ ເລົາຍັງສະແດງຄວາມຮັກຕໍ່ຂ້ອຍຢ່າງຫລົງໄຫລ ແຕ່ເມື່ອຂ້ອຍໄຂຄວາມຈິງໃຫ້ເລົາຮູ້ ບໍ່ທັນຂ້າມມື້ເລົາກໍຫາເຣື່ອງຜິດຂ້ອຍທັນທີ ຕໍ່ມາຂ້ອຍກໍພະຍາຍາມງໍ້ເລົາປານໃດ ເລົາກະບໍ່ຫົວຊາ ແລ້ວຂ້ອຍຊິແລຫາໃຜ? ແລະໃຜຊິຮັບເປັນພໍ່ເດັກນ້ອຍໃນທ້ອງ?

ຂ້ອຍຊິກັບໄປງໍ້ອ້າຍຊວນໃຫ້ເລົາຮັບ ຫລືຂ້ອຍກະອາຍ ເພາະເລົາບໍ່ຫລົງທາງໃຫ້ຂ້ອຍໄດ້ດຸບເລົາໄວ້ ແມ່ນຢູ່

ໜ້າທີ່ເຂົາກໍມາຫລົ້ມກບແມ່ຂ້ອຍສເນີກົກສເນີປາຍ

ແລ້ວເທດນີ້ ໃຜຊິເຊັດນ້ຳຕາໃຫ້ຂ້ອຍ ແລະ *ໃຜຊິຮ້ອງໄຫ້ເພື່ອຂ້ອຍໄດ້*

ຜົນສຸດທ້າຍກໍແມ່ນແມ່ ເປັນຜູ້ແລ່ນຊ່ອຍ ແຕ່ບໍ່ໃຜເຊື່ອໃຈຂ້ອຍ

ແມ່ຜູ້ດຽວທີ່ແລ່ນງ້ອາຍຄຳໝາ ແຕ່ເຂົາກໍເຮັດເສີຍໃສ່ແມ່ຂ້ອຍອີກ

ຂ້ອຍກໍບໍ່ຈັກແນວຊິແກ້ ຈົນ....

ເມື່ອບໍ່ມີໃຜຮັບ "ແມ່" ເອງເປັນຜູ້ເດືອດຮ້ອນແລະແມ່ເອງເປັນຜູ້....

"ເຫັນບໍ່ລູກ! ແມ່ພະຍາຍາມຕຸກເຕືອນລູກ ແຕ່ລູກບໍ່ເຄີຍຟັງ ລູກເອົາແຕ່ໃຈໂຕເອງ *ການທີ່ແມ່ຫ້າມລູກໆກັບວ່າແມ່ຊັງ* ແລ້ວຜົນທີ່ສຸດເປັນແນວໃດ ບໍ່ມີໃຜຈະຮັບເລີຍ *ແມ່ຮູ້ ລູກກ້າວຜິດມາແຕ່ຕົ້ນ* ລູກຄຽດໃຫ້ອ້າຍຊອນ ທັງທີ່ແມ່ເບິ່ງໃຫ້ລູກດີແລ້ວ ເຫັນບໍ່ ງາມໜ້າລະຕີ" ແມ່ຊິເວົ້າໃສ່ຫລາຍຢູ່ ຫາກວ່າບໍ່ແມ່ນນ້ຳຕາແລະສຽງສະອື້ນຂອງຂ້ອຍ ເຂົາຈຶ່ງມິດລົງແດ່

ຂ້ອຍຖືກແມ່ພາມາ ຮອດບ່ອນທີ່ຂ້ອຍບ່ຮູ້ວ່າແມ່ນບ່ອນໃດ ເພາະແມ່ເລົາຫົນໃຫ້ພ່ຮູ້ຄວາມຊື່ອຂອງຂ້ອຍບ່ໄດ້ ຍ້ານອາຍໄທບ້ານໄທເມືອງເພິ່ນ.

ມື້ທຳອິດ ທີ່ຂ້ອຍພໍ້ຜູ້ທີ່ແມ່ພາມາຫານັ້ນ ຂ້ອຍເຫັນ ຂ້ອຍເກືອບຕົກໃຈຕາຍ ເພາະໃບໜ້າຂອງເລົາຄືໜ້າຂອງເພັຊດາດ ຂ້ອຍຍ້ານເພາະບ່ເຄີຍເຫັນໃຜຊິໜ້າຍ້ານປານນັ້ນ ອາຍຸປະມານຫ້າສິບສີ່ປີນີ້ລະ

ຕໍ່ມາຂ້ອຍຈຶ່ງຮູ້ວ່າ ແມ່ພາມາຮິດເອົາ “ມານຫົວຂົມ” ອອກ ແລະມາຮອດບ່ອນນີ້ເລົາເວົ້າເສີຍ ໆ ວ່າ

“ຄຳເອີຍ ! ລູກຄືຊິເຂົ້າໃຈວ່າ ແມ່ໃຈດຳແມ່ນບໍ່ ໃຫ້ລູກຄິດເບິ່ງ ຫາກພໍ່ຂອງລູກຮູ້ ເພິ່ນຊິບ່ຂ້າແມ່ຖິ້ມສາຫວະ ເພາະລູກສາວດຽວຮັກສາບ່ກຸ້ມ ດັ່ງນີ້ແມ່ຈຶ່ງພາມານີ້ *ເຖິງເປັນບາບເປັນກັມ ແມ່ກໍຕ້ອງຍອມເພື່ອລູກທີ່ນັ້ນລະ”*

ແມ່ພະຍາຍາມເວົ້າແລ້ວເວົ້າອີກ ຈົນຂ້ອຍໃຈອ່ອນມານຳເລົານີ້ແຫລະ ໃນໃຈຄິດວ່າມັກແມວໃດກະເປັນແມວນັ້ນ

ມື້ທຳອິດ ຂ້ອຍໄດ້ຖືກບັງຄັບໃຫ້ພັກຜ່ອນເສັຽ-ກ່ອນ (ດ້ວຍຄວາມເບິ່ງແຍງຂອງແມ່ເຖົ້າພ້າເພັຊດາດນັ້ນ) ວ່າເລົາຈິເຮັດຫຍັງເລົາກໍບໍ່ໄດ້ວ່າ ມີແຕ່ຊອນລົມແລະກິນສົ້ມກິນແສວກັນຕາມທັມມະດາ ມື້ສອງກະບໍ່ມີເຫດການຫຍັງ ມື້ສາມເລົາກະຊອນກິນຕຳໝາກຍໍ ແຕ່ເລົາບໍ່ກິນນຳຂ້ອຍ ເລົາກໍຕຳຄືຕຳໝາກຫຸ່ງນີ້ແຫລະ ເລົາເອົາສາມພ່ວຍ ແມ່ກໍບອກໃຫ້ຂ້ອຍກິນໃຫ້ມັນໝົດ ກະບໍ່ເຫັນມີຫຍັງ ວ່າຈິຮີດລູກອອກໃຫ້ຂ້ອຍກະຄືເສີຍກັນຢູ່

ຂ້ອຍຄຶດວ່າ ພອກເພິ່ນຄືຈິບໍ່ຮີດອອກດອກ ດີຄືກັນ!

ແຕ່ໃສໄດ້ ຕອນຄ່ຳມາເພິ່ນຕົ້ມນ້ຳຮ້ອນໃຫ້ຂ້ອຍກິນ ຄືກິນແບບແມ່ກັມລູກນີ້ແຫລະ

ມື້ໃໝ່ຕໍ່ມາ ຂ້ອຍເຈັບຕາມຫລັງຕາມທ້ອງ ພ້ອມມັນບີບມັນຮັດສຸດທີ່ທໍຣະມານ ຍາມເຈັບເພິ່ນແຮ່ງເອົານ້ຳຮ້ອນໃຫ້ຂ້ອຍກິນ ຂ້ອຍສຸດທີ່ຈະທົນໄດ້ ຂ້ອຍກິ້ງໜ້າກິ້ງຫລັງ ເພາະມັນເຈັບເອົາແທ້ເອົາແທ້ເອົາວ່າ ເມື່ອຂ້ອຍມີອາການເຊັ່ນນັ້ນຂ້ອຍໄດ້ຍິນແມ່ເຖົ້າພ້າເພັຊດາດຈົ່ມສູແມ່ຂ້ອຍຟັງ

"มื้อื่นมั่นก็ຈິອອກດອກ" ທີ່ນີ້ຂ້ອຍກໍ່ຮູ້ວ່າ ແມ່ເຖົ້າໝາຍເຖິງຫຍັງ ຖ້າຂ້ອຍຮູ້ວ່າມັນຈິທໍຣະມານກັນແບບນີ້ ຂ້ອຍຈະບໍ່ມາບ່ອນນີ້ເລີຍ

ມື້ອື່ນເປັນມື້ຕັດສິນຊີວິດຂ້ອຍກະວ່າໄດ້ ມັນຈິອອກມາຫລືມັນຈິດຶງເອົາຊີວິດຂ້ອຍໄປນຳກໍ່ບໍ່ຮູ້

ຂ້ອຍຢ້ານ! ແມ່ເຖົ້າເລົາພໍ່ຈິບອກໃຫ້ຮູ້ແຕ່ກະບໍ່ໄດ້ວ່າຈະຣິດລູກ ເພາະເຫັນເລົາເສີຍຢູ່ຈົນຂ້ອຍເຈັບສຸດທີ່ຈະບັນຍາຍຖືກ ເລົາຈຶ່ງໄຂສູ່ຟັງ

ຫາກຂ້ອຍເຊື່ອແມ່ຈັກໜ່ອຍ ແລະບໍ່ຮັກອ້າຍຊອນຈົນເກີນໄປ ຈົນເຮັດໃຫ້ຂ້ອຍຄຽດເລົາແລະເຮັດເພື່ອຊນະເລົາ ມີມານະກັບເລົາໂພດ ຫາກຂ້ອຍບໍ່ເຊື່ອຄວາມງາມຂອງໂຕເອງ ແລະຄວາມລົມວ່າຈະເອົາຊນະອ້າຍຊອນ (ເພື່ອໃຫ້ເລົາອົກຫັກ) ແລະອ້າຍຄຳພາ (ເພື່ອໃຫ້ເລົາກິນດອງນຳ) ຈົນເກີນໄປແລ້ວ ຂ້ອຍຄືຈິບໍ່ຢູ່ໃນສະພາບເຊັ່ນນີ້ ມັນເຈັບສຸດທີ່ຈະບອກໃຜຖືກ ໃນເວລານີ້ຂ້ອຍບໍ່ເຫັນໃຜ ນອກຈາກແມ່ຜູ້ທີ່ຂ້ອຍຄິດວ່າຊັງຂ້ອຍ ເພາະເວລາໃດເລົາມີແຕ່ເວົ້າ–ຮ້າຍໆ ແລະຫັ່ງໃສ່ ແຕ່ດຽວນີ້ຂ້ອຍຄິດໄດ້ແລ້ວ *ສີບຜູ້*

*ອື່ນຮັກໃຄ່ ບໍ່ທໍ່ແມ່ຈ້ຽງຜູ່ດຽວ.*

ເສັຽໃຈແລະນ້ອຍໃຈໂຕເອງຫລາຍ ເມື່ອໄດ້ຍິນຄຳເວົ້າຂອງແມ່ເຖົ້າວ່າ ມື້ອື່ນ "ມັນຈິອອກ" ຂ້ອຍນໍ່ໃຈຈິຂາດກ່ອນ ຂນາດມັ້ນເຈັ້ບພ່ອງສ່ານີ້ຍັງນໍ່ຕາຍແລ້ວ ຫາກກ້ອນເລືອດກ້ອນນັ້ນອອກມາ ຂ້ອຍຈິບໍ່ຕາຍອິ່ຫລີ້ນຸ່ມຫວະ ທາງລອດຈິວິດມັນຈິມີບໍ່?

ໃຜຈິບອກຂ້ອຍໄດ້ ? ■

## ຄົນຕ່າງຄົນ

ນັກສຶກສາຕ່າງແຂວງຢູ່ຫໍພັກແຫ່ງນຶ່ງນຳກັນ ພາກັນອອກມາຍ່າງອຳລາຕາເວັນຕອນແລງ ລົມກັນໄປນຳທາງ ເລີຍເກີດຖຽງກັນຂຶ້ນມາເຖິງເຣື່ອງບັຣພະບຸຣຸດຂອງຄົນ ວ່າມາແຕ່ໃສກັນແທ້ ຜູ່ນຶ່ງຢືນຍັ່ນວ່າມາຈາກລີງ ພໍດີກັນກັບທີ່ອາຈານສອນວິຊາທັມມະຊາດວິທຍາຍ່າງມາ ທັງສອງກໍເລີຍຂໍໃຫ້ຕັດສິນໃຫ້ ອາຈານຍິ້ມຊື່ງ ໃຊ້ຄວາມຄິດຢູ່ເທິງເຕີບ ກ່ອນອະທິບາຍວ່າ:

"ພວກຄົນໂງ່ກໍອາດຈະສືບສາຍເລືອດມາຈາກລີງແທ້ຢູ່ ແຕ່ວ່າຄົນມີຄວາມຮູ້ຊັ້ນອາຈານ ດູງຈະບໍ່ແມ່ນດອກ !"

*"ວຽນທຽນ"*

● ● ● ຂມາດບໍ່ເຊື່ອ....
ກໍຍັງເກືອບເສັຽນໍ້າຕາລ້າ ໆ....
ຄໍາເຊື່ອ....
ຈັກຈິເສັຽຫຍັງແດ່ກະຍັງບໍ່ຮູ້....



■ ດອກເກດ ■

# ບ່ເຊື່ອ

ເຮົາພໍ້ກັນສູ່ປີ ໃນຍາມມື້ສັນວັນດີ ຄືມື້ ບຸນສລອງວັນປີໃຫມ່ລາວ ທີ່ປາຣີສ ໃນຄ່ຳຄືນທີ່ທຸກຄົນງົດງາມ ຢູ່ໃນເຄື່ອງຜ້າອາພອນຊຸດພິເສດ ເຈົ້າສງ່າງາມຢູ່ໃນຊຸດ ກອນເປລສີມືດ ໆ (ຈຶ່ງຂ້ອຍເບິ່ງບ່ຮູ້ວ່າ ມັນແມ່ນສີຫຍັງແທ້) ຄືກັນກັບ ບ່າວນັກສຶກສາລາວອື່ນ ໆ ແຕ່ສຳລັບຂ້ອຍຜາກົດວ່າເຈົ້າສງ່າງາມ ເຈົ້າຊູ້ກວ່າຄົນອື່ນ ໆ !

ຄືນນັ້ນ ເຮົາພໍ້ກັນອີກ ຕ່າງກໍ່ຍິ້ມໃຫ້ກັນ ຖາມ

ຂ່າວຄາວຄືເຄີຍຖາມມາແລ້ວສູ່ເທື່ອທີ່ພົບກັນໂດຍບັງເອີນ

— ເຈົ້າຊູ້ຂຶ້ນສູ່ປີນໍ ! ເຈົ້າວ່າ ພ້ອມທັງຖິ້ມແສງຕາຄົມມາບໃສ່

— ເຈົ້າຊູ້ແທ້ບໍ ? ຂ້ອຍຖາມຄືນ ຈຶ່ງບໍ່ເຊື່ອ ຍິ້ມແຍ້ມ ຕາມທັມມະດາຜູ້ຍິງ ຍ່ອມພໍໃຈເມື່ອຖືກຍ້ອງ ບໍ່ວ່າຕໍ່ໜ້າ–ລັບຫລັງ ! ຂ້ອຍບໍ່ອຽງອາຍຄືສາວນ້ອຍຂຶ້ນໃໝ່ເພາະເທື່ອນີ້ບໍ່ແມ່ນເທື່ອທຳອິດທີ່ເຈົ້າເວົ້າເຊັ່ນນີ້

— ປານໃດຈິໄຊກດີ ? ເຈົ້າຖາມຕໍ່ອີກ ຂ້ອຍຈື່ໄດ້ວ່າ ມັນເປັນຄຳຖາມດຽວກັບສອງສາມປີກ່ອນທີ່ເຈົ້າເຄີຍຖາມແລ້ວ.

— ຈັ່ງວ່າ ຄອງໂຊກແລ່ນມາຫາຢູ່ນີ້ແລ້ວ ! ຂ້ອຍຕອບໄປ ຄືເຄີຍຕອບມາແລ້ວ ເຈົ້າຫົວຍ້ານ ຈຶ່ງບໍ່ເຊື່ອແລ້ວກໍແຍກຈາກໄປ ເພາະເປັນເວລາທີ່ເຈົ້າຕ້ອງຂຶ້ນເວທີພ້ອມຮ່ວມກັບນັກສຶກສາຍິງລາວທີ່ປາຣີສ ເພື່ອໃຫ້ຄົນຕ່າງຊາດທີ່ມາຮ່ວມໃນບຸນ ເຫັນວັທນະທັມພ້ອນລຳຂອງລາວ ແລະພິທີບາສີອັນ ເປັນປະເພນີນິຍົມເຮັດກັນ ທັງໃນຕ່າງປະເທດ ແລະໃນປະເທດ.

— ພ້ອມໄດ້ງາມຫລາຍ ! ຂ້ອຍຍ້ອງຊື່ ໆ ເມື່ອເຈົ້າລົງມາ ຫລັງຈາກບໍ່ຽມເຄື່ອງນຸ່ງພ້ອມອອກມາເບັ່ນຊູດກອມ–ເປລສີມິດທີ່ຂ້ອຍມັກ

— ຮຶ ! ແອບເອົາເກືອບຕາຍດອກ !! ເຈົ້າຕອບຄືນ ປົນຫົວ ມິດໄປບຶດນຶ່ງ ແລ້ວຈຶ່ງໂງກຫົວເຂົ້າມາບອກໃກ້ ໆ ວ່າ :

— ຂໍຜູກແຂນແດ່ ! ພ້ອມທັງເຍິງຝ້າຍຜູກແຂນໃຫ້ເບິ່ງ ຄືຈັ່ງວ່າຢ້ານຂ້ອຍບໍ່ເຊື່ອ ຂ້ອຍພ້າວເດ່ແຂນຍ່າງວ່າງ່າຍເຊື່ອງ່າຍ ເຈົ້າເຕາະແຂນສອກຂ້ອຍນ້ອຍນຶ່ງຍ່າງສຸພາບກ່ອນຈະເວົ້າສຽງຄ່ອຍພໍໄດ້ຍິນວ່າ :

— ບໍ່ຮູ້ຈະວ່າຫຍັງໃດ໊ ນໍ໊ ໃຫ້ຄິດເອົາເດີ໊ ຄິດອັນໃດໃຫ້ໄດ້ສົມມັກສົມປຣາຖນາ !

— ຂອບໃຈ ! ມາ ຂ້ອຍຜູກໃຫ້ແດ່ ບາດນີ໊ ເອຊິວ່າຈັ່ງໃດດີນໍ້ ໃຫ້ໂຊກດີໄວ ໆ ໄດ້ເມັຽຜູ້ຮູ້ ໄດ້ຊູ້ຜູ້ງາມໆ ເດີ໊ ! ຂ້ອຍເວົ້າປົນຫົວເມື່ອມັດຂອດຝ້າຍ

— ໄດ້ຜູ້ງາມ ໆ ຄືເຈົ້ານໍ້ !

— ຮຶ ! ເຈົ້າວ່າຫຍັງເກາະ ?

– ບໍ່ ບໍ່ໄດ້ວ່າຫຍັງນ່າ !! ເຈົ້າປະຕິເສດ ແລ້ວຈຶ່ງເບິ່ງໜ້າຂ້ອຍດ້ວຍແສງຕາຕ່າງ ໆ ຂ້ອຍເສຫົວ ທັງຫລົບແສງຕາອັນເປັນປິສນາຂອງເຈົ້າດ້ວຍຫົວໃຈອຸ່ນອາຍ ແລະຢາກຕໍ່ວ່າເຈົ້າທີ່ສຸດ ຫລາຍເທື່ອມາແລ້ວ ທີ່ຄວາມເວົ້າແລະແສງຕາຂອງເຈົ້າກ້ຽວຂ້ອຍ ແຕ່ພໍຂ້ອຍຢາກໃຫ້ຍ້ຳໃຫ້ຄັກໃຈ ເຈົ້າຊ້າບໍ່ຽມທ່າທີໄປ ຂ້ອຍປະຕິຍານຕົນໃນຄືນນັ້ນວ່າ ຈັ້ງໃດເສັຽ ກໍ່ຂໍໃຫ້ຮູ້ດຳຮູ້ແດງກັນ ອົດທົນມານີ້ ໄດ້ສາມປີແລ້ວ !

ຜູ້ຄົນໃນຄືນນັ້ນ ຜາກົດວ່າຫລວງຫລາຍຈົນສະຖານທີ່ເຮັດບຸນຄັບແຄບ ເວທີເຕັ້ນລຳບໍ່ເປັນເວທີ ຄົນແຫຍ້ກັນຢືນລຳ–ຟ້ອນຢ່າງບໍ່ເປັນຣະບຽບ ເຮື່ອງມາຫລິ້ນມາມ່ອນນີ້ ເບິ່ງວ່າ ໃຜ ໆ ກໍສະອອນ ຂ້ອຍເອງມາ ບໍ່ແມ່ນມາເພື່ອຟ້ອນເພື່ອມ່ວນຄືລາງຄົນ ແຕ່ຂ້ອຍມາເລິກກວ່ານັ້ນ ຂ້ອຍມາເພື່ອພົບໝູ່ຄູ່ພໍໄດ້ສັງສັນປາສັຍ ຮູ້ວ່າ ໃຜເປັນໃຜ ເພື່ອຄວາມສາມັກຄີຮັກແພງຄົນລາວເຮົາ ແລະເພື່ອເຈົ້າ *ແມ່ນແລ້ວ ຂ້ອຍຍອມຮັບຢ່າງບໍ່ອາຍໃຈວ່າ ຂ້ອຍຢາກພໍ້ເຈົ້າ !!*

ຂ້ອຍພົ້ນອອກມານັ່ງຈຸ້ມຊຸມລົມກັນກັບໝູ່ຄົນະນຶ່ງຢູ່ທາງນອກ ຊຶ່ງມີແຂັ້ນມ້ານັ່ງເບີຍລົມ ເຖິງອາກາດຈະໝາວເຍັ້ນຈັກນ່ອຍ ພວກເຮົາກໍບໍ່ຮູ້ສຶກປານໃດ ບໍ່ເທິງ ເຈົ້າກໍຍ່າງຍິ້ມ ໆ ເຂົ້າມາຫາຄົນະພວກຂ້ອຍ ແລ້ວນັ່ງແປ໊ະລົງຕິດ ໆກັບຂ້ອຍ ແຕ່ຫັນໄປລົມຫັ້ນລົມພີ້ກັບໝູ່ຜູ້ສາວອື່ນ ໆ ໄດວ່ໜ້າໄດວ່ຕາ ສົນກັບເບີ້ນຜູ້ກວ້າງຂວາງໃນວົງນັກສຶກສາອີຫລີ ຂ້ອຍແຢງເບິ່ງອາກັປກິຣິຍາຂອງເຈົ້າ ຍ່າງອອນຊອນຈົມຈຶ່ມຕົກໃຈເມື່ອເຈົ້າຫັນໜ້າມາ ບອກຊຶ່ມຄ່ອຍ ໆ ວ່າ :

– ໄປພ້ອນນໍ້ ນິ ! ຂ້ອຍເກືອບລຸກໄປຢ່າງວ່າງ່າຍ ແຕ່ພໍຄິດເຫັນຄຳປະຕິຍານຫວ່າງຫົວຄ່ຳ ຂ້ອຍຈຶ່ງແກວ່ງຫົວປະຕິເສດ ແຕ່ຍິ້ມແຍ້ມໃຫ້ພ້ອມ ເຈົ້າງວາກໜ້າໜີກັບບາດແລ້ວຊວນເອົາເພື່ອນຍິງຜູ້ນຶ່ງໃນວົງໄປ ຂ້ອຍແນມນຳພວກເຈົ້າທັງສອງຈົນລັບແສງຕາ ສັງຫົວຢູ່ໃນເງົາມືດຢ່າງເພິ່ງພໍໃຈບຶດນຶ່ງ ເຊຣາຣ໌ ໝູ່ຝຣັ່ງຜູ້ຊາຍຂອງເຈົ້າ ທີ່ແນະນຳໃຫ້ຮູ້ຈັກຫວ່າງຫົວຄ່ຳມາຊວນໄປພ້ອນ ຂ້ອຍຈຶ່ງລຸກໄປທັນທີ ພ້ອນມ່ວນໄປຈັກເພງຂ້ອຍບໍ່ຮູ້ ຮູ້ແຕ່ວ່າ ເຊຣາຣ໌ ພ້ອນເກັ່ງແລະເວົ້າຕລົກ ເຮັດໃຫ້ຂ້ອຍຫົວໄດ້ຕລອດເວລາຈົນຮູ້ສຶກເມື່ອຍ

ທັງສອງຄົນ ຂ້ອຍຈຶ່ງຊວນລາວເຊົາ ກັບມານັ່ງບ່ອນ ຂ້ອຍແນມເຫັນແຕ່ໄກແລ້ວວ່າເຈົ້າມານັ່ງຂິງກ້ານຖ້າຢູ່ ຄົງຈະຮູ້ຈາກໝູ່ແລ້ວວ່າຂ້ອຍອອກມາພ້ອມກັບໃຜ ແຕ່ຍາມໃດ

ຂ້ອຍຂໍແຍກທາງກັບເຊຣາຣ໌ ກ່ອນຮອດບ່ອນນັ້ງແວ່ໄປທາງອື່ນໂດຍເຈຕນາທີ່ຈະຫລົບຫລີກເຈົ້າ ແຕ່ບໍ່ດົນເຈົ້າກໍນຳມາພໍ້ຂ້ອຍ ຈຶ່ງນັ້ງເຈົ່າມິດ ໆ ຢູ່ຂ້າງ ໆ ກອງປະຊຸມຂອງຄນະນຶ່ງອີກ

— ຄືຊິເມື່ອຍເນາະ ກິນນ້ຳຊ໊ະ ! ເຈົ້າເດ່ຈອກນ້ຳຫວານສີເຫລືອງມາໃຫ້

— ຂອບໃຈ ! ຂ້ອຍຮັບເອົາຈອກນ້ຳມາດື່ມ ໃນໃຈຄິດຢາກຫົວພໍແຮງ

— ປີໃດ ຊິຮຽນແລ້ວ ! ເຈົ້າຖາມສຽງຮ້າຍ ໆ

— ປີນີ້ ! ຂ້ອຍຕອບສັ້ນ ໆ ກ່ອນຊິຄິດອີກ

— ຫາ ! ເຈົ້າອຸທານຊົງບໍ່ເຊື່ອ

— ກະແທ້ຕວ່າ ! ຂ້ອຍຕອບປົນຫົວ ເມື່ອເຫັນທ່າທາງຕົກໝົກຕົກໃຈຂອງເຈົ້າ

— ຄືຫາກໍ່ມາ !

– ຫາກໍ່ມາຫຍັງ ສາມປີແລ້ວເດ້ ກະພໍ້ກັບເຈົ້າຢູ່ພີ້ສູ່ປີ ສາມປີກະສາມເທື່ອ ! ຂ້ອຍເນັ້ນຄຳວ່າ "ສາມ" ເລື້ອຍ ໆ ເພື່ອໃຫ້ເຈົ້າຄິດເຫັນວ່າ "ສາມປີ" ມັນພຽງພໍສຳລັບການອົດທົນຂອງຂ້ອຍ ແລະພໍສຽງສຳລັບທີ່ເຈົ້າຈະຕັດສິນໃຈແນວໃດແນວນຶ່ງ !

– ອິ່ຫລີ້ມ ຂ້ອຍໂລດຮູ້ສຶກວ່າ ຫາກໍ່ເຫັນເຈົ້າວ່າງໄວ ໆ ນີ້ ບາດໃດລະແມ່ນແຕ່ປີກາຍປີກ່ອນພຸ້ນ ! ເຮີ້-ເວລາພີ້ຜ່ານໄປໄວແທ້ ໆ !" ແຕ່ສີໜ້າເບີກບານສຳຣານຂອງເຈົ້າມັນຂັດແກ່ນຕາຂ້ອຍພໍແຮງ ! ຂ້ອຍຊິຕ້ອງພະຍາຍາມໃຫ້ເຫັນດຳເຫັນແດງ

– ອ້າຍເດ້ຊັ້ມ ປານໃດຊິແລ້ວ? ບໍ່ຄິດຮອດບ້ານແດ່ຫວະ ?

– ຣິ ອ້າຍກະໃກ້ແລ້ວ ຍາມບຸນພໍ້ໝູ່ຄູ່ຫລາຍຄົນຈັ້ງຊີ້ ກະບໍ່ຄິດຮອດພໍ່ທີ່ໃດ ແຕ່ຍາມຢູ່ຜູ້ດຽວນີ້ຕີ້ພໍແລ້ວຢູ່ເອີ້ ເຈົ້າຮຽນແລ້ວຊິເມືອໂລດຫວະ ? ຢູ່ຫລົ້ນປາຣີກ່ອນຈັກໜ່ອຍຕີ້ ມ່ອນໃດ໋ !

– ກະຕ້ອງເມືອໂລດລະຕີ້ ບໍ່ມີໃຜຢາກໃຫ້ຢູ່ເດ້ ປາຣີ

ກະດາຍ !

— ອ້າວ ຄັນມີຜູ້ຢາກໃຫ້ຢູ່ກະຊິຢູ່ບໍ່ລະ ?

— ກະແລ້ວແຕ່ວ່າແມ່ນໃຜແຫລ່ວ !

— ສົມມຸດວ່າ ແມ່ນອ້າຍເດ້ ຊິຢູ່ບໍ່ ? ເຈົ້າເວົ້າຫົວ ໆ ແບບເວົ້າຫລິ້ນ

— ຂ້ອຍກະຊິສົມມຸດວ່າ ຊິຢູ່ !" ຂ້ອຍຕອບປົນຫົວຄືກັນ

— ຄັນບໍ່ສົມມຸດເດ້ ? ເຈົ້າຖາມຕໍ່ ເຊົາຫົວເສັຽຊື່ ໆ

ຂ້ອຍບໍ່ຕອບເຈົ້າທັນໃດ ແຕ່ຫັນໄປຍິ້ມກັບຄວາມມິດຢ່າງພໍໃຈ ແລ້ວຫັນມາຕອບຄ່ອຍ ໆ ວ່າ

— ຈັກອ້າຍເວົ້າຫຍັງບຸ ບໍ່ເຊື່ອດອກ !

— ເຊື່ອລອງເບິ່ງຕີ້ ! ຂ້ອຍບໍ່ຕອບ ແຕ່ຮູ້ສຶກດື່ມອົກດື່ມໃຈໃນການໂຕ້ຄາຮົມກັບເຈົ້າ ໃນເວລານັ້ນເພງຈັງຫວະອອນຊອນດັງອ້ອຍອິ່ນກ່ອມຂັບຍາກາດໃຫ້ຫງ່ອມເຫງົາໄປນໍາ

— ພ້ອມນໍາອ້າຍຈັກເທື່ອນໍ້ ! ເຈົ້າກົ້ມລົງຊວນສຽງອ້ອນວອນ ຂ້ອຍພ້ອມອອນຊອນນໍາສໍານຽງດົນຕຣີ ແລະຄາຣົມປາກຂອງເຈົ້າ.... ໃຈຂອງຂ້ອຍມັນບົງການວ່າ "ໄປ"

ຂ້ອຍງຶກຫົວຢ່າງວ່າງ່າຍ  ບ່ອຍໃຫ້ເຈົ້າດຶງມືລຸກພາຍ່າງໄປສູ່ເວທີພ້ອມຄືຄົນລືມຄິງ

ເຈົ້າກອດຂ້ອຍໄວ້ໃນວົງແຂນພໍຫລົມ ໆ ໃນຕອນທຳອິດ  ແຕ່ເມື່ອພ້ອນໄປ ໆ ຂ້ອຍກໍຮູ້ສຶກວ່າອ້ອມແຂນເຈົ້າຮັດແໜ້ນຂຶ້ນກວ່າເກົ່າ ຮັດໃຫ້ເຂົ້າໄປຈົນຂ້ອຍໄດ້ຍິນສຽງຫັນໃຈຂອງເຈົ້າຢູ່ໃກ້ຄ່າຄືບມື !  ຂ້ອຍຟິດໂຕໜ້ອຍນຶ່ງ  ເພື່ອສະແດງໃຫ້ເຈົ້າຮູ້ວ່າ  ຂ້ອຍຍັງບໍ່ໄດ້ເຊືອບຫລັບໄປນຳບັນຍາກາດໂຣແມນຕິກນັ້ນ !

— ຢາກເຕັ້ນຢູ່ຈັ່ງຊີ້ຢູ່ໝົດຄືນນໍ້ !  ກົ້ມລົງບອກຈົນໜ້າຢາກຈຸກັນ

— ຮີ້ !  ຂ້ອຍຮ້ອງຄ່ອຍ ໆ ແລ້ວຢູ່ເອິກເຈົ້າໝົດແຮງ ແຕ່ນັ້ນປານວ່າຍົວະໃຫ້ເຈົ້າຮັດແຂນແໜ້ນເຂົ້າກວ່າເກົ່າອີກຂ້ອຍຈຶ່ງໄດ້ບ່ອຍໃຫ້ມັນເປັນໄປເຊັ່ນນັ້ນ  ຄິດທຸກສິ່ງທຸກຢ່າງເປັ້ນໝົກເປັ້ນໃຈ  ເພງໃນຈັງຫວະອອນຊອນດັງຕິດຕໍ່ກັນໄປເລື້ອຍ ໆ ພວກເຮົາມິດໄປທັງສອງ  ຕ່າງຄົນກໍຄົງບ່ອຍອາຣົມໃຫ້ລ່ອງລອຍໄປນຳຈັງຫວະເພງແລະຄິດນັ້ນຄິດນີ້ ໄປຕາມບັນຍາກາດ  ຂ້ອຍຮູ້ສຶກມ່ວນ  ສຸກໃຈ  ເພິງພໍໃຈນຳເຫດການທີ່

ເບັ່ນໃຈ ບາດນີ້ລະຈະໄດ້ຮູ້ຄວາມຈິງວ່າ ເຈົ້າມີຄວາມຮູ້ສຶກແນວໃດແທ້ ໆ ! ຕື່ນຍອບ ເມື່ອໄດ້ຍິນສຽງເຈົ້າຫົວຣື່ ໆ ໃນຮູຄໍຂອງເຈົ້າ ຣື່ ! ທັງເຈັບໃຈທັງຢາກອາຍ ແສຊວນເຈົ້າລົມໄປທາງໃໝ່ວ່າ

— ເຊຊາຣ໌ເຕັ້ນເກັ່ງໃດ່ນໍ້"

— ຈັ້ງວ່າເດີ້ ບໍ່ເຄີຍເຕັ້ນນຳໝໍຈັກເທື່ອ ! ເຈົ້າວ່າດຶນບໍ່ຍິ້ມບໍ່ຫົວ

— ໂອ້ຍ ! ຣຶ ອ້າຍອັນນີ້ !" ຂ້ອຍຮ້ອງຄ່ອຍ ໆ ທຳທ່າຈິຍິກເຈົ້າ ແຕ່...

— ຕໍ່ໄປນີ້ຫ້າມເຕັ້ນນຳຜູ້ອື່ນ !" ເຈົ້າເວົ້າໜ້າເສີຍ

— ເຣື່ອງອິຫຍັງຈິຫ້າມ ! ຂ້ອຍສ້ຕໍ່ເຣັດສຽງແຂງ

— ຫ້າມເພາະຫວງ !

— ບໍ່ເຊື່ອດອກວ່າຫວງນະ !

— ຫວງແທ້ຕວ່າ ຫວງຜູ້ຍິງລາວໄວ້ໃຫ້ຄົນລາວ"

ເຈົ້າຟ້າວເວົ້າຕໍ່ ຈຶ່ງເບິ່ງຕາຂ້ອຍຄືຢາກບອກອິຫຍັງ ໆ ຫລາຍໄປກວ່ານັ້ນ ແຕ່ແລ້ວເຈົ້າກໍ່ມິດໄປຊື່ ໆ

— ຍັງບໍ່ເຊື່ອອີກນັ້ນລະ !" ຂ້ອຍເວົ້າຕໍ່ ເຣັດເບັ້ນ

ດິນຫົວແຂງລອງເບິ່ງ

— ເອົາຫຍັງກໍບໍ່ເຊື່ອ ເຊື່ອລອງເບິ່ງມ່າ" ເຈົ້າເວົ້າສຽງຄືອ້ອນວອນ

— ນ້ອງບໍ່ເຊື່ອວ່າຜູ້ຊາຍລາວ (ນັກສຶກສາ) ຢູ່ໝີ້ຄິດຈັ່ງອ້າຍດອກ ຖ້າເພິ່ນຄິດຈັ່ງຊັ້ນແທ້ ໆ ເພິ່ນຄືຊິບໍ່ເອົາເມັຽຝຣັ່ງໄປໝົດດອກ ອ້າຍເອງກໍຄືກັ ນັ້ນລະ! ຈັກໜ້ອຍກໍຍ້ານແຕ່...."

— ແມ້! ເອົາໄປໂລເລແລ້ວ ນ້ອງສາວອ້າຍນີ້ ໃຜຊິໄປເອົາງ່າຍ ໆ ເມັຽຝຣັ່ງຫັ້ນ ຜູ້ສາວລາວງາມ ໆ ມີຢູ່ທັງດິນປານນີ້! ເຈົ້າເວົ້າຂັດກ່ອນທີ່ຂ້ອຍຊິເວົ້າສຸດ ແຕ່ຂ້ອຍບໍ່ຍອມເຊົາສາແລ້ວ

— ເອົາງ່າຍເອົາຍາກກໍເຫັນມາພໍແຮງແລ້ວແຫລະ ຜູ້ຍິງລາວຈັກດິນທີ່ຕ້ອງເຈັບຊ້ຳເສັຽໃຈເສັຽນ້ຳຕາໄປຍ້ອນພວກຍາອ້າຍນະ ຢ່າຫລິ້ນລະຄອນເກັ່ງໄປເລີຍ!

— ນັ້ນກໍເປັ່ນລາງດິນຊື່ ໆ ລອງເບິ່ງອ້າຍເຈົ້າຜູ້ນີ້ຕີ!" ເຈົ້າບອກຂ້ອຍຄືຈະເປັ່ນສັນຍາ

— ຂ້ອຍຊິລອງ! ຂ້ອຍງຶກຫົວຮັບແບບທ້າທາຍແມ່ນ

ແລ້ວຂ້ອຍຕັ້ງໃຈວ່າ ຂ້ອຍຈິຄອຍເບິ່ງເຈົ້າ ແລ້ວຂ້ອຍກໍຄອຍ ຄອຍຂ່າວ ເມື່ອຈາກກັນໃໝ່ ໆ ເຈົ້າໄດ້ຂໍບ່ອນຢູ່ຊຶ່ງຢູ່ແຂວງນອກ ໄກຈາກປາຣີຫລາຍຮ້ອຍກິໂລ

— ຖ້າໄດ້ກາຍໄປທາງນັ້ນ ຂໍແວ່ຢາມໄດ້ບໍ່ ?

— ຍິນດີຕ້ອນຮັບສເມີ ຢ້ານແຕ່ເພິ່ນບໍ່ແວ່ນັ້ນແລ້ວຫລາຍກວ່າ !" ຂ້ອຍເຍັຍເຈົ້າຄືນທັນທີ ແຕ່ປານນັ້ນກໍມິດ

ຂ້ອຍຄອຍຂ່າວຈາກອາທິດເປັນເດືອນ ຈາກເດືອນເປັນປີ ຣະດູພາອັນທາຣຸນຜ່ານໄປ ຣະດູໃບໄມ້ປົ່ງອັນສົດຊື່ນເຂົ້າມາແທນບ່ອນ ດອກໄມ້ໃບຫຍ້າປົ່ງຂຽວ ຫລຽວໄປທາງໃດກໍເປັນຕາສະອອນ ໝູ່ນົກນ້ອຍຖລາບິນອອກມາຜິງແດດແລະຊົມດອກໄມ້ຢ່າງມ່ວນຊື່ນໃຈ ຣະດູການທີ່ເຂົາຄອງຄອຍ ຍັງວຽນມາຮອດໃຫ້ຄວາມສົດຊື່ນ ສົມການຄອງຄອຍຕາມເວລານັດໝາຍ ແຕ່ຂ້ອຍລະ? ຂ້ອຍຈະຄອຍໄປອີກດົນປານໃດ ? ດອກໄມ້ທີ່ແຍ້ມບານຈາກຈູມຈໍ ຈົນຈະຫ່ຽວຕົກຈາກງ່າ ລົ່ນ ຈົນຕົກຈາກງ່າໄປແລ້ວກໍຍັງບໍ່ເຫັນຂ່າວຫຍັງຈາກເຈົ້າ ດອກໄມ້ແຫ້ວ ໆ ເຊິ່ງລົມຕົ້ນຣະດູໜັດເປົ່າປິວອອກມາຈາກງ່າ ລົ່ນລົງພື້ນດິນ ປ່ອຍໃຫ້ຍອດໄມ້ໃບ

ອ່ອນປົ່ງຂົ້ນແທນທີ່ ສີຂາວ ເຫລືອງ ເບັ່ນຕາສະອອນຂອງ ມອມມຫລາ ເຫືອດຫາຍໄປຈາກມຸ່ມໝຶກສາ ດີກັມກັບການ ດອງດອຍຂອງຂ້ອຍຕ້ອງເສື່ອມສູນສລາຍໂຕໄປນຳການເວລາ

ຈົນອັນເວລາໄດ້ໝູນວຽນມາເບັ່ນ ຍາມສລອງປີ ໃໝ່ລາວອີກ ຂ້ອຍໄດ້ຂ່າວຈາກໝູ່ຄູ່ໃນປາຣີວ່າໃຫ້ໄປຮ່ວມ ບຸນ ຂ້ອຍຂົ້ນມາຍ່າງຜູ່ລຳດັບຜູ່ນຶ່ງ ເພາະທາງຄນະກັມມະການ ບຸນໄດ້ຂໍໃຫ້ຂ້ອຍສະແດງການຟ້ອນນາຕສິນລາວຊຶ່ງຂ້ອຍກໍຮັບ ຄຳຢ່າງເຕັມໃຈ !

ພິທີບາສີເລີກແລ້ວ ການຟ້ອນຊຸດພິເສດຂອງ ຂ້ອຍສ້ຽງສຸດລົງດ້ວຍສຽງຕົບມືສນັ່ນຫວັ່ນໄຫວ ຈາກຜູ່ເບິ່ງ ແຕ່ຫົວໃຈຂອງຂ້ອຍຕີບຕັນ ດີຈະຫັນໃຈບໍ່ອອກ ມັນຄັບ ແຄ້ນແໜ້ນອັ່ງໄປໝົດ ເຈົ້າຢູ່ໃສ ? ແຈໃດ ? ຂ້ອຍລົງຈາກ ເວທີສະແດງປົບ ກໍໄປຂໍນ້ຳດື່ມຢູ່ບາຣ໌ແລະສອຍໂອກາດດື່ມ ເບັຽຍ້ອມໃຈໄປຫລາຍຈອກ ຈົນເບັ່ນສີມຶນ ໆ ມ່ວນ ໆ ຂົ້ນ

ເດີກໄປເທົ່າໃດ ຂ້ອຍບໍ່ສົນໃຈ ລືມເຈົ້າໄປຊົ່ວ ຂນະນຶ່ງ ເພາະຄືນນັ້ນຂ້ອຍເບັ່ນຄົນ "ພິເສດ" ໝູ່ຜູ່ຊາຍ ຮຸ່ນອ້າຍຫລາຍຄົນມາກ້ຽວມາວຽນເອົາອົກເອົາໃຈ ໃຜກໍຕຳ

ພາກຍໍໃຫ້ຂ້ອຍກິນຈົນໜ້າຍິ້ມແຍ້ມ ເປັນທີ່ມ່ວນຊື່ນກັບຄູ່ຄົນ ຂ້ອຍນັ່ງຢູ່ໃນຄນະນຶ່ງຊຶ່ງປະກອບດ້ວຍຊາຍຍິງຫລາຍຄູ່ ພວກເຮົາພ້ອມລຳ ສົນທະນາ ແລະກິນ ດື່ມໄປພ້ອມ ຂ້ອຍນັ່ງຫັນໜ້າໃສ່ປະຕູເຂົ້າຢ່າງບໍ່ເຈຕນາ ດັ່ງນັ້ນເມື່ອມີຄົນຜ່ານເຂົ້າຜ່ານອອກຂ້ອຍຈຶ່ງເຫັນໂດຍທັນທີ

ຂ້ອຍບໍ່ຈື່ດອກວ່າເວລານັ້ນເປັນເວລາຈັກໂມງ ຮູ້ສຶກແຕ່ວ່າ ໂລກໝຸນໄວຂຶ້ນຈົນຂ້ອຍຈະຫັນໃຈເອົາອາກາດບໍ່ທັນ ເມື່ອເຈົ້າຜາກົດໂຕ ຜ່ານປະຕູເຂົ້າມາ ຮຽງຂ້າງດ້ວຍດ້ວຍນາງຜິວງາມສຸບກະໂປ່ງຍາວສີຂຽວງາມສະດຸດຕາແລະຍິ່ງໄປກວ່ານັ້ນ ນາງພວມຖືພາ ! ເຈົ້າ ສະງ່າງາມຄືເດີມບໍ່ຜິດຜິດແຕ່ວ່າ ວົງແຂນຂອງເຈົ້າບໍ່ຫວ່າງເປົ່າຄືເກົ່າ ເຈົ້າໂອບບ່າໄລ່ນາງນັ້ນຍ່າງເຂົ້າມາຊ້າ ໆ ປານໂຕລະຄອນເອກຍ່າງອອກໂຮງເມື່ອສະແດງສຸດ

— ໂທ້ ອ້າຍພົນປານນີ້ຈຶ່ງພາມາດາມມາ ! ສຽງໃຜຜູ້ນຶ່ງໃນຄນະເວົ້າຂຶ້ນ

— ບໍ່ໄດ້ເບິ່ງພ້ອມຊຸດພິເສດຂອງອະຣຸນີຊ້ຳ" ຜູ້ນຶ່ງຕໍ່ຫົວ ໆ ຫລາຍ ໆ ຄົນງວາກໄປເບິ່ງ ຂ້ອຍເອງຢາກງວາກ

ໜ້າພີ່ຈາກພວກເຈົ້າທັງສອງ ຖ້າມີມັນຂັບໄລ່ ຂ້ອຍກະຊິເສກໄລ່ໃຫ້ທຸກຍ່າງສລາຍໄຕໄປໃນພັບຕາດຽວ ພວກເຈົ້າຍ່າງດິ່ງມາຫາຄນະຂ້ອຍ ຫລັງຈາກຢຸດຈົ້ງຢູ່ບຶດນຶ່ງ ! ຂ້ອຍຢາກລຸກໜີ ແຕ່ເຫລົ້າທີ່ຂ້ອຍດື່ມເຂົ້າໄປໄດ້ຊ່ອຍໃຫ້ຂ້ອຍເຂັ້ມແຂງກ້າຫານກວ່າທີ່ຂ້ອຍຄິດໄວ້ ມັນເຮັດໃຫ້ຂ້ອຍຍິ້ມຮັບຈັບມືກັບພວກເຈົ້າໄດ້ຍ່າງສຳບາຍ

— ອະຣຸນີ ນີ້ມາດາມອ້າຍ ຊານິນ ນີ້ນ້ອງສາວຜູ້ໜ້າຮັກຂອງຂ້ອຍ ! ເຈົ້າແນະນຳງ່າຍ ໆ ແຕ່ຄວາມເວົ້າຂອງເຈົ້າມັນບາດສຽດເຂົ້າໄປໃນຄວາມຮູ້ສຶກ ອັນເລິກແລບຂອງຂ້ອຍ

— ມື້ນີ້ອະຣຸນີພ້ອມງາມຂນາດໃດ໋ ອ້າຍພົມ” ໝູ່ຜູ້ຊາຍຜູ້ນຶ່ງບອກປານເພິ່ນຊິໄດ້ໜ້າຕື່ມ

— ຄືຊິງາມຫລາຍນໍ້ ເສັຽດາຍອ້າຍບໍ່ເຫັນເດ້....ເສັຽດາຍແທ້ ໆ” ເຈົ້າງວາກໜ້າມາບອກຂ້ອຍ ແສງຕາເສົ້າ ໆ ເຫງົາ ໆ ຂອງເຈົ້າຟາດມານຳ ຂ້ອຍຈົ້ງຕາເບິ່ງເຈົ້າຄືນຍ່າງແຄ້ນ ໆ ແຕ່ບໍ່ມີຄຳໃດລອດອອກມາ ຖ້າກະແສຈິດ ສົ່ງເຖິງກັນໄດ້ ເຈົ້າກໍຄົງໄດ້ຍິນຂ້ອຍວ່າ

– ບໍ່ເຊື່ອດອກອ້າຍພິມເອີ້ຍ ວ່າເຈົ້າເສັຽດາຍນະ ເຖິງເຈົ້າຈະເສັຽດາຍ ຄວາມເສັຽດາຍຂອງເຈົ້າມັນຄືຊິບໍ່ເທົ່າເຄິ່ງຂອງຄວາມເສັຽດາຍຂອງຂ້ອຍດອກ *ເຈົ້າຮູ້ບໍ່ວ່າຂ້ອຍເສັຽດາຍຫຍັງແດ່ ວັນເວລາທີ່ຜ່ານມາ ? ຄວາມຫວັງ ? ແລະໂຕເຈົ້າເອງ ? ຂ້ອຍເສັຽດາຍເຈົ້າ ທີ່ເຈົ້າກາຍເປັນຂອງຄົນຊຸເດອື່ນ ໃນທີ່ສຸດ ຂ້ອຍກໍ່ມີເຫດຜົນຕາມເຄີຍ ຂ້ອຍເຄີຍບອກແລ້ວວ່າ "ບໍ່ເຊື່ອ" ແຕ່ຂນາດບໍ່ເຊື່ອຂ້ອຍກໍ່ຍັງຊຸ້ໃຈຊຸ່ມື້ ຖ້າຂ້ອຍເຊື່ອເດ້ອ້າຍພິມຂ້ອຍຈະຊຸ້ໃສແດ່ ?* ■

ຢຸກຈລວດ

ຈິກກີ່ສອງນາງລົມກັນ

– ອີ່ຫ່ານິງ ເຫັນບໍ່ບັກຈິກໂກ່ສູງໂດ້ງໂຍ້ງຍ່າງໄປ ຫັ້ນ ແຕ່ກ່ອນມັ້ນກູມັກມັນຂນາດເລີຍ ມັກເອົາແທ້ເອົາວ່າ ມັກຈົນຫລົງລືມບໍ່ມີນຫູມີນຕາໃຫ້ວ່າຊັ້ນເທາະ !

– ນິງຫລົງມັກມັນຢູ່ດົນແທ້ຫວາ ?

– ຈັກວ່າດົນປານໃດກູກະບໍ່ຮູ້ ກະຂອງ ວ່າກູບໍ່ມີໂມງນໍ !

"ວຽນທຽນ"

# ໃຜບໍ່ລືມສັນຍາ ?

ໃຜກໍໄດ້ທີ່ບອກຄົນອື່ນວ່າ ຈະເຮັດອັນນັ້ນ ເຮັດອັນນີ້ ເຊັ່ນບອກວ່າ ອອກພັນສາແລ້ວຈະໄປສູ່ຂໍ ຫລືໄດ້ເປັນຜູ່ແທນແລ້ວຈະສລະເງິນເດືອນເຄິ່ງນຶ່ງ ໃຫ້ເປັນສາທາຣະນະ–ກຸສົນ ຫລືຫລັງວັນທີ ໒໑ ກຸມພາ ໑໙໖໑ ແລ້ວຈະບ່ໂຈມຕີກັນ ຫລືພາຍໃນທ່ນັ້ນເດືອນ ຈະກ່ສ້າງທາງໃນເທສບານເສັ້ນນັ້ນໃຫ້ສຳເຣັດ ຫລື....ແຕ່ແລ້ວ ບ່ປະຕິບັດຕາມ ໃຜຜູ່ນັ້ນກໍຄືຜູ່*ລືມສັນຍາ*

ພວກເຮົາທີ່ເປັນຜູ່ແຕ່ງເຣື່ອງສັ້ນໃນປຶ້ມຫົວນີ້ ຮູ້ສຶກຢູ່ວ່າກຳລັງຊິລືມສັນຍາ ຫລືເວົ້າໃຫ້ເປັນທາງການຂົ້ນກໍຄື

ເກືອບບໍ່ປະຕິບັດຕາມສັນຍາ.

ສັນຍາທີ່ກ່າວມານີ້ ກໍຄື ຕາມທີ່ໄດ້ໂຄສະນາມາເລື້ອຍ ໆ ແລ້ວວ່າ ຈະຮ່ວມກັນພິມປຶ້ມອອກມາສເນີຕໍ່ທ່ານຜູ້ອ່ານ ເພື່ອປະດັບສວນອັກສອນແຫ່ງແດນລານຊ້າງໃຫ້ງົດງາມສົດໃສ ແລະມີຈຳນວນຫລາຍຂຶ້ນເລື້ອຍ ໆ ໂດຍສະເພາະໜັງສືປະເພດນິຍາຍສັ້ນແລະຍາວ ເພາະເຮົາຍັງຂາດເຂີນປຶ້ມອ່ານຊນິດນີ້ຫລາຍ.

ກ່ອນຈະໂຮມເຣື່ອງໄດ້ ແລະພິມເປັນເຫລັ້ມອອກມາ ພວກເຮົາຕ່າງກໍ່ທ່ຽວທາບທາມກັນແລະກັນ ແລະກຳໜົດວ່າ ທຸກຄົນຈະຕ້ອງສົ່ງເຣື່ອງກ່ອນວັນທີ ໑໔ ກັນຍາ ຜູ້ເປັນກຳລັງສຳຄັນຫລືແມ່ໂຍ່ ໃນການຈັດໂຮມເຣື່ອງສັ້ນເທື່ອນີ້ກໍຄື “*ດວງຈຳປາ*” ຊຶ່ງທຸກຄົນຍົກໃຫ້ເປັນຜູ້ອາວຸໂສກວ່າໝູ່ ພໍເຖິງວັນກຳໜົດດັ່ງກ່າວ ປາກົດວ່າບໍ່ມີໃຜສົ່ງເຣື່ອງສັ້ນມາເລີຍ “*ດວງຈຳປາ*” ຈຶ່ງຂ້ຽວເຂັນທຸກຄົນ ໃຫ້ເລັ່ງມືເລັ່ງສມອງ ເພາະຍ້ານໜັງສືບໍ່ອອກທັນບຸນທາດຫລວງ ຄືດັ່ງປີແລ້ວ ໂຮມເຣື່ອງສັ້ນຊຸດ “ບໍ່ບານກໍຫອມ” ອອກມາຫວິດຫລັງບຸນທາດ–ຫລວງ ເລີຍມາທັນສລອງປີໃໝ່ສາກົນ ເກືອບກາຍເປັນ “ບໍ່ບານກໍເໝັນ”.

ກຳໜົດເສັ້ນຕາຍໃໝ່ຄື ມື້໐ ກັນຍາ!

ມີຜູ່ສົ່ງເຣື່ອງສັ້ນມາ ແຕ່ກໍຍັງບໍ່ຄົບ

ຂ້າພະເຈົ້າເປັນຜູ່ນຶ່ງທີ່ຍັງບໍ່ທັນໄດ້ສົ່ງ

"ແລງເອີ້ຍ ລືມແລ້ວຫວະສັນຍາ?" *ດວງຈຳ-ປາ* ວ່າ

"ຍັງບໍ່ລືມງ່າຍ" ຂ້າພະເຈົ້າຕອບເຮັດໜ້າຕາເສີຍ

"ໃສລະ ເຣື່ອງສັ້ນ ?"

"ຍັງບໍ່ທັນໄດ້ຂຽນ"

"ມັ້ນລະ ເຂົາວ່າລືມສັນຍາ ໑໔ ກັນຍາກໍກາຍແລ້ວ ບໍ່ແມ່ນພິມອອກຕ້ອນຮັບບຸນທາດຫລວງປີໜ້າໃດ໋" *ດວງຈຳປາ* ຫລິ້ນສຳນວນ

"ກະບໍ່ວ່າ....." ຂ້າພະເຈົ້າເຣີ່ມປໂຍກ ແບບຈະຕ້ອງມີໂຕງໂຕຍຕິດຕາມມາ "ເຣື່ອງສັນຍາຍັງບໍ່ລືມງ່າຍ ຫາກແຕ່ບໍ່ທັນໄດ້ປະຕິບັດສັນຍາຊື່ໆ"

*ປ. ຈຸລມຸນຕຣີ* ແລະ *ປາໄນ* ທີ່ຢູ່ໃກ້ໆ ຫົວຂວັນອີກໆ ເພາະທັງສອງນີ້ຂຽນຮຽບຮ້ອຍແລ້ວ ເປັນການຫົວທ້າທາຍ ສະແດງວ່າຜູ່ກ່ຽວທັງສອງບັນລຸເຖິງການ-ປະຕິບັດສັນຍາ ຊຶ່ງບໍ່ກ່ຽວກັບສັນຍາວັນທີ ໘໑ ກຸມພາ ແລະ

໑໔ ກັນຍາ ຊຶ່ງບຸກຄົນສອງກຸ່ມທີ່ເອີ້ນຕົວເອງວ່າ ຜູ້ນຳທາງການເມືອງ ໄດ້ເຊັນກັນຮຽບຮ້ອຍໄປແລ້ວ ແຕ່ພາກປະຕິບັດນັ້ນ ກຳລັງຖືກປະຊາຊົນເຝົ້າສັງເກດເບິ່ງຢູ່ໃນຂນະນີ້.

ພວກເຮົາທີ່ຮ່ວມເຮັດໜັງສືເຫລັ້ມນີ້ ພາກັນຂຽນເຣື່ອງແລະສົ່ງຮຽບຮ້ອຍທຸກຄົນເມື່ອວັນທີ ໑໐ ຕຸລາ ໃຜ ໆ ກໍດີໃຈເພາະໄດ້ປະຕິບັດສັນຍາ ແຕ່ກໍຍັງຮູ້ສຶກບໍ່ທັນຄົບຖ້ວນສົມບູນ ເພາະປຶ້ມຍັງບໍ່ທັນພິມອອກ.

ເວລາຜ່ານໄປໂດຍບໍ່ເປົ່າປໂຍດ

ແລ້ວໃນທີ່ສຸດປຶ້ມຫົວນີ້ກໍໄປໄລອອກມາ

ອອກມາແທ້ ໆ ບໍ່ຕົວະ

ຈື່ໄດ້ວ່າມີຜູ້ອ່ານຫລາຍ ໆ ຄົນ ສັນຍາວ່າຈະ–ສນັບສນຸນວົງການຂີດຂຽນລາວ ໃຫ້ກ້າວໜ້າຕໍ່ໄປເລື້ອຍ ໆ.

ລືມສັນຍາແລ້ວຫວະ?

*ແລງ ພູຜາເງິນ*

ສຳນັກງານ ນິຕຍະສານ *"ໄຜ່ຫນາມ"*

ເດືອນຕຸລາ ໑໙໗໓

ພິມທີ່ *ປາກປາສັກ* ການພິມ

9–11 ຖໜົນຟ້ຳງູ່ມ ວຽງຈັນ

(ທາງແຄມຂອງ)

☎ 2262

ພ. ສ. 2516 ຕຸລາ– 1/1,000

"ສາວນີ້ເປັນຫຍັງ ?"

"ຢ່າສຸໃຫ້ບອກເທາະ"

"ເປັນຫຍັງ ໂຣຄລຶກລັບຫວະ ?"

"ເອີ ລຶກລັບ ຢ່າໃຫ້ບອກເທາະ"

"ຊີຟີລີສ ?"

"ບໍ່ ເວົ້າບາບເຂົາ"

.... ໃນ *"ຍິ້ມສີເຫລືອງ"* ຂອງ
*ແລງ ພູຜາເງິນ*

■ ເມື່ອເຈົ້າຜ່າກົດໂຕຜ່ານປະຕູເຂົ້າມາ.... ຂ້ອຍຮູ້ສຶກວ່າ ໂລກພຸ່ມໄວອຶ້ນ ຈົນຂ້ອຍຈະຫັນໃຈເອົາອາກາດບໍ່ທັນ.... ເຈົ້າສງ່າງາມດີເດີມບໍ່ມີຜິດ ຜິດແຕ່ວ່າ.... ຂ້ອຍເຄີຍບອກແລ້ວວ່າ *"ບໍ່ເຊື່ອ"* ແຕ່ຂນາດບໍ່ເຊື່ອ ຂ້ອຍກໍຍັງຊ້ຳໃຈສ່ານີ້ ຖ້າຂ້ອຍເຊື່ອເດ້ອ້າຍມິມ ຂ້ອຍຈະຊ້ຳໃສແດ່ ?

*"ບໍ່ເຊື່ອ"* ຂອງ *ດອກເກດ*